ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ
**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4 -6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4 -6
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 7-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-10
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons  11-13 & Easter Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13 & Easter Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຄວາມຫວັງສຳລັບຜູ້ທີ່ໝົດຫວັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຊາມູເອນ 1-2:1

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 1:1-2:10

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງນຳຄວາມຫວັງ ແລະຄວາມຍິນດີ ໃນເວລາມີສະພາບການໝົດຄວາມຫວັງແລະຂາດຄວາມຍິນດີ

**ຄຳຖາມເພື່ອການສຳຣວດ:** ທ່ານຄວນຈະກະທຳຢ່າງໃດ ເພື່ອຈະໄດ້ຮັບຄວາມຫວັງທີ່ສົມບູນໃນອະນາຄົດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍໃຫ້ເຂົ້າໃຈວ່າ ພຣະເຈົ້າໄດ້ນຳຄວາມຫວັງມາສູ່ນາງຮັນນາ ແລະປະຊາຊົນອິສຣາເອນ ແລະແນະນຳແນວທາງສຳລັບຄວາມຫວັງຂອງພວກເຮົາໃນອະນາຄົດ.

## ຄຳນຳ

ທ່ານຄົນນຶ່ງໄດ້ກ່າວວ່າ : ໃນຂະນະທີ່ຂ້າພະເຈົ້າເປັນເດັກນ້ອຍ ແລະກໍໄດ້ໄປໂບດ ເຟີສບັບຕິສ ທີ່ເມືອງ ແອລໂດຣາໂດ ຣັຖເທັກຊັສ. ຂ້າພະເຈົ້າເຄີຍໄດ້ຟັງ ຄຣີໂອລາ ເລົ່າເຣື່ອງຂອງນາງຮັນນາຮ້ອງໄຫ້ ແລະອະທິຖານຮ້ອງຂໍລູກຈາກພຣະເຈົ້າ (ຄຣີໂອລາ ແມ່ນນັກແຕ້ມແລະຂຽນຂໍ້ພຣະຄັມພີໃສ່) ຄຣີໂອລາ ບອກວ່າພຣະເຈົ້າໄດ້ຕອບຄຳອະທິຖານຂອງນາງດ້ວຍການມອບລູກ ຊື່ວ່າ ຊາມູເອນໃຫ້ກັບລາວ.
ນາງໄດ້ມອບລູກຊາຍຂອງນາງໃຫ້ເປັນຜູ້ຮັບໃຊ້ພິເສດຂອງ ທ່ານເອລີ ຜູ້ຮັບໃຊ້ພຣະເຈົ້າ. ເມື່ອທວນຄືນໄປຂ້າພະເຈົ້າປະທັບໃຈຢູ່ສອງຢ່າງຄື: ຄຸນຄ່າຂອງລູກແລະພະລັງອະທິຖານ. ຕາມຄວາມເປັນຈິງແລ້ວຄອບຄົວທຸກໆຄອບຄົວຄວນຈະເປັນຢ່າງນັ້ນ ແຕ່ສິ່ງທີ່ຂ້າພະເຈົ້າຈື່ບໍ່ໄດ້ກໍແມ່ນ ນາງເປນິນນາ ພັລຍາຂອງ ເອນຄານາ. ຄຣີໂອລາບໍ່ໄດ້ກ່າວເຖິງການມີເມັຽຫລາຍຄົນ.

ເມື່ອພວກ ມໍມອນ ທີ່ສິດສອນກ່ຽວກັບການມີເມັຽຫລາຍຄົນ ແລະຍັງຖືວ່າເປັນການຖືກຕ້ອງ. ປະເທດອະເມຣິກາເປັນປະເທດທີ່ຕ້ອງຫ້າມໃນການມີເມັຽຫລາຍຄົນ ແຕ່ວ່າເມື່ອມາພິຈາຣະນາເບິ່ງແລ້ວກໍເຫັນວ່າບັນຫາຈະມີຫລາຍຢ່າງ ເພາະຈະຮັກຜູ້ນຶ່ງແລະຈະຊັງອີກຜູ້ນຶ່ງ. ເຫມືອນດັ່ງເຣື່ອງຂອງ ເອນຄານາ, ຮັນນາ, ປະນິນນາ, ແລະຊາມູເອນ.

### ຮູບພາບຂອງຄວາມເຈັບປວດ: ຖືກໃຈ ແຕ່ບໍ່ພໍໃຈ (1:1-8)

ເຣື່ອງລາວໄດ້ເກີດຂຶ້ນມາໃນສມັຍນຶ່ງ ຊຶ່ງເວລານັ້ນບໍ່ມີກະສັດຜູ້ວິນິດໃສ 21:25, "ໃນສມັຍນັ້ນບໍ່ມີກະສັດໃນອິສຣາເອນ ຕ່າງກໍກະທຳຕາມທີ່ຕົນເອງເຫັນຊອບ"

ໃນພຣະຄັມພີຕອນນີ້ (1:1-8) ພວກເຮົາຈະເຫັນວ່າ ເອນຄານາ ມີເມັຍສອງຄົນ. - ນາງຮັນນາ ເປັນຍິງທີ່ບໍ່ມີລູກແລະນາງປະນິນນາເປັນຜູ້ທີ່ມີລູກດົກ (1ຊາມູເອນ 1:2) ເມື່ອເມັຽບໍ່ມີລູກ, ຜົວທີ່ຕ້ອງການລູກຈຳເປັນຕ້ອງໄດ້ຊອກຫາເມັຽອີກຄົນນຶ່ງ. ນາງຮັນນາ ເປັນເມັຽຜູ້ທຳອິດ ຊຶ່ງຊື່ຂອງນາງໝາຍຄວາມວ່າ ພຣະຄຸນ, ພໍໃຈ, ມີສເນ່, ໜ້າສົນໃຈ.

ຄົນໃນສັງຄົມສມັຍເກົ່າ, ຖືວ່າ ຖ້າຜູ້ໃດມີລູກ ຜູ້ນັ້ນເປັນຜູ້ທີ່ມີຄຸນຄ່າ ເພາະຈະໄດ້ສືບຕະກຸນ. ສ່ວນທີ່ເພິ່ງພໍໃຈທີ່ສຸດນັ້ນ

ກໍຄືໄດ້ລູກກົກເປັນຊາຍ. ລູກຍິງກໍດີເຫມືອນກັນແຕ່ບໍ່ມີຄວາມກະຕືລືລົ້ນຫລາຍປານໃດ. ແຕ່ຖ້າຜູ້ໃດບໍ່ມີ ຜູ້ນັ້ນກໍເປັນຜູ້ທີ່ພຣະເຈົ້າລົງໂທດ. (ເລວີນິຕິ ບົດ 12)

ຍິ່ງໄປກວ່ານັ້ນ ເອນຄານາ ຊໍ້າເປັນຜູ້ທີ່ເຊື່ອພຣະເຈົ້າ, ພຣະຄັມພີກ່າວວ່າ ລາວໄດ້ໄປທີ່ເມືອງຊີໂລທຸກໆປີເພື່ອນະມັສການແລະນໍາເຄື່ອງໄປຖວາຍບູຊາແດ່ພຣະເຈົ້າ (1:3,21) ແລະພວກເຮົາກໍຍັງສາມາດສັນນິຖານໄດ້ວ່າເພິ່ນເປັນຄົນທີ່ມີຖານະດີສົມຄວນ. ໃນການຖວາຍເຄື່ອງບູຊານີ້ລະ, ພວກເຮົາໄດ້ເຫັນຄວາມບໍ່ກ້ຳເກິ່ງ ເກີດຂຶ້ນລະຫວ່າງເມັຽສອງຄົນ. (1:4) ເຖິງແມ່ນວ່ານາງຮັນນາຈະໄດ້ເປັນສອງເທົ່າກໍຕາມ ລູກຂອງນາງປະນິນນາຍັງມີຫລາຍກວ່ານັ້ນອີກແລະຄວາມເວົ້າສຽດສີກໍຍັງຕິດຕາມມາດ້ວຍ (1:6) ການເປັນມາດັ່ງນີ້ນັບວ່າຫລາຍປີພໍສົມຄວນທີ່ນາງອົດກັ້ນດ້ວຍຄວາມຂົມຂື່ນແລະຫມົດຄວາມຫວັງ. ນາງບໍ່ສາມາດຈະກິນອາຫານແລະອົດຕໍ່ໄປໄດ້, ເອນຄານາຜູ້ເປັນສາມີກໍພະຍາຍາມປອບໃຈຂອງລາວ ແຕ່ລາວກໍກ່າວໃນໃຈຂອງຕົວເອງວ່າ: ແມ່ນແລ້ວ ເຈົ້າມີລູກ, ແຕ່ຂ້ອຍບໍ່ມີຫຍັງ, ເຈົ້າເປັນຄົນທີ່ພຣະເຈົ້າອວຍພຣະພອນໃນສາຍຕາຂອງສັງຄົມ, ແຕ່ຂ້ອຍບໍ່ມີຫຍັງ, ເຈົ້າມີຄຸນຄ່າຣາຄາ, ແຕ່ຂ້ອຍບໍ່ມີຫຍັງ, ........

<u>ຄໍາອະທິຖານ ຂໍຮ້ອງ: ບໍ່ແມ່ນມຶນເມົາ, ພຽງແຕ່ຫມົດຫວັງ</u> (1:9-18)
ຍິງຫມັນ ເປັນຄົນທີ່ອ້າງວ້າງ ໂດດດ່ຽວ. ຄິດເບິ່ງໃນເວລາຜົວໄປທໍາງານ. ຄິດເບິ່ງໃນເວລາຢູ່ບ້ານຢູ່ເຮືອນ,ຄິດເບິ່ງໃນເວລາເຈັບເປັນ, ຄິດເບິ່ງໃນເວລາເຫັນຄົນອື່ນເຂົາ ມີລູກສືບຫນໍ່ແຫນແນວ, ຄິດເບິ່ງຄວາມເພິ່ງພໍໃຈເວລາລູກເຕີບໃຫຽ່ແລະເບິ່ງແຍງພໍ່ແມ່......

ນາງຮັນນາ ຮູ້ເຖິງສະພາບຄວາມເປັນຢູ່ຢ່າງນີ້ດີ ແລະລາວເອງກໍຮູ້ດີວ່າການທີ່ລາວເປັນຫມັນນີ້ ຄົງບໍ່ມີທາງຈະແກ້ໄຂໄດ້ ຄົງຈະຣະທົມຕອມຕົມຈົນເຖິງວັນຕາຍ. ລາວຮູ້ສຶກວ່າບໍ່ມີໃຜແລ້ວໃນໂລກນີ້ທີ່ຈະຊ່ວຍເຫລືອລາວໄດ້ ແລະຄວາມຫວັງກໍສູນສິ້ນແລ້ວ.

ເມື່ອນະມັສການແລະຖວາຍເຄື່ອງບູຊາແລ້ວຄອບຄົວທຸກຄົນມານັ່ງລວມກັນກິນເຂົ້າ. ສ່ວນນາງຮັນນາບໍ່ສາມາດຈະຮັປທານອາຫານຮ່ວມກັບທຸກຄົນໄດ້ ຈຶ່ງອອກໄປລີ້ຢູ່ຂ້າງເສົາໃກ້ງກັບ ເອລີ ແລະກໍຮ້ອງໄຫ້ຮໍ່າໄຮຕໍ່ພຣະເຈົ້າ (1:9) ດ້ວຍນໍ້າສຽງທີ່ຂາດໆເຂີນໆ ແຮງໆຄ່ອຍໆຕາມປະສາຄົນຫມົດຄວາມຫວັງ. ທ່ານຄິດວ່າເປັນເທື່ອທໍາອິດບໍ່ທີ່ນາງຮັນນາອະທິຖານຕໍ່ພຣະເຈົ້າຢ່າງນີ້? ຄົງບໍ່ແມ່ນດອກ. ລາວຄົງຈະເວົ້າຕໍ່ພຣະເຈົ້າຫລາຍເທື່ອແລ້ວ, ຈົນນັບບໍ່ຖ້ວນແລ້ວ. ແຕ່ເທື່ອນີ້ລາວໄດ້ເພີ້ມຄໍາສັນຍາຕໍ່ພຣະເຈົ້າ "ໂອພຣະເຈົ້າຜູ້ຊົງຣິດທານຸພາບ" ໃນພາສາໄທ ກ່າວວ່າ "ພຣະເຈົ້າຈອມໂຍທາ" ແລະຍັງໄດ້ລະບາຍຄວາມເຈັບປວດໃນຈິດໃຈ ແລະຄວາມປາຖນາຂອງນາງຕໍ່ພຣະເຈົ້າຜູ້ຊົງຣິດແລະຍັງສັນຍາວ່າຈະຖວາຍລູກຄືນໃຫ້ກັບພຣະເອົງ-ເປັນຜູ້ຮັບໃຊ້ພຣະອົງ ແລະມີດແຖຈະບໍ່ແຕະຕ້ອງຫົວຂອງເຂົາຈັກເທື່ອເລີຍ. (1:11)

ດັ່ງທີ່ເວົ້າຜ່ານມາ, ນາງຮັນນາອ້ອນວອນອະທິຖານ, ສຽງຄ່ອຍໆ ເຫມືອນກັບຈົ່ມພຶມພໍາ ບາງຄັ້ງກໍງຽບໄປ ບາງຄັ້ງກໍເຫນັງແຕ່ຮີມສົບ. ເມື່ອເອລີຫລຽວເຫັນເປັນດັ່ງນັ້ນກໍເຂົ້າໃຈວ່ານາງຮັນນາເມົາເຫລົ້າ (1ຊາມອ1:12-13). ແລະກໍໄດ້ກ່າວຂຶ້ນວ່າເຈົ້າຈະເມົາເຫລົ້າໄປອີກດົນປານໃດ ຈົ່ງເອົາເຫລົ້າອະງຸ່ນຂອງເຈົ້າຖິ້ມເສັຽ. (1:14) ຮັນນາກໍຕອບດ້ວຍຄວາມເຄົາຣົບແລະສັດຊື່ວ່າຂ້ານ້ອຍບໍ່ໄດ້ດື່ມເຫລົ້າ ແຕ່ຂ້ານ້ອຍລະບາຍຄວາມທຸກອົກທຸກໃຈຂອງຂ້ານ້ອຍຕໍ່ພຣະເຈົ້າ, ຢ່າຖືວ່າຂ້ານ້ອຍເປັນຍິງທີ່ຊົ່ວເລີຍ. ທ່ານເອລີຈຶ່ງຕອບວ່າຂໍຈົ່ງກັບໄປເປັນສຸກເຖີດ ຂໍໃຫ້ພຣະເຈົ້າແຫ່ງອິສຣາເອນປະທານຕາມທີ່ເຈົ້າຂໍເຖີດ. (1:17) ຫລັງຈາກນັ້ນ ນາງກໍກັບໄປຮັປທານອາຫານດ້ວຍຄວາມຊື່ນໃຈ. (1:18)

<u>ຄໍາສັນຍາທີ່ມີຄຸນຄ່າ: ດາບສອງຄົມ</u> (1:19-28)

ມື້ວັນຜ່ານໄປຢ່າງວ່ອງໄວ, ຄຳອະທິຖານຂອງນາງກໍໄດ້ຮັບຄຳຕອບ ຄືນາງໄດ້ຕັ້ງຄັນແລະກໍຄອດບຸດອອກມາເປັນຜູ້ຊາຍແລະໃຫ້ຊື່ວ່າ ຊາມູເອນ ເພາະວ່າຂ້ອຍໄດ້ຂໍລາວມາຈາກພຣະເຈົ້າ. (1:20)

ເວລາມາເຖິງອີກ, ເຖິງເວລາທີ່ຈະໄປເມືອງ ຊີໂລ ອີກ, ນາງຮັນນາໄດ້ຕັດສິນໃຈວ່າຈະບໍ່ຂຶ້ນໄປເພາະລູກຍັງນ້ອຍຢູ່ ຂໍເວລາໃຫ້ລູກປະນົມເສັຽກ່ອນ ນາງກ່າວແກ່ສາມີຂອງນາງ. (1:21-22) ຝ່າຍສາມີກໍບໍ່ຢາກຂັດໃຈຈຶ່ງບອກວ່າ ຈົ່ງກະທຳຕາມທີ່ເຈົ້າເຫັນດີເຖີດ ຂໍພຽງໃຫ້ພຣະຄຳຂອງພຣະເຈົ້າສຳເຣັດ. (1:23) ເອນຄານາຈະຮູ້ຫລືບໍ່ຮູ້ກໍຕາມວ່າລູກຊາຍຂອງເຂົາຈະເປັນຜູ້ນຳຄວາມຫວັງມາສູ່ຄອບຄົວແລະຄົນອິສຣາເອນທຸກຄົນ.

ນາງຮັນນາກໍລ້ຽງ ຊາມູເອນ ຈົນເຂົາຢ່ານົມ. ນາງຄົງຈະມີຄວາມພໍໃຈຫລາຍທີ່ໄດ້ລູກເປັນຜູ້ຊາຍ. ຄຳເວົ້າຖາກຖາງ ເຢາະເຢີ້ຍ ປມາດ ທີ່ເຄີຍມີຕໍ່ນາງກໍຄົງຈະໝົດໄປ. ນາງຄົງຈະຢອກໃຍ, ເວົ້າຈາ, ສິດສອນການປາກເວົ້າຈົນເຖິງອາຍຸສາມຂວບ. ເຖິງແມ່ນວ່າຈະຂັດໃຈປານໃດກໍຕາມທີ່ມີລູກຄົນດຽວແຕ່ຄຳສັນຍາທີ່ມີຕໍ່ພຣະເຈົ້າແມ່ນສຳຄັນຫລາຍກວ່າທຸກຢ່າງ. ໃນທີ່ສຸດຮັນນາກໍໄດ້ນຳລູກຂຶ້ນໄປຖວາຍໃຫ້ແກ່ພຣະເຈົ້າ. (1:24) ພ້ອມກັບເຄື່ອງຖວາຍອີກຫລາຍຢ່າງເຊັ່ນ: ງົວ ແປ້ງແລະເຫລົ້າອະງຸ່ນ.

ເມື່ອຖວາຍເຄື່ອງຂອງທັງໝົດແລ້ວ ນາງຮັນນາແລະເອນຄານາຜູ້ເປັນສາມີກໍໄດ້ພາກັນນຳຊາມູເອນໄປຫາເອລີ. ນາງຮັນນາໄດ້ທວນຄືນຄວາມຊົງຈຳຂອງທ່ານເອລີວ່າລາວເຄີຍໄດ້ອະທິຖານທູນຂໍລູກ (1:26) ແລະກໍໄດ້ແນະນຳຊາມູເອນວ່າເປັນພຣະພອນທີ່ພຣະເຈົ້າໄດ້ຕອບຄຳອະທິຖານຂອງນາງ ແລະເຂົາກໍຈະມອບໃຫ້ແກ່ພຣະເຈົ້າຄືນຕາມທີ່ໄດ້ສັນຍາໄວ້. ແລະພວກເຂົາກໍໄດ້ນະມັສການພຣະເຈົ້າຢູ່ທີ່ນັ້ນ.

<u>ຄຳສັຣເສີນ: ຄຳເວົ້າດ້ວຍຄວາມພາກພູມໃຈຂອງພໍ່ແມ່</u> (2:1-10)

ພວກເຮົາເຫັນໄດ້ຢ່າງຊັດເຈນແລ້ວວ່ານາງຮັນນາບໍ່ໄດສັຣເສີນພຣະເຈົ້າແຕ່ປາກ ເພື່ອສະແດງອອກມາໃຫ້ເຫັນ ລາວໄດ້ນຳເຄື່ອງຂອງຖວາຍທີ່ມີຣາຄາໄປນຳດ້ວຍ.

ໃນບົດເພັງທີ່ມ່ວນຊື່ນຂອງລາວ, ຮັນນາໄດ້ສັຣເສີນສະງ່າຣາສີພຣະເຈົ້າຊຶ່ງເປັນທີ່ມາຂອງຄວາມຍິນດີທຸກຢ່າງ. ຊຶ່ງເໝືອນນາງມາຣີອາທີ່ຖວາຍຄຳສັຣເສີນແດ່ພຣະເຈົ້າໃນ ລູກາ 1:46-55. ວັນນີ້ນາງຮັນນານະມັສການດ້ວຍຫົວໃຈອັນເຕັມປ່ຽມດ້ວຍຄວາມຍິນດີ. (1ຊມອ 2:1) ນາງກ່າວເຖິງຄວາມບໍຣິສຸດພະລັງອຳນາດແລະຣິດເດດທຸກຢ່າງແລະຍັງໄດ້ຍົກສູງພຣະເຈົ້າຜູ້ເປັນຫ່ວງເປັນໃຍຕໍ່ຊີວິດຂອງລາວ (2:2-9)

ບໍ່ແມ່ນແຕ່ທໍ່ນັ້ນ ລາວຍັງໄດ້ອະທິຖານວ່າສັດຕຣູຂອງລາວຈະຕ້ອງຝ່າຍແພ້ຢ່າງແນ່ນອນ ເພາະພຣະອົງຊົງສູ້ເພື່ອລາວແລະພຣະອົງກໍຈະຊົງພິພາກສາໂລກດ້ວຍ. (1:10)

<u>ຄຳຖາມ</u>

1. ພຣະເຈົ້າຊົງເລືອກ ບາງຄົນໃຫ້ໄປຮັບໃຊ້ວຽກງານພິເສດໃຫ້ກັບພຣະອົງ, ທັງໃນພຣະຄັມພີແລະ ໃນຊີວິດປະຈຳວັນແມ່ນບໍ່? ເປັນຫຍັງພຣະເຈົ້າຈຶ່ງຊົງເລືອກເອົາເຂົາ?

2. ເວລາທ່ານມີຄວາມທຸກຣະທົມ ທ່ານເຄີຍໃຫ້ຄຳສັນຍາອັນໃດແກ່ພຣະເຈົ້າຫລືບໍ່? ຖ້າເຄີຍ, ທ່ານໄດ້ຮັກສາຄຳສັນຍາຂອງທ່ານຫລືບໍ່? ແມ່ນຫຍັງແມ່ນສິ່ງທີ່ຂັດສົນ ທີ່ເຮັດໃຫ້ການຮັກສາຄຳສັນຍາຕໍ່ພຣະເຈົ້ານັ້ນຫຍຸ້ງຍາກ?

3. ທ່ານເຫັນຕົວຢ່າງໃນພຣະຄັມພີ ແລະໃນຊີວິດປະຈຳວັນບໍ່? ຕົວຢ່າງອັນໃດແດ່?

4. ເຮົາຈະເຮັດຢ່າງໃດ ເພື່ອການອະທິຖານຂອງເຮົາຈະມີປະສິດທິຜົນ?

5. ເຮົາຈະເວົ້າຢ່າງໃດຕໍ່ສະມາຊິກຂອງພວກເຮົາ, ຕໍ່ຜູ້ທີ່ຢາກມີລູກ ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 2
## ຕັ້ງໃຈຟັງແລະບອກກ່າວ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 1 ຊາມູເອນ 3:1-4:1

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** 1 ຊາມູເອນ 2:11-4:1

**ຈຸດສໍາຄັນຂອງບົດຮຽນນີ້:** ເພື່ອນໍາຄວາມຫວັງມາສູ່ ຜູ້ຮ້ອງຂໍທີ່ສິ້ນຫວັງ ເພື່ອຮັບຟັງ ແລະກ່າວດ້ວຍຖ້ອຍຄໍາອັນສັກສິດ.

**ຄໍາຖາມເພື່ອການສໍາຮວດ:** ເປັນຫຍັງຈຶ່ງພົບແຕ່ຄວາມຫຍຸ້ງຍາກ ໃນການທີ່ຈະກ່າວຄວາມຈິງຂອງພຣະເຈົ້າຢູ່ໃນໂລກນີ້ ບໍ່ວ່າຈະຢູ່ໃນສະພາບການແບບໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອສອນໃຫ້ເຮົາຮູ້ຟັງແລະຮູ້ເວົ້າພຣະຄໍາອັນແທ້ຈິງຂອງພຣະເຈົ້າ ແລະຮູ້ຈັກສເນີແນະວ່າຈະຂ້າມຜ່ານຂັ້ນຕອນໄດ້ຢ່າງໃດ?

### ຄໍານໍາ

ສມັຍທີ່ຂ້າພະເຈົ້າເປັນນັກຮຽນ, ຮຽນຖ່າຍຮູບ, ເວລາລ້າງຮູບແລ້ວຈະເລືອກເອົາຮູບແຜ່ນນຶ່ງທີ່ເຮົາມັກທີ່ສຸດໄປຕິດຢູ່ຕໍ່ຫນ້າຫ້ອງຮຽນ ແລ້ວກໍອະທິບາຍຮູບພາບນັ້ນ. ຂ້າພະເຈົ້າກໍໄດ້ເລືອກເອົາແຜ່ນນຶ່ງ ທີ່ຂ້າພະເຈົ້າຄິດວ່າອາຈານຄົງຈະບໍ່ມີບ່ອນຕິໄດ້, ດ້ານການວາງສັດສ່ວນຂອງພາບ, ທາງດ້ານສີສັນ, ທາງດ້ານຈະແຈ້ງ, ທາງດ້ານຄວາມຫມາຍ, ແລະທາງເຂົ້າກັບສະພາບການ.

ເມື່ອການອະທິບາຍຮູບຜ່ານໄປທຸກຄົນແລ້ວ, ທຸກຄົນກໍລໍຟັງການຕິຊົມແລະຄະແນນຈາກອາຈານ. ເມື່ອມາເຖິງທີຂອງຂ້າພະເຈົ້າ ທຸກສິ່ງຢ່າງກໍເຫັນວ່າໄດ້ດີ ແຕ່ຄຣູບອກວ່າ ຍັງຂາດຄວາມແຕກຕ່າງຣະຫວ່າງຂາວກັບດໍາຕ້ອງໃຫ້ເຂັ້ມແທ້ໆ, ຕ້ອງເບິ່ງໃຫ້ເຫັນຢ່າງຊັດເຈນ.

ຜູ້ຂຽນພຣະທັມ 1ຊາມູເອນ ຮູ້ຈັກດີໃນຄວາມຜິດແຜກແຕກຕ່າງນີ້ດີ. ລາວຮູ້ຄວາມແຕກຕ່າງຣະຫວ່າງຄວາມອ່ອນແອແລະຄວາມບໍຣິສຸດ. ດັ່ງພວກເຮົາຈະເຫັນໃນຊີວິດຂອງເດັກຫນຸ່ມຊາມູເອນຕອນເວລາຈະເຣີ່ມເຕີບໂຕ, ການຮຽກເອີ້ນ ແລະການຟັງຂໍ້ຄວາມ.

**ຄວາມແຕກຕ່າງຢ່າງຈະແຈ້ງ** (2:11-16)

ຊາມູເອນອາຍຸປະມານສາມປີ ຫາກໍ່ເຊົານົມໃຫມ່ໆ, ຮັນນາແລະເອນຄານາກໍໄດ້ນໍາລາວໄປເມືອງຊີໂລຊຶ່ງແມ່ນການນະມັສການແລະການເຜົາຖວາຍເຄື່ອງບູຊາປະຈໍາປີຂອງຄອບຄົວ. ຮູ້ກັນມາແລ້ວວ່ານາງຮັນນາໄດ້ໃຫ້ຄໍາຫມັ້ນສັນຍາຕໍ່ພຣະເຈົ້າໃນເວລາລາວຂໍລູກ. ລາວແລະຜົວຂອງລາວກໍໄດ້ມອບລູກໃຫ້ແກ່ພຣະເຈົ້າຄືນ (1ຊມອ 1:28).ໃນເວລາກັບໄປເຖິງບ້ານຊື່ຣາມາ ຊາມູເອນກໍຢູ່ນໍາເອລີ ຜູ້ເປັນປະໂລຫິດ ແລະກໍຮັບໃຊ້ວຽກງານໃຫ້ກັບພຣະເຈົ້າຊຶ່ງຢູ່ໃຕ້ການນໍາ ພາຂອງເອລີ.(1ຊມອ 2:11) ບັດນີ້ ໃຫ້ມາເບິ່ງນໍາກັນວ່າ ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງເດັກຫນຸ່ມຊາມູເອນ ແລະລູກແທ້ຂອງເອລີ!!!! ໂຮຟນີ ແລະ ຟີເນຮັສ ທັງສອງເປັນລູກແທ້ຂອງເອລີ ພວກເຂົາທັງສອງບໍ່ນັບຖືພຣະເຈົ້າ ແລະຍັງບໍ່ນັບຖືພໍ່ຂອງຕົນເອງອີກ. ກົດຫມາຍຂອງໂມເຊກ່າວໄດ້ກ່າວເຖິງ ຣະບຽບຂອງການຖວາຍສັດແກ່ພຣະ

ເຈົ້າໄວ້ຢ່າງໃດ. (ເລວີນິຕິ ບົດ1 ຫາ ບົດທີ 7) ຊຶ່ງມີການຖວາຍແຕກຕ່າງກັນ. ຕາມທົ່ວໄປແລ້ວ ສັດທີ່ຖວາຍແດ່ພຣະເຈົ້າ, ປະໂລຫິດກໍມີສ່ວນຮ່ວມ ໃນການໄດ້ຮັບ ແລະສ່ວນທີ່ເຫລືອກໍແມ່ນສົ່ງຄືນໃຫ້ຄອບຄົວ. (ເລວີນິຕິ 3:1-17) ສຳລັບທີ່ເມືອງຊີໂລ, ຜູ້ຮັບໃຊ້ຈະ ໃຊ້ສາມງ່າມໃຫຍ່ສຽບລົງໄປໃນຫມໍ້ຕົ້ມ ເຖິງ 3 ຄັ້ງ ຖ້າຫາກສາມງ່ານັ້ນສຽບຖືກອັນໃດ ສິ່ງນັ້ນຈະເປັນຂອງປະໂລຫິດ. ສຳລັບລູກຊາຍຂອງເອລີແລ້ວ ຖ້າຫາກຖືກສ່ວນໃດທີ່ພວກເຂົາບໍ່ມັກພວກເຂົາກໍຈະສຽບເອົາໃຫມ່ຈົນຖືກສ່ວນທີ່ເຂົາຕ້ອງການ. (1ຊມອ 2:13-17) ການກະທຳດັ່ງນັ້ນສະແດງເຖິງການເຫັນແກ່ຕົວ ແລະເປັນການບໍ່ສັດຊື່ຕໍ່ພຣະເຈົ້າ ແລະບໍ່ສັດຊື່ຕໍ່ປະຊາຊົນ.
ກົງກັນຂ້າມ, ຊາມູເອນຊ້ຳພັດຄາດແອວດ້ວຍຜ້າປ່ານ ເອໂຟດ ຊຶ່ງມານດາຫຍິບມາສົ່ງໃຫ້ແຕ່ລະປີ.(2:18)ຊຶ່ງເຫມືອນດັ່ງທີ່ໄດ້ບັລຍາຍໄວ້ທີ່ ພຣະທັມ ອົພຍົບ 28:31-32. ນາງຮັນນາໄດ້ອ້ອນວອນອະທິຖານເພື່ອລູກເປັນປະຈຳ. ເອລີ ກໍໄດ້ອວຍພອນແກ່ນາງຮັນນາ ແລະ ເຂົາກໍມີລູກ ອີກເຖິງ 5 ຄົນ (ຊາຍສາມແລະຍິງສອງ)ຢ່າງໃດກໍຕາມ ຊາມູເອນຈະເຣີນໄວຂຶ້ນດ້ວຍພຣະຄຸນພຣະເຈົ້າ. (2:21)

ສ່ວນເອລີກໍຮູ້ຈະແຈ້ງ ແລະເຕັມຢູ່ໃນຫົວໃຈ ເຖິງຄວາມຊົ່ວຊ້າຂອງລູກຂອງຕົນເອງ, ລາວໄດ້ຕັກເຕືອນພວກເຂົາຫລາຍຄັ້ງ ແຕ່ພວກເຂົາກໍບໍ່ຍອມຟັງ. (2:22-25) ການປມາດການນະມັສການພຣະເຈົ້ານີ້ ບັນພະບຸຣຸດຂອງພຣະເຈົ້າກໍໄດ້ມາຢ້ຽມເອລີ ແລະກ່າວຫລາຍຢ່າງ. (2:27-36)

## <u>ຄຳຮຽກເອີ້ນທີ່ຈະແຈ້ງ</u> (3:1-14)

ເມື່ອເວລາຢູ່ໃນສູນອົພຍົບປະເທດໄທ, ຂ້າພະເຈົ້າໄດ້ຮັບເອົາພຣະເຢຊູມາເປັນພຣະຜູ້ຊ່ວຍໃຫ້ຣອດ ແລະກໍໄດ້ຕິດຕາມແລະຮັບໃຊ້ມາຕລອດ. ຈົນມາເຖິງສູນລໍຖ້າທີ່ ຟີລິບປິນ ຂ້າພະເຈົ້າກໍໄດ້ຊ່ວຍ ມິດຊັນແນຣີ. ຂ້າພະເຈົ້າຢາກເປັນຜູ້ປະກາດພຣະທັມຂອງພຣະເຈົ້າ ແຕ່ຂ້າພະເຈົ້າຢາກໄດ້ຍິນສຽງຮຽກເອີ້ນ ອັນຈະແຈ້ງ. ເມື່ອມາເຖິງປະເທດອະເມຣິກາຂ້າພະເຈົ້າຈຶ່ງຮູ້ຢ່າງຈະແຈ້ງວ່າ ຕອນທີ່ຍັງຢູ່ສູນອົພຍົບ ພຣະເຈົ້າໄດ້ຊົງຈັດຕຽມຂ້າພະເຈົ້າໄວ້ສຳລັບການປ່າວປະກາດນີ້.

ໃນສມັຍຂອງຊາມູເອນມີຫລາຍຄົນທີ່ຖືກຮຽກເອີ້ນແບບນີ້ ແຕ່ໃນສມັຍນີ້ແມ່ນມີຫນ້ອຍທີ່ສຸດ. ຄົງຈະບໍ່ແມ່ນເປັນເພາະພຣະເຈົ້າຊົງຫລົງລືມ ແຕ່ຄົງຈະເປັນເພາະວ່າ ພວກເຮົາບໍ່ພ້ອມໃນການນີ້. ອັນນຶ່ງ, ຄວາມແຕກຕ່າງຣະຫວ່າງ ເອລີແລະຊາມູເອນ ພວກເຮົາຈະເຫັນໄດ້ອີກວ່າ ເອລີມີສາຍຕາທີ່ບໍ່ເຫັນດີ ແຕ່ຊາມູເອນຍິ່ງນັບມື້ນັບມີສາຍຕາທີ່ຈະແຈ້ງອອກທຸກວັນ. ວັນນຶ່ງເອລີກໍນອນຢູ່ທີ່ຕຽງຂອງລາວ ແລະຊາມູເອນກໍນອນຢູ່ທີ່ຫ້ອງຂອງພຣະເຈົ້າ ຊຶ່ງເວລານັ້ນຕະກຽງກໍຍັງບໍ່ທັນມອດເທື່ອ.(3:2-3)ວັນນັ້ນພຣະເຈົ້າໄດ້ຮຽກເອີ້ນເອົາຊາມູເອນ. ເດັກນ້ອຍ ອາຍຸ 12 ປີທີ່ມີຄວາມເຊື່ອຟັງ ແລະຕອບສນອງການຮຽກເອີ້ນຢ່າງວ່ອງໄວ. ຄັ້ງທີນຶ່ງລາວຕອບວ່າ "ຂ້ານ້ອຍຢູ່ທີ່ນີ້" ແລ້ວລາວກໍຟ້າວໄປ ຫາເອລີ. (1ຊມອ 3:4) ຄັ້ງທີສອງ ລາວກໍຕອບອີກວ່າ "ຂ້ານ້ອຍຢູ່ທີ່ນີ້" ແລ້ວກໍຟ້າວໄປຫາເອລີອີກ. ຝ່າຍເອລີໄດ້ຕອບວ່າ "ເຮົາບໍ່ໄດ້ເອີ້ນເຈົ້າ" ຝ່າຍ ຊາມູເອນຜູ້ທີ່ບໍ່ເຄີຍມີປະສົບການໃນການຮຽກເອີ້ນ. ຊາມູເອນອາດຈະບໍ່ຄຸ້ນກັບສຽງຮຽກເອີ້ນນັ້ນ (3:7)ແລະການຍັງເປັນເດັກນ້ອຍຂອງລາວ ຈຶ່ງເຮັດໃຫ້ລາວບໍ່ເຂົ້າໃຈໃນສຽງນັ້ນ. ພຣະເຈົ້າບໍ່ໄດ້ເອີ້ນລາວມາຢູ່ວິຫານນຳເອລີ ແມ່ນແມ່ຂອງລາວເປັນຜູ້ນຳມາມອບໃຫ້. ເມື່ອພຣະເຈົ້າເອີ້ນຊາມູເອນຄັ້ງທີສາມ ລາວກໍຍັງໄປຫາເອລີອີກ. ໃນຄັ້ງນີ້ເອລີກ່າວແກ່ຊາມູເອນວ່າ ຖ້າພຣະອົງຫາກຍັງເອີ້ນຢູ່ກໍຂໍໃຫ້ເຈົ້າຕອບວ່າ "ພຣະເຈົ້າຂອງຂ້ານ້ອຍ ຂໍພຣະອົງຊົງສັ່ງເຖີດ ເພາະຜູ້ຮັບໃຊ້ຂອງພຣະອົງຄອຍຮັບຟັງຢູ່." (3:9) ຂໍ້ທີ 10 ພຣະເຈົ້າຊົງສະເດັດມາປະທັບຢືນຢູ່ ແລະເອີ້ນວ່າ "ຊາມູເອນເອີຍ, ຊາມູເອນເອີຍ" ຊາມູເອນກໍຕອບເຫມືອນດັ່ງເອລີບອກໄວ້. (3:10) ໃນນີ້ອາດຈະມີຄອບຄົວຂອງເອລີມາຈອບຟັງຢູ່ກໍອາດເປັນໄດ້. ພຣະເຈົ້າປະສົງ ຢາກໃຫ້ພວກເຂົາໄດ້ຍິນດ້ວຍ ເພື່ອພວກເຂົາຈະໄດ້ສຳນຶກຕົວ. (3:11-14)

ມາອາດພາບນຳກັນເບິ່ງວ່າ ເວລາຊາມູເອນໄດ້ຮັບຄຳຂອງພຣະເຈົ້າແລ້ວ ການກັບໄປນອນຂອງລາວເບິ່ງຄືວ່າບໍ່ຄັກບໍ່ແນ່, ລາວຄົງຄິດເຖິງຄຳສັ່ງ, ລາວຄົງຖາມຕົວເອງດ້ວຍຫລາຍຄຳຖາມ, ລາວຄົງຈະພິກໄປປິ້ນມາ,ລາວຄົງຄິດເຖິງຄອບຄົວຂອງເອລີ.......... ຢ່າງໃດກໍຕາມ ລາວຖືກຮຽກເອີ້ນ ລາວມີຄວາມຈຳເປັນທີ່ຈະຮັບຜິດຊອບຕໍ່ພຣະເຈົ້າ.

**<u>ຄຳສັ່ງທີ່ຈະແຈ້ງ</u>** (3:15-18)

ຊາຍໜຸ່ມຊາມູເອນ ເມື່ອແຈ້ງຕາອອກມາແລ້ວ ກໍໄປທຳງານເໝືອນປົກຕິ ຄືເປີດປະຕູພຣະວິຫານ ແລະຍັງກະວົນກະວາຍໃນຄຳສັ່ງນັ້ນ ເພາະຕົວເອງເປັນຜູ້ນ້ອຍທີ່ຈະໄປກ່າວນິມິດນັ້ນໃຫ້ຜູ້ທີ່ຕົນອາສັຍຢູ່ນຳ ແລະ ເປັນຜູ້ມີບຸນຄຸນແກ່ຕົນ. (3:15) ເອລີກໍເອີ້ນຊາມູເອນມາແລ້ວຖາມວ່າ ພຣະເຈົ້າຊົງກ່າວແກ່ເຈົ້າຢ່າງໃດແດ່? ຢ່າປິດບັງເດີ້ ຖ້າຫາກວ່າເຈົ້າຝືນປິດບັງຂ້ອຍ ພຣະເຈົ້າຈະຊົງລົງໂທດເຈົ້າ. ຖາມະເປັນເດັກ, ຖ້າຜູ້ໃຫຍ່ກ່າວດັ່ງນັ້ນກໍຢ້ານ ແລະ ກໍໄດ້ບອກຄຳສັ່ງນັ້ນທັງໝົດ ແລະຈະແຈ້ງ. (3:17) ເອລີກໍນິ້ງຟັງ ດ້ວຍຄວາມຮັບຜິດຊອບແລະ ກ່າວຄ່ອຍໆອອກມາພໍມີ້ມຮີມສົບວ່າ ພຣະອົງຊົງເປັນພຣະເຈົ້າ ຂໍພຣະອົງຊົງກະທຳຕາມນ້ຳພຣະທັຍຂອງພຣະອົງເຖີດ. (3:18) ເອລີ ຮູ້ຄວາມຜິດຂອງຕົນເອງ ແລະເຂົ້າໃຈໃນການກະທຳຂອງພຣະເຈົ້າໄດ້ດີ. ລາວຍອມທຸກຢ່າງ ເໝືອນດັ່ງໂຢບໄດ້ຍອມຕໍ່ພຣະເຈົ້າ." ແລ້ວຂ້ານ້ອຍຈະຕອບພຣະອົງໄດ້ຢ່າງໃດ ຈະເລືອກເອົາຄຳເວົ້າຢ່າງໃດມາໂຕ້ຕອບພຣະອົງ." (ໂຢບ 9:14)

**<u>ການຮັກສາ ຄວບຄຸມຢ່າງຈະແຈ້ງ</u>** (3:19-4:1)

ເຣື່ອງການຮັກສາຄວບຄຸມນັ້ນ ພວກເຮົາຂໍຍົກໃຫ້ແກ່ ຊາມູເອນ, ລາວເປັນເດັກດີ, ລາວເປັນເດັກທີ່ຮູ້ບຸນຄຸນ, ແລະລາວຍັງເປັນເດັກທີ່ເຊື່ອຟັງແລະນັບຖືພຣະເຈົ້າ, ຊຶ່ງການບັລຍາຍລະອຽດແມ່ນຢູ່ໃນ 3:1-18. ພຣະເຈົ້າຊົງສະຖິດຢູ່ກັບ ຊາມູເອນທຸກເວລາ. (3:19) ແລະຖ້ອຍຄຳຂອງຊາມູເອນ ກໍມາເຖິງຄົນອິສຣາເອນທຸກຄົນ.

**<u>ຄຳສອນທີ່ມາເຖິງພວກເຮົາ:</u>**

ທຸກວັນນີ້ ພວກເຮົາ ຟັງແລະກ່າວຄວາມຈິງຂອງພຣະເຈົ້າຢ່າງຈະແຈ້ງຫລືບໍ່ ? ຫລືວ່າ ພວກເຮົາຫາກຫາວິທີທີ່ສະບາຍສຳລັບຕົວເອງເທົ່ານັ້ນບໍ່? ພວກເຮົາສັດຊື່ຕໍ່ພຣະຄຳຂອງພຣະເຈົ້າບໍ່? ຫລືພວກເຮົາກ່າວຄຳສອນເພື່ອໃຫ້ຖືກໃຈມະນຸດແດ່ ພຣະເຈົ້າແດ່ຊັ້ນບໍ່? ພວກເຮົາໄດ້ເຫັນແລ້ວບໍ່ ວ່າຄວາມອ່ອນແອ ແລະຄວາມບໍຣິສຸດມີຄວາມແຕກຕ່າງກັນ? ພວກເຮົາໄດ້ຟັງພຣະຄຳຂອງພຣະເຈົ້າຈະແຈ້ງແລ້ວບໍ່? ພວກເຮົາ ຍອມໃຫ້ພຣະຄຳຂອງພຣະເຈົ້າມາຄວບຄຸມຢູ່ໃນຊີວິດຂອງເຮົາແລ້ວບໍ່? ຖ້າບໍ່? ທ່ານລໍຖ້າຫຍັງ?

**<u>ຄຳຖາມ</u>**

1. ແມ່ນຫຍັງເປັນສິ່ງທີ່ກີດກັ້ນທ່ານບໍ່ໃຫ້ຟັງພຣະຄຳຂອງພຣະເຈົ້າ? ສມັບຊາມູເອນ ແລະ ປັດຈຸບັນ

2. ພວກເຮົາຈະນຳຄວາມຫວັງ ມາສູ່ຜູ້ທີ່ໝົດຫວັງຢ່າງໃດ ເມື່ອໄດ້ຟັງພຣະຄຳແລະໄດ້ກ່າວພຣະທັມອັນມີອຳນາດຂອງພຣະເຈົ້າແລ້ວ?

3. ລູກຂອງເອລີສອງຄົນມີຄວາມຜິດບາບຫຍັງແດ່? ເມື່ອຮູ້ສຶກວ່າມີບາບແລ້ວເຮົາຄວນເຮັດຢ່າງໃດ?

4. ເປັນຫຍັງພວກເຮົາຈຶ່ງຊັກຊ້າໃນການກ່າວພຣະຄຳຂອງພຣະເຈົ້າ?

5. ເອລີເຮັດຢ່າງໃດ ເພື່ອຫລີກຈາກກາຍລົງໂທດຂອງພຣະເຈົ້າ? ເຮົາຈະຊ່ວຍພໍ່ແມ່ຢ່າງໃດໃນການລ້ຽງລູກໃຫ້ເຊື່ອຟັງໃນພຣະເຈົ້າ?

6. ຄຣິສຕະຈັກຂອງທ່ານ ໄດ້ຈັດຕຽມຢ່າງໃດຕໍ່ເຍົາວະຊົນ ຄົນໜຸ່ມ, ຕໍ່ຜູ້ອາວຸໂສ ເພື່ອໃຫ້ເຂົ້າໃຈໃນການຮຽກເອີ້ນຂອງພຣະເຈົ້າ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 3
## ສີລາແຫ່ງຄວາມອຸປຖັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1ຊາມູເອນ 7:2-17

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1ຊາມູເອນ 7:2-17

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຄວນວາງຄວາມເຊື່ອຂອງພວກເຮົາໄວ້ໃນພຣະເຈົ້າ ແທນທີ່ຈະວາງໄວ້ນຳວັດຖຸສິ່ງຂອງ ຫລືມະນຸດຄົນໃດຄົນນຶ່ງ

**ຄຳຖາມເພື່ອສຳຣວດ:** ຄວາມເຊື່ອໃນພຣະເຈົ້າຈະສອດຄ່ອງກັບຈັດຕັ້ງແລະວິຊາການຂອງໂລກນີ້ບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະແນະນຳທ່ານໃຫ້ຮູ້ຈັກຫມູນໃຊ້ເຂົ້າໃນຊີວິດປະຈຳວັນ ຈາກການຮຽກເອີ້ນຂອງພຣະເຈົ້າຕໍ່ຊາມູເອນ.

### ຄຳນຳ

ໃນສມັຍກ່ອນ ມະນຸດມັກເຊື່ອ ແລະວາງໃຈໃນເຄື່ອງລາງຂອງຂັງ. ພວກເຂົາຖືວັດຖຸສິ່ງຂອງ, ເຊື່ອພູເຂົາ, ເຊື່ອຕົ້ນໄມ້ລຳທານ, ເຊື່ອມະນຸດຜູ້ຕາຍເປັນ. ພວກເຂົາບໍ່ໄດ້ເຊື່ອພຣະເຈົ້າຜູ້ຊົງສ້າງສັພທຸກສິ່ງ, ຜູ້ຊົງສ້າງຕົວຂອງເຂົາເອງ ຄຣິສຕຽນທຸກວັນນີ້ ບາງຄົນກໍຍັງເຊື່ອຢ່າງນັ້ນຢູ່. ສິ່ງຕ່າງໆເຫລົ່ານັ້ນບໍ່ໄດ້ຊ່ວຍພວກເຂົາໃຫ້ລອດ. ເຣື່ອງໃນ 1 ຊາມູເອນ 4:1-11 ນີ້ເປັນເຫມືອນວ່າໄດ້ສະແດງເອົາ ພຣະເຈົ້າໄດ້ເລືອກເອົາຊາມູເອນໃຫ້ນຳຄວາມຫວັງມາສູ່ພວກເຂົາຈົນສຳເຣັດຫລັງຈາກ ທຸກຄົນຄຸເຂົ່າລົງຕໍ່ຫນ້າພຣະອົງ.

**ທ່າທີ 1: ສິ່ງທີ່ສະແດງອອກ ແລະຄວາມໂສກເສົ້າ** (4:1-7:1)

ເອລີ ປະໂລຫິດແຫ່ງພຣະເຈົ້າ, ຜູ້ເຄີຍໄດ້ສິດສອນ, ຜູ້ເຄີຍນຳພາແລະຜູ້ເຄີຍເປັນຕົວຢ່າງໃຫ້ແກ່ຊາມູເອນ ຜູ້ຊຶ່ງກາຍມາເປັນຜູ້ປະກາດພຣະທັມຂອງພຣະເຈົ້າ. ດຽວນີ້ອາຍຸຂອງລາວໄດ້ ເກົ້າສິບແປດປີແລ້ວ(1ຊາມູເອນ4:15) ລູກທັງສອງຂອງລາວກໍເປັນຜູ້ນຳຂອງຊາວອິສຣາເອນ (1ຊາມູເອນ 3:11-14) ໃນເວລານີ້ກອງທັບຟີລິສຕິນກຳລັງເຂັ້ມແຂງແລະໄດ້ຂ້າທະຫານຂອງອິສຣາເອນເຖິງສີ່ພັນຄົນໃນສນາມຮົບ (4:2) ຂະນະດຽວກັນຫີບຄຳສັນຍາຂອງພຣະ ເຈົ້າກໍຖືກຍຶດໄປດ້ວຍ. (4:11)

ພວກເຮົາໄດ້ເຫັນແລ້ວວ່າ ຫີບຄຳສັນຍາບໍ່ສາມາດຈະປ້ອງກັນຊີວິດຂອງອິສຣາເອນໄດ້. ສິ່ງນັ້ນເປັນວັດຖຸທີ່ພຣະເຈົ້າຊົງສັ່ງໃຫ້ໂມເຊ ທຳຂຶ້ນດ້ວຍໄມ້ກະຖິນເທບ ແລະກໍຫຸ້ມດ້ວຍທອງຄຳ (ອົພຍົບ 25:10-22) ແຕ່ສິ່ງທີ່ຈຳເປັນແທ້ຈິງນັ້ນກໍຄືຄວາມເຊື່ອແລະການປະຕິບັດຕາມ. ກົງກັນຂ້າມຊາວອິສຣາເອນຕ້ອງການຢາກໃຫ້ພຣະເຈົ້າຟັງຄຳຂອງພວກເຂົາແຕ່ພວກເຂົາບໍ່ຍອມຟັງພຣະເຈົ້າ. ລູກຊາຍຂອງເອລີທັງສອງຄົນກໍເປັນຢ່າງນັ້ນ ພວກເຂົາລົບລູ່ພຣະເຈົ້າ ພວກເຂົາຢາກເປັນຜູ້ນຳໂດຍທີ່ພຣະເຈົ້າບໍ່ຊົງຮຽກເອີ້ນ. ພວກຟີລິສຕິນຈຶ່ງຍຶດຫີບຄຳສັນຍາໄປ ແລະຂ້າລູກຊາຍຂອງເອລີຕາຍທັງສອງ. ເວລານີ້ເອລີຕາບໍ່ເຫັນຮຸ່ງແລ້ວ, ອາຍຸເກົ້າສິບແປດປີ, ເມື່ອໄດ້ຍິນຂ່າວຂອງກອງທັບອິສຣາເອນແລະລູກຊາຍກໍເລີຍມີຄວາມເສັຽໃຈຫລາຍ ຫງາຍຫລັງລົ້ມລົງ ຄໍຫັກແລ້ວກໍຂາດໃຈຕາຍໃນທັນທີທັນໃດ. (4:16-18) ທັນມາຫາຝ່າຍລູກໃພ້ ຂອງລາວ(ເມັຍຂອງ ຟີເນຫັສ ກໍມີລູກກຳລັງຈະຄອດຢູ່. ເມື່ອໄດ້ຍິນຂ່າວຂອງຜົວ ແລະພໍ່ຜົວ ແລະການຖືກຍຶດຂອງຫີບພຣະສັນຍາໄປແລ້ວລາວກໍເສັຽໃຈຫລາຍ ໂນ້ມຕົວລົງແລ້ວກໍຄອດບຸດ. ລາວກໍໃສ່ຊື່ລູກວ່າ "ອີຄາໂບດ" ຊຶ່ງແປວ່າ "ພຣະສິຣິຂອງພຣະເຈົ້າໄດ້ຈາກອິສຣາເອນໄປແລ້ວ." (4:19-22) ເຢເຣມີຢາ ດູເຫມືອນວ່າຈະຍົກຂຶ້ນມາກ່າວວ່າຄົນຟີລິສຕິນໄດ້ເຮັດຢ່າງໃດແດ່ໃຫ້ແກ່ຄົນອິສຣາເອນ. (ເຢເຣມີຢາ 7:12-14; 26:6-9)

ຄົນອິສຣາເອນກໍຈົ່ມເສັຽໃຈໃນການສູນເສັຽຫີບຄໍາສັນຍາ, ບໍ່ແມ່ນແຕ່ການປຣາຊັຍເທົ່ານັ້ນ ແຕ່ຍັງຂາດໄປເຖິງສະງ່າຣາສີທີ່ມາຈາກພຣະເຈົ້າດ້ວຍ. ຄົນຟີລິສຕິນເຫມືອນກັນ ພວກເຂົາກໍຈົ່ມທຸກເພາະວ່າ ບໍ່ຮູ້ວ່າຈະນໍາຫີບພຣະສັນຍາໄປໄວ້ທີ່ໃດ. ພວກເຂົາໄດ້ເອົາໄປໄວ້ໃນໂບດ ທີ່ເມືອງອັຊໂດດ ແລະກໍວາງໄວ້ຂ້າງໆ ພຣະດາໂກນ. (ພຣະເຈົ້າແຫ່ງການເກັບກູ້ແລະເປັນພໍ່ຂອງພຣະບາອານອີກ) 1ຊມອ 5:1-2 ເມື່ອຕື່ນເຊົ້າຂຶ້ນມາພວກເຂົາກໍເຫັນພຣະດາໂກນຫມູບຫນ້າຢູ່ພື້ນດິນຕໍ່ຫນ້າຫີບຄໍາສັນຍາແຫ່ງພຣະເຈົ້າ. ພວກເຂົາກໍຈັບຂຶ້ນໄປໄວ້ບ່ອນເກົ່າອີກ, ເຊົ້າວັນໃຫມ່ຂຶ້ນມາອີກພວກເຂົາກໍເຫັນພຣະດາໂກນຫມູບຫນ້າຢູ່ອີກ ຄໍຫັກ ແລະແຂນກໍຂາດອອກ. ເມື່ອເປັນດັ່ງນັ້ນ ຊາວເມືອງອັຊໂດດກໍຢ້ານກົວແລະເວົ້າວ່າ "ຢ່າເອົາມາໄວ້ກັບພວກເຮົາເລີຍ ເພາະວ່າພຣະຫັດຂອງພຣະເຈົ້າ ຢູ່ເຫນືອພວກເຮົາແລ້ວ." ພວກເຂົາກໍພາກັນເອົາໄປໄວ້ທີ່ເມືອງກາດ, ຊາວເມືອງກາດກໍພາກັນເກີດຝີຕາມຕົນຕົວ. ແລ້ວກໍເອົາໄປໄວ້ທີ່ເມືອງເອຄຣອນ, ຊາວເມືອງເອກຣອນ ກໍຮ້ອງໂອຍອາຍຂຶ້ນວ່າ ພວກເຂົາຫວັງຈະຂ້າພວກເຮົາ. ດັ່ງນັ້ນ ເຂົາຈຶ່ງຮ້ອງປະຊຸມຫົວຫນ້າຄົນຟີລິສຕິນວ່າຈະເຮັດຢ່າງໃດຕໍ່ຫີບພຣະສັນຍານີ້ ແລ້ວພວກເຂົາກໍເຫັນດີໃຫ້ສົ່ງຄືນແກ່ຊາວອິສຣາເອນ. (5:7-12)

ບັນຫາກໍມີຢູ່ວ່າຈະສົ່ງຄືນຢ່າງໃດ? ຫລັງຈາກເຈັດເດືອນທີ່ຄົນຟີລິສຕິນໄດ້ທົດສອບກັບສິພຣະຫັດຂອງພຣະເຈົ້າພຽງພໍແລ້ວພວກເຂົາກໍພ້ອມພາກັນກົ້ມກາບນະມັສການພຣະເຈົ້າຂອງອິສຣາເອນ ຄືຈະສົ່ງຄືນດ້ວຍຂອງຖວາຍຝີທອງຄໍາຫ້າອັນແລະຫນູທອງຄໍາຫ້າຕົວ ໃຫ້ຄົບຕາມຈໍານວນເຈົ້ານາຍຂອງຄົນຟີລິສຕິນ ເພື່ອວ່າພຣະເຈົ້າຈະບໍ່ຊີງທໍາລາຍທ່ານ. (6:4)

ພວກເຂົາໄດ້ເອົາກວຽນແລະແມ່ງົວຄູ່ນຶ່ງມາທຽມ ແລະກໍຂົນຂອງທອງຄໍາຕ່າງໆຂຶ້ນເທິງກວຽນ ແລ້ວກໍປ່ອຍໃຫ້ງົວນັ້ນໄປໂດຍເຈົ້ານາຍຄົນຟີລິສຕິນກໍເດີນຕາມຫລັງໄປຈົນເຖິງເຂດແດນ(6:6-13) ເມື່ອຫີບພຣະສັນຍາໄປເຖິງທີ່ໃດສິພຣະຫັດຂອງພຣະເຈົ້າກໍຢຽດອອກໃສ່ພວກເຂົາ. ຊາວເບຊເຊເມດ ພຽງແຕ່ຫລຽວເບິ່ງຫີບເທົ່ານັ້ນກໍລົ້ມຕາຍລົງຫ້າຫມື່ນກັບເຈັດສິບຄົນ. (6:19)

<u>**ທ່າທີ 2 ພາຍໃຕ້ການນໍາພາແລະຄວາມຈິງຮັກພັກດີ**</u> (7:2-9 )

ເປັນເວລາຫລາຍກວ່າຊາວປີ ຊຶ່ງຄົນພຣະເຈົ້າໄດ້ດໍາເນີນຊີວິດແບບບໍ່ເຊື່ອຟັງ. ພວກຟີລິສຕິນໄດ້ຄວບຄຸມດ້ານການປົກຄອງແລະດ້ານຄວາມຄິດ. ຄົນອິສຣາເອນກໍພາກັນນະມັສການພຣະບາອານແລະພຣະອັຊທາໂຣດຢ່າງນ້ອຍ ຊາວອິສຣາເອນຕ້ອງຕັດສິນໃຈທີ່ຈະຊໍາຣະຕົວເອງເສັຍກ່ອນ, ເປັນຫຍັງຈຶ່ງເປັນດັ່ງນັ້ນ? ເພາະວ່າບາງເທື່ອພວກເຂົາອາດໄດ້ຍິນຈາກການສິດສອນຂອງຊາມູເອນ ຫລືວ່າພວກເຂົາລໍຄອຍຄວາມຫວັງຈາກພຣະເຈົ້າເປັນເວລານານແລ້ວ,ເພາະພວກເຮົາໄດ້ຍິນຈາກການຈົ່ມຮ້ອງທຸກໃນ (7:2)

ເວລາຊາມູເອນຈະເຮີນວັຍນັ້ນເບິ່ງຄືວ່າການປ່າວປະກາດໄດ້ມີດວງຽບຢູ່. ແຕ່ເວລາການກ້າວສູ່ການປະກາດທີ່ແທ້ຈິງແລ້ວແມ່ນລາວກ້າກ່າວຢ່າງແຂງແຮງ, ອະທິຖານຢ່າງຕໍ່ເນື່ອງ ແລະເບິ່ງແຍງຢ່າງໃກ້ຊິດ. ລາວໄດ້ຮຽກເອີ້ນໃຫ້ອິສຣາເອນຢູ່ໃຕ້ການນໍາພາຂອງພຣະເຈົ້າດ້ວຍຄວາມເຊື່ອ, ໂດຍໃຊ້ຂັ້ນຕອນຂອງພະລັງອໍານາດເຊັ່ນ: ຫັນກັບ, ຊໍາຣະອອກ, ຖວາຍຕົວ, ຮັບໃຊ້ ແລ້ວພຣະອົງຈະຊົງຊ່ວຍກູ້ທ່ານ. (7:3-4)

"ຈົ່ງມາຮວມກັນນະມັສການທີ່ ມີສປາແລ້ວຂ້າພະເຈົ້າຈະອະທິຖານເພື່ອທ່ານ" (7:5) ຊາວອິສຣາເອນກໍມີຄວາມເຊື່ອຟັງຜູ້ນໍາພາກັນໄປຮວມກັນທີ່ຢູ່ທີ່ນັ້ນ ຊຶ່ງຕັ້ງຢູ່ທາງທິດຕາເວັນຕົກສ່ຽງເຫນືອຂອງເຢຣູຊາເລັມປະມານ ຫ້າ ໄມລ໌. ຊາມູເອນ ໄດ້ອະທິຖານເພື່ອປະຊາຊົນ ແລະກໍໄດ້ມີການຊໍາຣະລ້າງບາບດ້ວຍນໍ້າທີ່ບໍຣິສຸດ. ພວກເຂົາສໍານຶກຄວາມຜິດບາບ, ພວກເຂົາພາກັນອົດອາຫານ ແລະແລ້ວກໍພາກັນສາຣະພາບຄວາມບາບຕ່າງໆທີ່ພວກເຂົາໄດ້ກະທໍາຜ່ານມາ.

(7:6) ພວກເຮົາທຸກວັນນີ້ກໍເຊັ່ນກັນ ພວກເຮົາຄວນສຳນຶກແລະສາຣະພາບບາບຕໍ່ພຣະເຈົ້າ ເພື່ອພຣະອົງຈະຟັງຄຳທູນຂໍຂອງພວກເຮົາ.

ເມື່ອຄົນຟີລິສຕິນໄດ້ຍິນຂ່າວວ່າຄົນອິສຣາເອນປະຊຸມກັນຢູ່ທີ່ນັ້ນ ພວກເຂົາກໍຍົກທັບຂຶ້ນໄປສູ້. ຄົນອິສຣາເອນກໍພາກັນສະທ້ານຢ້ານກົວ (7:7) ຈຶ່ງຮ້ອງຂໍຕໍ່ຊາມູເອນໃຫ້ທູນຂໍຕໍ່ພຣະເຈົ້າຢ່າງບໍ່ຂາດ, ສ່ວນຊາມູເອນກໍເອົາລູກແກະອ່ອນມາຖວາຍແດ່ພຣະເຈົ້າ ແລ້ວພຣະອົງກໍຊົງຟັງຄຳທູນຂໍຂອງລາວ. (7:8-9)

<u>**ທ່າທີ 3 : ຜົນສຳເຣັດແລະສີລາຈາລຶກ**</u> (7:10-17)

ໃນຂະນະທີ່ຊາມູເອນກຳລັງເຜົາຖວາຍເຄື່ອງບູຊາຢູ່ນັ້ນ ພວກຟີລິສຕິນກໍພາກັນຍົກກອງທັບເຂົ້າມາໃກ້ ແຕ່ຄົນອິສຣາເອນທັງຫລາຍກໍບໍ່ໄດ້ກະວົນກະວາຍ, ບໍ່ໄດ້ມີກອງທັບ, ເພາະພວກເຂົາມີພຣະເຈົ້າຜູ້ຊົງອານຸພາບ. ພຣະເຈົ້າໄດ້ຊົງສູ້ຮົບເພື່ອພວກເຂົາ ຄືພຣະອົງເຮັດໃຫ້ຟ້າຮ້ອງຢ່າງແຮງ ເຮັດໃຫ້ຄົນຟີລິສຕິນຢ້ານກົວ ສັບສົນອົລົ່ມານແລ້ວກໍຜ່າຍໜີໄປ. ຄົນອິສຣາເອນກໍມີໂອກາດຕິດຕາມໄປຂ້າຄົນຟີລິສຕິນ.(7:10-11) ທຸກວັນນີ້ພຣະເຈົ້າກໍຊົງຕໍ່ສູ້ສັດຕຣູເພື່ອພວກເຮົາແລະພຣະອົງຈະເປັນຜູ້ກະທຳໃຫ້ສັດຕຣູຂອງເຮົາປຣາຊັຍໄດ້

ຊາມູເອນກໍ ເອົາສີລາ ກ້ອນນຶ່ງຕັ້ງໄວ້ຣະຫວ່າງເມືອງມິສປາແລະເມືອງເຊນ ແລ້ວກໍເອີ້ນຫີນນັ້ນວ່າ "ສີລາແຫ່ງຄວາມອຸປຖັມ" ສີລາກ້ອນທຳອິດ (4:1) ປະຊາຊົນທັງຫລາຍສະແດງທ່າທີອອກແບບບໍ່ມີພຣະເຈົ້າ. ສີລາກ້ອນທີສອງແມ່ນປະຊາຊົນຢູ່ພາຍໃຕ້ການນຳພາຂອງພຣະເຈົ້າ. (7:12) ສີລານີ້ເປັນສິ່ງໜູນໃຈໃຫ້ຄົນອິສຣາເອນມີຄວາມກ້າຫານສູ້ກັບການທົດລອງຕ່າງໆ, ລະນຶກເຖິງພຣະພອນທີ່ພຣະເຈົ້າຊົງປະທານໃຫ້, ແລະຍັງເຮັດໃຫ້ພວກເຮົາມີຄວາມຫວັງໃໝ່ໃນການນຳພາຂອງພຣະອົງ.

ໃນການນຳພາຂອງຊາມູເອນນີ້ ເຮັດໃຫ້ຄົນຟີລິສຕິນທີ່ເຄີຍຍຶດດິນແດນໄປນັ້ນ ສົ່ງດິນແດນຄືນ ແລະຊາມູເອນກໍມີສັນຕິສຸກຕລອດຊີວິດຂອງທ່ານ. (7:13-17) ຕົວຢ່າງຄວາມເຊື່ອທີ່ລາວໄດ້ວາງເປັນຕົວຢ່າງໄວ້ນັ້ນຜູ້ຄົນທັງຫລາຍບໍ່ຄ່ອຍຕິດຕາມ, ທຸກວັນນີ້ກໍເຊັ່ນກັນມະນຸດບໍ່ຄ່ອຍຕິດຕາມຕົວຢ່າງຂອງພຣະເຢຊູ ແຕ່ພວກເຂົາມັກຕິດຕາມຊາວໂລກທີ່ບໍ່ເຊື່ອຟັງພຣະເຈົ້າ. (8:20) ຊາມູເອນຕັກເຕືອນພວກເຂົາວ່າ "ພວກທ່ານຈະເປັນທຸກເພາະພຣະຣາຊທີ່ທ່ານທັງຫລາຍເລືອກນັ້ນລະ ແລະພຣະເຈົ້າຈະບໍ່ຊົງຮັບຟັງທ່ານ" (8:18)

ປວັດສາດຊ້ຳແລ້ວຊ້ຳເລົ່າ, ຍຸກນີ້ຍຸກໜ້າ ເປັນດັ່ງນີ້ເລື້ອຍມາ, ພຣະທັມຜູ້ວິນິສັຍແລະພຣະທັມຊາມູເອນ ຊຶ່ງເປັນປຶ້ມທີ່ສລັບຊັບຊ້ອນ. ການເຮັດຜິດບາບ, ການສາຣະພາບ, ການໃຫ້ອະພັຍ ແລະການລົງໂທດເຮັດໃຫ້ເຫັນວ່ານ້ຳພຣະທັຍຂອງພຣະເຈົ້າແມ່ນຍາມໃດກໍແມ່ນເພື່ອລໍຟັງພວກເຂົາຢູ່ຕລອດເວລາ. (ຜູ້ວິນິສັຍ 2:10-19) ໜ້າສົງສັຍພວກເຂົາເປັນຫຍັງບໍ່ຖອດຖອນບົດຮຽນ? ຖ້າເກີດກັບພວກເຮົາເດ, ພວກເຮົາເດ ຈະຖອດຖອນບົດຮຽນບໍ່?

<u>**ຄຳຖາມ:**</u>

1. ເປັນຫຍັງຄົນອິສຣາເອນ ຈຶ່ງວາງຄວາມເຊື່ອຂອງພວກເຂົາໃສ່ຫີບພັນທະສັນຍາ? ແທນທີ່ຈະວາງໃຈໃຫ້ກັບພຣະເຈົ້າ?

2. ມີຫຍັງແດ່ ຫລືວ່າແມ່ນໃຜແດ່ທີ່ທ່ານວາງໃຈຫລາຍໃນເວລານີ້? ເປັນຫຍັງພວກເຮົາຈຶ່ງໄປວາງໃຈຕໍ່ສິ່ງເຫລົ່ານີ້?

3. ເມື່ອທ່ານອ່ານພຣະທັມຜູ້ວິນິສັຍ 2:10-19 ແລ້ວເຮັດໃຫ້ພວກເຮົາເຫັນຫຍັງແດ່?

4. ແມ່ນຫຍັງຄືຈຸດສຳຄັນຫລືວ່າສີລາແຫ່ງຄວາມອຸປຖັມໃນຊີວິດຂອງຄຣິສຕຽນ? ທ່ານຈະເຮັດຢ່າງໃດໃນການທີ່ຈະເຮັດໃຫ້ສົດຊື່ນຢູ່ຕລອດເວລາ?

5. ທ່ານຈະເຮັດຢ່າງໃດເພື່ອທ່ານຈະໄດ້ "ສີລາແຫ່ງຄວາມອຸປຖັມນີ້ໄວ້ໃນຊີວິດຂອງທ່ານ"?

*ສຈ. ດຣ. ບຸນໂຮມ ພິມມະຈັນ*

## ບົດຮຽນທີ 4
## ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 1 ຊາມູເອນ 9:1-4, 15-21, 10:1, 9-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 8-10

**ຈຸດສຳຄັນຂອງບົດຮຽນນີ້:** ວິທີຂອງພຣະເຈົ້າໃນການຊົງເລືອກຜູ້ທີ່ມາຮັບໃຊ້ພຣະອົງນັ້ນ ເມື່ອທຽບກັບວິທີຂອງມະນຸດ ເຮັດໃຫ້ເກີດຄວາມປລາດໃຈຫລາຍ.

**ຄຳຖາມເພື່ອການສຳຣວດ:** ເພາະວ່າພວກເຮົາເບິ່ງມະນຸດດ້ວຍກັນແລະສະພາບການຕ່າງໆ ຍ້ອນວ່າພວກເຮົາມີຂອບເຂດຈຳກັດແລ້ວ ພວກເຮົາຈະພາດໂອກາດອັນໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຶກສາເບິ່ງຊ່ອງທາງຂອງພຣະເຈົ້າໃນການຊົງເລືອກເອົາຊາອູນມາເປັນກະສັດ ຊຶ່ງເຮັດໃຫ້ພວກເຮົາເກີດຄວາມປລາດໃຈຫລາຍ ແລະເປັນບົດຮຽນໃຫ້ພວກເຮົາທີ່ສາມາດຈະນຳມາປະຕິບັດຕໍ່ມະນຸດດ້ວຍກັນແລະສະພາບການໃນສມັຍນີ້.

### ບົດຮຽນ

**ຄຳນຳ**

ເຖິງແມ່ນວ່າ ຊາມູເອນຮູ້ວ່າອິສຣາເອນຮຽກຮ້ອງເອົາກະສັດ ຊຶ່ງເປັນການປະຕິເສດພຣະເຈົ້າ ລາວກໍປະຕິບັດຕາມຄຳຊີ້ນຳຂອງພຣະຢາໂຮວາໃນການຊົງເລືອກ, ຫົດສົງ, ແລະໃຫ້ພະລັງອຳນາດແກ່ຊາອູນ ຜູ້ທີ່ມາຈາກກະກຸນທີ່ນ້ອຍທີ່ສຸດຂອງອິສຣາເອນແລະກະສັດບໍ່ຫນ້າຈະມາຈາກກະກຸນນ້ອຍຢ່າງນັ້ນເລີຍ.

**ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ**: ບໍ່ຕ້ອງການແລະບໍ່ຄິດບໍ່ຝັນວ່າ (8:1-21)

ຕັ້ງແຕ່ວັນທີ່ໂມເຊໄດ້ນຳປະຊາຊົນອິສຣາເອນອອກມາຈາກການເປັນຂ້າທາດຂອງປະເທດເອຢິບ ໄປຈົນເຖິງແຜ່ນດິນພຣະສັນຍາດ້ວຍການນຳຂອງໂຢຊວຍ ຫລາຍປີຕໍ່ມາກໍມີ ເດໂບຣາ, ກິເດໂອນ, ແຊມຊັນແລະພວກຜູ້ປົກຄອງຄົນອື່ນໆໄພ່ພົນຂອງພຣະເຈົ້າຢູ່ໃຕ້ການປົກຄອງຂອງພຣະເຈົ້າ. ພາສາອັງກິດໃຊ້ຄຳວ່າ theocracy.

ຄຳນີ້ມີຄວາມຫມາຍວ່າ

ພຣະຢາໂຮວາຊົງເປັນພຣະມະຫາກະສັດຈາກສວັນຂອງຊົນຊາດອິສຣາເອນ. ຜູ້ນຳທີ່ຖືກເລືອກແລະຖືກຫົດສົງຈາກພຣະເຈົ້າຈະເປັນຜູ້ເວົ້າຕາມພຣະບັນຊາສັ່ງຈາກພຣະອົງ. ຊາມູເອນຖືກເລືອກແລະຖືກຮ້ອງຈາກພຣະເຈົ້າຕັ້ງແຕ່ລາວຍັງເປັນເດັກຈຶ່ງພິສູດໃຫ້ເຫັນວ່າລາວໄດ້ຮັບຂອງພຣະຣາຊທານແລະມີຄວາມສາມາດທີ່ສຸດທາງຝ່າຍຈິດວິນຍານແລະທາງຍຸດທະວິທີຕ່າງໆ. ເຖິງຢ່າງໃດກໍຕາມ ເມື່ອຊາມູເອນເຖົ້າແກ່ແລ້ວ ລາວເລີຍແຕ່ງຕັ້ງໃຫ້ລູກຊາຍຂອງລາວສອງຄົນມີຊື່ວ່າໂຢເອນແລະອາບີຢາ. ຊື່ຂອງພວກເຂົາມີຄວາມຫມາຍວ່າ <u>ພຣະຢາໂຮວາຊົງເປັນພຣະເຈົ້າ</u> ແລະ <u>ພຣະຢາໂຮວາຊົງເປັນພຣະບິດາ</u>. ແຕ່ໃນກໍຣະນີນີ້ ລູກບໍ່ຄືພໍ່. ລູກສອງຄົນນີ້ໄດ້ຂາຍຄວາມເປັນທັມເສັຽ (1 ຊາມູເອນ 8:1-3).

ໂຊກບໍ່ເຂົ້າຂ້າງ ຄວາມສາມາດແລະຄຸນລັກສະນະຂອງມະນຸດບໍ່ແມ່ນເປັນໄປຕາມສາຍເລືອດ. ໃນທີ່ສຸດ ພວກເຖົ້າແກ່ຂອງແຕ່ລະຕະກຸນຂອງອິສຣາເອນໄດ້ມາຟ້ອງຮ້ອງຊາມູເອນ "ທ່ານເອີຍ ທ່ານກໍເຖົ້າແກ່ຫລາຍແລ້ວ ລູກຊາຍຂອງທ່ານບໍ່ໄດ້ປະພຶດຕາມແບບຢ່າງຂອງທ່ານເລີຍ ສະນັ້ນ ຂໍທ່ານຈົ່ງແຕ່ງຕັ້ງເຈົ້າຊີວິດໃຫ້ເປັນຜູ້ປົກຄອງພວກຂ້ານ້ອຍເຫມືອນດັ່ງປະເທດອື່ນໆທີ່ເຂົາປົກຄອງກັນ (1 ຊາມູເອນ 8:5). ກ່ອນສມັຍຂອງຊາມູເອນ ປະຊາຊົນເຄີຍຮ້ອງຂໍໃຫ້

ກີເດໂອນເປັນກະສັດຂອງພວກເຂົາ ແຕ່ລາວປະຕິເສດບໍ່ຮັບ (ພວກຜູ້ປົກຄອງ 8:22-23).

ຊາມູເອນເສັຽໃຈຫລາຍ. ພຣະຄັມພີພາສາອັງກິດສະບັບນຶ່ງ The Message translation says, "he was crushed"
ແປວ່າ "ລາວຖືກກະທົບທາງຈິດໃຈຢ່າງແຮງ" (1 ຊາມູເອນ 8:6). ສະນັ້ນ ລາວຈຶ່ງອ້ອນວອນຕໍ່ພຣະເຈົ້າ. ພຣະເຈົ້າຊົງໃຫ້ຄຳຫນູນໃຈຜູ້ປະກາດພຣະທັມຂອງພຣະອົງວ່າ "ພວກເຂົາບໍ່ໄດ້ປະຖິ້ມເຈົ້າ ແຕ່ໄດ້ປະຖິ້ມເຮົາຕ່າງຫາກ ໂດຍບໍ່ຍອມໃຫ້ເຮົາເປັນເຈົ້າຊີວິດຂອງພວກເຂົາຕໍ່ໄປ" (8:7). ພຣະຢາໂຮວາໄດ້ບອກໃຫ້ຊາມູເອນໄປບອກໃຫ້ປະຊາຊົນເຂົ້າໃຈການປົກຄອງຂອງກະສັດຕໍ່ປະຊາຊົນ. ລາວກໍໄດ້ປະຕິບັດຕາມ. ລາວວາດມະໂນພາບໃຫ້ປະຊາຊົນເຫັນວ່າກະສັດຈະເກນເອົາລູກຊາຍຂອງພວກເຂົາໄປເປັນທະຫານແລະເປັນຄົນໃຊ້. ສ່ວນລູກສາວຂອງພວກເຂົານັ້ນ "ຈະຕ້ອງແຕ່ງນ້ຳຫອມເຮັດວຽກເປັນແມ່ຄົວແລະເປັນຜູ້ເຮັດເຂົ້າຫນົມ" ກະສັດຈະເອົາທົ່ງນາຕາກ້າແລະຮົ້ວສວນຂອງພວກເຂົາໄປໃຫ້ເພື່ອນຂ້າຣາຊການຂອງເພິ່ນ ຄົນໃຊ້ແລະສັດລ້ຽງຂອງພວກເຂົາກໍຈະເປັນຂອງກະສັດ ພວກເຂົາຕ້ອງໄດ້ເສັຽພາສີນຶ່ງສ່ວນສິບຈາກສັດລ້ຽງແລະຜົລປູກຈາກການເກັບກ່ຽວ (8:10-17). ຊາມູເອນເວົ້າໄວ້ລ່ວງຫນ້າວ່າ "ພວກເຈົ້າຈະຄວນຄາງຢ່າງແສນສາຫັດ" ແຕ່ "ພຣະເຈົ້າຈະບໍ່ຟັງສຽງຄວນຄາງຂອງພວກເຈົ້າ" (8:18). ເຖິງຢ່າງໃດກໍຕາມ ປະຊາຊົນບໍ່ຍອມຟັງຄຳເຕືອນຂອງລາວ. ພວກເຂົາຕອບວ່າ "ບໍ່! ພວກຂ້ານ້ອຍຕ້ອງການເຈົ້າຊີວິດ ເພື່ອພວກຂ້ານ້ອຍຈະເປັນເຫມືອນຊົນຊາດອື່ນ ແລະເພື່ອວ່າເຈົ້າຊີວິດຂອງພວກຂ້ານ້ອຍຈະປົກຄອງພວກຂ້ານ້ອຍເອງ ແລະຈະຊົງນຳຫນ້າພວກຂ້ານ້ອຍອອກໄປຕໍ່ເສິກ" (8:19-20).

ເຖິງຢ່າງໃດກໍຕາມ ພຣະເຈົ້າບໍ່ບັງຄັບໃຫ້ຜູ້ໃດເຊື່ອຟັງພຣະອົງ. ພຣະອົງໃຫ້ສິດເສຣີພາບແກ່ທຸກໆຄົນ ເພື່ອພວກເຂົາຈະໄດ້ຮຽນຮູ້ຈາກຄວາມຜິດພາດຂອງພວກເຂົາເອງ. ໃນກໍຣະນີນີ້ ພຣະຢາໂຮວາຈຶ່ງໄດ້ໃຫ້ມີກະສັດເພື່ອຊ່ອຍກູ້ຊົນຊາດອິສຣາເອນຈາກຟີລິສຕິນ (9:16). ຊາມູເອນອ້ອນວອນຕໍ່ພຣະເຈົ້າອີກ ແລະພຣະອົງບອກໃຫ້ຜູ້ປະກາດພຣະທັມຂອງພຣະອົງວ່າ "ຈົ່ງເຮັດໃນສິ່ງທີ່ພວກເຂົາຕ້ອງການ ແລະແຕ່ງຕັ້ງເຈົ້າຊີວິດໃຫ້ພວກເຂົາ" (8:22). ຫລັງຈາກນັ້ນ ຊາມູເອນກໍໄດ້ບອກໃຫ້ພວກເຂົາກັບເມືອບ້ານເຮືອນຂອງຕົນ.

<u>ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ</u>: ບໍ່ຊົງຈະເປັນໄປໄດ້ແລະບໍ່ເຄີຍຮູ້ມາກ່ອນ (9:1-27)
ໃນພຣະທັມຊາມູເອນທີນຶ່ງບົດທີ 9 ໄດ້ແນະນຳຊາຍຄົນນຶ່ງຊື່ວ່າ ກີເຊ ລາວເປັນຄົນຮັ່ງມີແລະມີຊື່ສຽງ (9:1). ເມື່ອອ່ານພຣະທັມຕອນນີ້ ເບິ່ງເຫມືອນກັບວ່າພຣະເຈົ້າຄົງຈະເລືອກເອົາລາວໃຫ້ເປັນກະສັດ. ແຕ່ພຣະເຈົ້າຊົງເລືອກເອົາຊາອູນ ຜູ້ເປັນລູກຊາຍຂອງລາວ. ໃນຂະນະນັ້ນ ຊາອູນແລະຄົນໃຊ້ຜູ້ນຶ່ງກຳລັງໄປນຳຫາລໍທີ່ເສັຽໄປ (9:3).

ຊາອູນແລະຄົນໃຊ້ຂອງລາວເດີນທາງຜ່ານໄປຫລາຍແຫ່ງ. ເມື່ອມາຮອດເຂດແດນຊຸຍລາວຮູ້ສຶກວ່າພໍ່ຂອງລາວຄົງຈະເປັນຫ່ວງພວກລາວຫລາຍກວ່າລໍທີ່ເສັຽໄປນັ້ນ ລາວຈຶ່ງຊວນຄົນໃຊ້ຂອງລາວກັບຄືນເມືອ. ແຕ່ຄົນໃຊ້ຜູ້ນັ້ນແນະນຳວ່າພວກເຂົາຄວນຈະໄປຫາ "ຄົນຂອງພຣະເຈົ້າ" ບາງທີ່ເພິ່ນອາດຈະບອກພວກເຂົາບ່ອນລໍຢູ່ ແລະພວກເຂົາກໍຈະພົບມັນໄດ້ (9:4-6). ຊາອູນຖາມຄືນວ່າ "ຖ້າພວກເຮົາໄປຫາເພິ່ນເຮົາຈະມີຫຍັງໃຫ້ເພິ່ນ?" ເຂົ້າກິນທີ່ຖືໄປນຳທາງກໍຫມົດບໍ່ມີຫຍັງຈະເອົາໄປເປັນຂອງຝາກ (9:7). ແຕ່ຄົນໃຊ້ຂອງລາວມີເງິນຕິດຕົວໄປຫລຽນນຶ່ງພໍທີ່ຈະໃຫ້ຄົນຂອງພຣະເຈົ້າ ຊຶ່ງໃນສມັຍນັ້ນພວກເຂົາເອີ້ນເພິ່ນວ່າ "ຜູ້ທຳນວາຍ".

ເປັນຫຍັງພຣະເຈົ້າຈຶ່ງເລືອກເອົາຕະກູນເບັນຢາມິນແລະເປັນຫຍັງຈຶ່ງເລືອກເອົາຊາອູນ? ແຜນການຂອງພຣະເຈົ້ານັ້ນພິສູດໃຫ້ເຫັນວ່າເປັນແຜນການທີ່ສົມບູນ ຊຶ່ງພຣະເຈົ້າໄດ້ຊີ້ເອົາຊາຍຫນຸ່ມທີ່ຫນ້າຈັບໃຈທີ່ຊື່ຂອງລາວມີຄວາມຫມາຍວ່າ <u>ຮ້ອງຂໍ</u>. ເພາະວ່າ ຕະກູນເບັນຢາມິນເປັນຕະກູນນ້ອຍແລະມີຄົນຈຳນວນຫນ້ອຍ ຄົງຈະບໍ່ມີການແຕກແຍກໃນການ

ເລືອກເອົາຜູ້ໃດຜູ້ນຶ່ງ ແລະຂົງເຂດນັ້ນເປັນໃຈກາງຂອງພາກເໜືອແລະພາກໃຕ້. ກີເຊຜູ້ເປັນພໍ່ຂອງຊາອູນເປັນຄົນທີ່ບ້ານເມືອງນັບຖື.

ລໍຂອງກີເຊໜີໄປໂດຍບັງເອີນບໍ? ຄົນໃຊ້ຂອງຊາອູນຮູ້ວ່າຜູ້ປະກາດພຣະທັມຢູ່ໃກ້ແຖບນັ້ນໂດຍບັງເອີນບໍ? ຊາມູເອນເປັນຜູ້ທຳນວາຍໃນຂົງເຂດນັ້ນໂດຍບັງເອີນບໍ? ບໍ່ແມ່ນຢ່າງນັ້ນດອກ ພຣະເຈົ້າຊົງເຝົ້າເບິ່ງເຫດການນີ້ຕລອດມາເຖິງແມ່ນວ່າ ພວກເຮົາອາດຈະເບິ່ງເຫດການນີ້ເປັນບັງເອີນ. ພຣະອົງຍັງຊົງທຳການຢ່າງນີ້ຢູ່ເພື່ອພວກເຮົາຕລອດມາຈົນເຖິງສມັຍນີ້.

<u>ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ</u>: ບໍ່ທັນພ້ອມແລະບໍ່ເໝາະ (10:1-16)
ຊາອູນບໍ່ທັນພ້ອມໃນພິທີຂອງຊາມູເອນເທື່ອ. ຊາມູເອນກໍເໝືອນ ລາວບໍ່ທັນມີພຣະຣາຊວັງ ບໍ່ທັນມີຣາຊສຳນັກ ບໍ່ທັນມີເມືອງຫລວງ ບໍ່ທັນມີທະຫານ ບໍ່ທັນມີດິນແດນ ແລະບໍ່ທັນມີຂ້າຣັບໃຊ້ໃຫ້ກະສັດເທື່ອ. ແຕ່ລາວມີສິ່ງທີ່ສຳຄັນທີ່ສຸດນັ້ນແມ່ນການຊົງແຕ່ງຕັ້ງແລະການຫົດສົງຂອງພຣະເຈົ້າ.

ຊາມູເອນໄດ້ເອົານ້ຳມັນຖອກລົງໃສ່ຫົວຂອງຊາອູນ. ພິທີຫົດສົງເປັນສັນຍາລັກຂອງການແຕ່ງຕັ້ງຫລື ແຍກຜູ້ໃດຜູ້ນຶ່ງອອກມາໃຫ້ເປັນກະສັດໃນອະນາຄົດເພື່ອຮັບໃຊ້ພຣະເຈົ້າ. ພິທີຫົດສົງມີຄວາມໝາຍເໝືອນກັນກັບມອບມົງກຸດໃຫ້ກະສັດ. ຕໍ່ມາຜູ້ປະກາດພຣະທັມໄດ້ຈູບຊາອູນ ເພື່ອເປັນໝາຍສຳຄັນຂອງການໃຫ້ພອນແລະປະທັບຕາຮັບຮອງ. ໃນຕອນປາຍ ຊາມູເອນກ່າວວ່າ "ພຣະຜູ້ເປັນເຈົ້າຊົງເອົານ້ຳມັນຊະໂລມຫົດສົງເຈົ້າໃຫ້ເປັນເຈົ້າຊີວິດໄພ່ພົນຂອງພຣະອົງ" (10:1).

ຊາມູເອນບອກຊາອູນວ່າ ມີຊາຍສອງຄົນຈະມາບອກລາວກ່ຽວກັບເຣື່ອງລາວຂອງລໍ. ລໍທີ່ລາວຊອກຫານັ້ນພົບແລ້ວ ແລະພໍ່ຂອງລາວ "ບໍ່ໄດ້ເປັນທຸກກັບກັງວົນຢ່າງໃດກ່ຽວກັບລໍ ແຕ່ວ່າຄິດເປັນຫ່ວງນຳເຈົ້າ" (10:2). ຕໍ່ມາ ລາວຈະພົບຊາຍສາມຄົນອີກທີ່ ຕາໂບ ພວກເຂົາກຳລັງເດີນທາງໄປຖວາຍເຄື່ອງບູຊາທີ່ ເບັດເອນ ຜູ້ນຶ່ງຈູງແບ້ນ້ອຍ ຜູ້ນຶ່ງມີເຂົ້າຈີ່ສາມກ້ອນ ແລະອີກຜູ້ນຶ່ງຖືຖົງນ້ຳອະງຸ່ນ. ພວກເຂົາຈະເອົາເຂົ້າຈີ່ສອງກ້ອນໃຫ້ລາວ ແລະລາວຄວນຈະຮັບເອົານຳພວກເຂົາ (10:3-4). ໃນທີ່ສຸດ ລາວຈະໄປພົບກຸ່ມຜູ້ປະກາດພຣະທັມ ແລະໃນທີ່ນັ້ນພຣະວິນຍານຂອງພຣະເຈົ້າຈະເຂົ້າຢູ່ໃນຕົວຂອງລາວ "ລາວຈະເຂົ້າຮ່ວມໃນການທຳນວາຍແລະປ່ຽນເປັນຄົນຜູ້ໃໝ່ ເມື່ອເປັນເຣື່ອງຢ່າງນີ້ຈົ່ງເຮັດຕາມທີ່ພຣະເຈົ້າຊົງນຳພາໃຫ້ເຮັດ" (10:6-7).

ໃນຂນະທີ່ຊາອູນ ຜູ້ທີ່ຖືກຫົດສົງໃຫ້ເປັນກະສັດອົງໃໝ່ຈາກຜູ້ປະກາດພຣະທັມໄປ "ພຣະເຈົ້າຊົງດັດແປງໃຫ້ລາວເປັນຄົນໃໝ່" ແລະລາວໄດ້ຮັບການຮັບຮອງແລະການໜູນໃຈຈາກຜູ້ປະກາດພຣະທັມ "ທຸກສິ່ງທີ່ຊາມູເອນໄດ້ບອກໄວ້ກັບລາວກໍໄດ້ເກີດຂຶ້ນໃນມື້ນັ້ນ" (10:9). ເມື່ອພຣະວິນຍານຂອງພຣະເຈົ້າເຂົ້າຊົງຢູ່ກັບຊາອູນ ລາວກໍເຂົ້າຮ່ວມທຳນວາຍກັບພວກຜູ້ປະກາດພຣະທັມເໝືອນກັນ (10:10). ເພື່ອນຂອງລາວແລະຄົນທີ່ເຄີຍຮູ້ຈັກມັກຄຸ້ນຈຶ່ງປລາດໃຈວ່າແມ່ນຫຍັງເກີດຂຶ້ນກັບລູກຊາຍຂອງກີເຊ (10:11-12). ຫລັງຈາກນັ້ນແລ້ວ ລາວແລະຄົນໃຊ້ຂອງລາວກໍພາກັນກັບບ້ານ. ລຸງຂອງລາວຖາມວ່າ ລາວໄປໃສມາ. ລາວຕອບວ່າ ລາວແລະຄົນໃຊ້ໄປຕາມຫາລໍແຕ່ພວກເຂົາຫາລໍທີ່ໜີໄປນັ້ນບໍ່ພົບ. ລາວເລີຍໄປພໍ້ຊາມູເອນ. ລຸງຂອງລາວຖາມຕໍ່ໄປວ່າ ຊາມູເອນໄດ້ເວົ້າຫຍັງແດ່. ສ່ວນເຣື່ອງລາວໄດ້ຖືກຫົດສົງນັ້ນລາວເກັບໄວ້ເປັນຄວາມລັບ ແລະລາວຕອບລຸງຂອງລາວວ່າ "ເພິ່ນບອກຂ້ານ້ອຍວ່າ ສັດນັ້ນໄດ້ພົບແລ້ວ" (10:14-16) .

<u>ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ</u>: ບໍ່ຫມັ້ນໃຈແລະບໍ່ກ້າຮັບເອົາຫນ້າທີ່ (10:17-24)
ຊາມູເອນໄດ້ເອີ້ນເອົາປະຊາຊົນທັງຫມົດຂອງອິສຣາເອນໄປເຝົ້າພຣະເຈົ້າທີ່ເມືອງມິຊາປາ. ພຣະອົງຊົງກ່າວຜ່ານທາງຜູ້ປະກາດພຣະທັມໂດຍທົບທວນເຣື່ອງພະລັງອຳນາດແລະຄວາມສັດຊື່ຂອງພຣະອົງທີ່ມີຕໍ່ຊົນຊາດອິສຣາເອນ. ພຣະອົງຊົງກ່າວວ່າພວກເຂົາໄດ້ປະຖິ້ມພຣະອົງ ເນື່ອງຈາກວ່າພວກເຂົາຮ້ອງຂໍຢາກໄດ້ມະນຸດດ້ວຍກັນມາເປັນກະສັດຂອງພວກເຂົາ ແທນທີ່ຈະໃຫ້ພຣະເຈົ້າເປັນກະສັດຂອງພວກເຂົາ (10:17-19). ຕໍ່ມາ ຊາມູເອນຈຶ່ງໄດ້ນຳພາພິທີຈົກສລາກເພື່ອຢາກຮູ້ວ່າພຣະເຈົ້າຊົງເລືອກເອົາຜູ້ໃດມາເປັນກະສັດຂອງຊົນຊາດອິສຣາເອນ. ແນ່ນອນຢູ່ແລ້ວ ຜູ້ປະກາດພຣະທັມຮູ້ວ່າຕຳແຫນ່ງກະສັດຈະຕ້ອງຕົກຢູ່ນຳຜູ້ໃດ. ໃນພຣະທັມສຸພາສິດໄດ້ກ່າວໄວ້ວ່າ "ມະນຸດໃຊ້ສລາກຢາກຮູ້ພຣະປະສົງ ແຕ່ແມ່ນພຣະເຈົ້າເອງຊົງເປັນຜູ້ໃຫ້ຄຳຊີ້ຂາດ" (ສຸພາສິດ 16:33).

ເມື່ອຕົວແທນຂອງແຕ່ລະຕະກຸນເຂົ້າມາຈົກສລາກ ສລາກໄດ້ຕົກຖືກຕະກູນເບັນຢາມິນ. ຕໍ່ມາກໍເລືອກເອົາຫົວຫນ້າຄອບຄົວໃນຕະກູນເບັນຢາມິນ ຄອບຄົວຂອງມາຕີກໍຖືກເລືອກ. ໃນຄອບຄົວຂອງມາຕີມີຜູ້ຊາຍຈັກຄົນກໍໄດ້ນຳມາເລືອກ ຈຶ່ງໄດ້ເລືອກຖືກລູກຊາຍຂອງກີເຊ ຄືຊາອູນ (10:20-21). ແຕ່ກະສັດຜູ້ທີ່ບໍ່ຫມັ້ນໃຈແລະບໍ່ກ້າຮັບຫນ້າທີ່ຜູ້ນີ້ບໍ່ຮູ້ວ່າໄປລີ້ຢູ່ໃສ. ລາວໄປລີ້ຢູ່ທາງຫລັງເຄື່ອງຂອງ ແທນທີ່ລາວຈະມາຢືນຢູ່ນຳພວກເຂົາໃນຄອບຄົວ ເນື່ອງຈາກວ່າລາວຮູ້ວ່າລາວຈະຕ້ອງຖືກເລືອກຕັ້ງໃຫ້ເປັນກະສັດ (10:22). ຫລັງຈາກພວກເຂົາໄດ້ພົບລາວແລະນຳລາວມາຫາປະຊາຊົນໃນເວລາລາວຢືນຢູ່ທ່າມກາງພວກເຂົາ ລາວສູງກວ່າຄົນອື່ນໆ ຊາມູເອນກໍເວົ້າຕໍ່ປະຊາຊົນວ່າ "ນີ້ຄືຊາຍທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້ ໃນທ່າມກາງພວກເຮົາບໍ່ມີຜູ້ໃດຄືກັບລາວ. ປະຊາຊົນກໍຮ້ອງສຽງດັງຂຶ້ນວ່າ "ຂໍພຣະຣາຊາຈົ່ງຊົງພຣະຈະເຣີນ" (10:23-24).

ຫລັງຈາກຊາມູເອນອະທິບາຍກົດລະບຽບແລະຫນ້າທີ່ຂອງກະສັດໃຫ້ປະຊາຊົນຟັງແລ້ວ ລາວປິດພິທີລົງ. ຜູ້ທີ່ຮູ້ສຶກວ່າພຣະເຈົ້າຊົງດົນໃຈໃຫ້ຕິດຕາມຊາອູນ ພວກເຂົາກໍຕາມລາວໄປ ແລະບາງຄົນກໍຫມິ່ນປມາດລາວ ແລະບໍ່ຍອມຖວາຍຂອງຂວັນແກ່ລາວເລີຍ (10:25-27).

ວິທີທາງເລືອກເອົາກະສັດຂອງພຣະເຈົ້ານັ້ນກໍຫນ້າປລາດໃຈ. ໃນທ່າທີດີທີ່ສຸດ ພວກເຮົາອາດຈະບັນລະຍາຍຊາອູນໄດ້ວ່າ ບໍ່ເຄີຍຮູ້ລາວມາກ່ອນ ລາວບໍ່ຫມັ້ນໃຈແລະລາວບໍ່ກ້າຮັບເອົາຫນ້າທີ່. ໃນທ່າຮ້າຍທີ່ສຸດ ພວກເຮົາອາດຈະເຫັນວ່າລາວບໍ່ທັນພ້ອມ ລາວບໍ່ທັນເຫມາະສົມ ແລະລາວບໍ່ຊົງຈະເປັນໄປໄດ້. ແຕ່ຄວາມຄິດຂອງພຣະເຈົ້າບໍ່ເຫມືອນຄວາມຄິດຂອງພວກເຮົາ ແລະທາງຂອງພຣະເຈົ້າແຕກຕ່າງທາງຂອງພວກເຮົາ (ເອຊາຢາ 55:8). "And where God chooses; God empowers." ພຣະເຈົ້າຊົງເລືອກ ພຣະອົງຈະຊູກຳລັງ. ມີຄຳຂວັນເປັນພາສາອັງກິດມີຄວາມຫມາຍຄ້າຍຄືກັນວ່າ "God does not call the equipped; He equips the called." ພຣະເຈົ້າໃຊ້ຄົນມີຊື່ສຽງແລະຄົນທີ່ບ້ານເມືອງເບິ່ງຂ້າມກໍໄດ້ ແຕ່ຜູ້ທີ່ມີຄວາມສັດຊື່ແລະຍອມໃຫ້ພຣະອົງໃຊ້ພຣະອົງຈະໃຊ້ຜູ້ນັ້ນຢູ່ສເມີ- ຈະເປັນຊາມູເອນ ຊາອູນ ຫລືທ່ານກໍໄດ້!

<u>ຄຳຖາມ</u>

1. ອິສຣາເອນມີຄວາມຜິດບໍ່ທີ່ພວກເຂົາຢາກໄດ້ກະສັດ? ຜິດບໍ່ຫລືບໍ່ຜິດ?
2. ມີ "ເຫດການບັງເອີນ" ອັນໃດແດ່ທີ່ພຣະເຈົ້າຊົງເຮັດໃຫ້ຊາມູເອນແລະຊາອູນເຫັນວ່າ ພຣະອົງຊົງຮັບຮອງວ່າໃຫ້ພວກເຂົາມີກະສັດ?
3. ທ່ານສາມາດຄຶດພໍ້ບໍ່ວ່າພຣະເຈົ້າຊົງໃຊ້ສະພາບແວດລ້ອມໃນການກະທຳຂອງພຣະອົງໃນຊີວິດຂອງທ່ານ?
4. ມີຕົວຢ່າງອັນໃດແດ່ທີ່ເຮັດໃຫ້ເຫັນວ່າປລາດຫລາຍໃນວິທີທາງຂອງພຣະເຈົ້າໃນພຣະຄັມພີແລະໃນທຸກວັນນີ້?
5. ມີໂອກາດໃນການຮັບໃຊ້ອັນໃດແດ່ທີ່ທ່ານໄດ້ພາດໄປ ເພາະວ່າທ່ານບໍ່ຕຽມພ້ອມຫລືວ່າທ່ານບໍ່ສົມມາພາຄວນ?

6. ມີຕອນໃດທີ່ຄົນອື່ນໄດ້ພາດໂອກາດໄປຍ້ອນວ່າທ່ານເບິ່ງພວກເຂົາຈາກສາຍຕາຂອງທ່ານເອງແລະບໍ່ແມ່ນມາຈາກພຣະເຈົ້າ?

*ສຈ. ບຸນເຣັ່ງ ພົງປຣະພັນ*

## ບົດຮຽນທີ 5
## ຄວາມຈົງຮັກພັກດີສຸດຍອດ

---

**ຂໍ້ພຣະຄຳພີສຳລັບບົດຮຽນ:** 1 ຊາມູເອນ 12

**ຂໍ້ພຣະຄຳພີສຳລັບເບື້ອງຫລັງ:** 1 ຊາມູເອນ 12

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມສັດຊື່ຕໍ່ພຣະເຈົ້າເຫນືອກວ່າທຸກສິ່ງ.

**ຄຳຖາມເພື່ອການສຳຫລວດ:** ໃນພາກປະຕິບັດແລ້ວ ໃນຊີວິດຂອງທ່ານ ຄວາມຈົ່ງຮັກພັກດີຂອງທ່ານຢູ່ກັບອັນໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບັນລະຍາຍເຣື່ອງຄວາມຈົງຮັກພັກດີ ຊາມູເອນຮຽກຮ້ອງໃຫ້ປະຊາຊົນອິສ ຣາເອນແລະໃຫ້ພວກເຂົາຕັດສິນໃຈ ເພື່ອໃຫ້ພວກເຂົາສະແດງອອກໃຫ້ເຫັນເຖິງ ຄວາມຈົງຮັກພັກດີຕໍ່ພຣະເຈົ້າໃນທາງໃດທາງນຶ່ງ.

## ບົດຮຽນ

### ຄຳນຳ

ຫລັງຈາກພຣະເຈົ້າອະນຸຍາດໃຫ້ປະຊາຊົນອິສຣາເອນໃຫ້ມີກະສັດ ຊາມູເອນຮຽກຮ້ອງໃຫ້ພວກເຂົາໃຫ້ມີຄວາມຈົງຮັກພັກດີຕໍ່ພຣະຢາໂຮວາເປັນອັນດັບນຶ່ງ. ແລ້ວລາວສັນຍາວ່າລາວຈະຊ່ອຍໃນການອ້ອນວອນແລະໃນການສັ່ງສອນ.

### ຄວາມຈົງຮັກພັກດີຕໍ່ກະສັດ (11:1-15)

ນາຮາດກະສັດຂອງຊາວອັມໂມນໄດ້ມາອ້ອມເມືອງຢາເບັດຢູ່ໃນເຂດແດນກີເລອາດ ເຊິ່ງຢູ່ທິດຕາເວັນອອກສ່ຽງເຫນືອຂອງເມືອງກີເບອາປະມານສີ່ສິບ ຫລືຫ້າສິບໄມລ໌. ຊາວອິສຣາເອນຢູ່ໃນເມືອງຢາເບັດຢ້ານວ່າພວກພີ່ນ້ອງອິສຣາເອນໃນໂຂງເຂດອື່ນໆຈະບໍ່ມາຊ່ອຍເຫລືອພວກເຂົາ, ພວກເຂົາຈຶ່ງຕັດສິນໃຈຂໍຍອມຈຳນົນຕໍ່ກອງທັບຂອງກະສັດນາຮາດ. ກະສັດນາຮາດໄດ້ຮັບເອົາຄວາມຮ້ອງຂໍຂອງພວກເຂົາ ໂດຍມີເງື່ອນໄຂວ່າພຣະອົງຈະຕ້ອງເຈາະຫນ່ວຍຕາເບື້ອງຂວາຂອງພວກເຂົາ ເຊິ່ງເປັນການດູຫມິ່ນຊາວອິສຣາເອນ (1 ຊາມູເອນ 11:1-2). ພວກຜູ້ນຳຂອງເມືອງຢາເບັດໄດ້ຮ້ອງຂໍຕໍ່ກະສັດຂອງຊາວອັມໂມນວ່າ "ຂໍອະນຸຍາດໃຫ້ພວກຂ້ານ້ອຍສົ່ງຄົນນຳຂ່າວອອກໄປທົ່ວທັງເຂດແດນອິສຣາເອນພາຍໃນເຈັດມື້ເສັຽກ່ອນ ຖ້າວ່າບໍ່ມີຜູ້ໃດຊ່ອຍເຫລືອພວກຂ້ານ້ອຍແລ້ວ ພວກຂ້ານ້ອຍຈຶ່ງຈະຍອມຈຳນົນຕໍ່ພວກທ່ານ" (1 ຊາມູເອນ 11:3). ກະສັດຂອງຊາວອັມໂມນກໍເລີຍຕົກລົງອະນຸຍາດໃຫ້ຕາມຄຳຮ້ອງຂໍຂອງຊາວອິສຣາເອນ.

ຜູ້ນຳຂ່າວກໍໄດ້ນຳຂ່າວນັ້ນໄປຮອດຊາອູນໃນຂນະທີ່ລາວກຳລັງຈູງງົວກັບມາແຕ່ນາ. ເມື່ອລາວໄດ້ຍິນເຣື່ອງລາວຢ່າງນັ້ນ ລາວຈຶ່ງມີຄວາມໃຈຮ້າຍຂຶ້ນ ເຊິ່ງເປັນຄວາມຮ້າຍຈາກພຣະວິນຍານຂອງພຣະເຈົ້າ (11:4-6). ລາວເກີດມີທ່າທີຂອງການເປັນຜູ້ປົກຄອງທາງຝ່າຍທະຫານເຫມືອນດັ່ງໃນພຣະທັມພວກຜູ້ປົກຄອງ. ລາວຂ້າງົວຂອງລາວແລະຕັດເປັນຕ່ອນໆ ຄົງຈະເປັນສິບສອງຕ່ອນ ແລ້ວໃຫ້ພວກນຳຂ່າວນັ້ນນຳໄປໃຫ້ທົ່ວທັງເຂດແດນຂອງອິສຣາເອນ ພ້ອມທັງສັ່ງຄວາມໄປອີກວ່າ "ຖ້າຜູ້ໃດບໍ່ຕິດຕາມຊາອູນແລະຊາມູເອນເຂົ້າສູ່ສນາມຮົບ ງົວຂອງຜູ້ນັ້ນຈະຕ້ອງຖືກຂ້າຢ່າງນີ້" (11:7). ເມື່ອເປັນຢ່າງນັ້ນ ມີສາມແສນສາມຫມື່ນຄົນໄດ້ມາຊ່ອຍ (11:8).

ດ້ວຍຍຸດທະວິທີອັນສລາດ ກະສັດຊາອູນໄດ້ນຳຊາວອິສຣາເອນໂຈມຕີຄ້າຍພັກທະຫານຂອງຊາວອັມໂມນ ພວກເຂົາພາກັນແຕກຕື່ນ "ທະຫານຂອງຊາອູນໄດ້ຂ້າສັດຕຣູຕາຍຢ່າງຫລວງຫລາຍ ຝ່າຍພວກທີ່ຍັງເຫລືອກໍແຕກກະຈັດກະຈາຍ

ໄປ ແລະແລ່ນປົບໜີເອົາຕົວລອດ" (11:11). ຫລາຍປີຜ່ານມາ ຫລັງຈາກຊາອູນໄດ້ເສັງຊັຍໃຫ້ກັບພວກຟີລິສຕິນ ລາວແລະລູກຊາຍຂອງລາວໄດ້ເສັງຊີວິດໃນສນາມຮົບ ຜູ້ທີ່ອົງອາດກ້າຫານຂອງຊາວຢາເບັດທີ່ຢູ່ໃນຂົງເຂດກີເລອາດ ໄດ້ສ່ຽງຊີວິດຂອງພວກເຂົາໄປເອົາສົບຂອງຊາອູນແລະລູກຂອງລາວກັບມາຈາກພວກຟີລິສຕິນ (31:8-13).

ຫລັງຈາກສມັຍຂອງໂຢຊວຍ ຊາອູນໄດ້ທ້ອນໂຮມຊາວເຮັບເຣີເປັນຄັ້ງແລກ. ຊາວອິສຣາເອນຈະນຳເອົາຜູ້ທີ່ບໍ່ຍອມຮັບ ວ່າຊາອູນເປັນກະສັດອອກມາຂ້າເສັຽ ແຕ່ລາວຫ້າມພວກເຂົາວ່າ "ເພາະວ່າ ແມ່ນມື້ທີ່ພຣະຜູ້ເປັນເຈົ້າໄດ້ຊ່ອຍຊາວອິສ ຣາເອນໃຫ້ພົ້ນພັຍ" (11:13). ຊາມູເອນຮ້ອງໃຫ້ປະຊາຊົນອິສຣາເອນໄປທ້ອນໂຮມກັນຢູ່ເມືອງກິນການ ເພື່ອປະກາດ ແຕ່ງຕັ້ງຊາອູນໃຫ້ເປັນກະສັດຂອງຊາວອິສຣາເອນອີກ ແລະປະກາດຄວາມຊັຍຊນະຂອງການນຳພາຂອງລາວ (11: 14-15). ໃນບໍ່ຊ້ານັ້ນ ຊາອູນໄດ້ເອົາຊນະຈິດໃຈຂອງປະຊາຊົນ ແລະພວກເຂົາໄດ້ປະຕິຍານຕົນຈະຈົງຮັກພັກດີຕໍ່ກະສັດ ຊາອູນ. ແຕ່ຊາມູເອນຮູ້ວ່າ ການປະຕິຍານຕົນດ້ວຍຄວາມສັດຊື່ ແລະມີຄວາມຈົງຮັກພັກດີຕໍ່ກະສັດໃນໂລກນີ້ເທົ່ານັ້ນຈະ ເປັນອັນຕະລາຍແກ່ພວກເຂົາໄດ້.

## <u>ຄວາມຈົງຮັກພັກດີຕໍ່ພຣະເຈົ້າ</u> (12:1-15)

ມີຄຳນຶ່ງໃນຄຳປະຕິຍານຕົນເມື່ອຄຳນັບທຸງຄຣິສຕຽນ "ຣາຊອານາຈັກຂອງພຣະອົງຊົງຕັ້ງຢູ່". ໃນທຳນອງດຽວກັນ ຊາມູເອນໄດ້ຮຽກຮອງໃຫ້ຊາວອິສຣາເອນປະຕິຍານຕົນຕໍ່ພຣະເຈົ້າ. ສາສນາຈານບາງຄົນມີຄວາມເຫັນວ່າ 1 ຊາມູ ເອນ ບົດທີ 12 ແມ່ນຄຳສັ່ງລາຂອງຊາມູເອນ, ແຕ່ວ່າ ພາຣະກິດຂອງລາວຍັງບໍ່ທັນສິ້ນສຸດເທື່ອ. ລາວພຽງແຕ່ປ່ຽນບົດ ບາດໃນການຮັບໃຊ້. ເຣື່ອງຣາຊອານາຈັກຂອງພຣະເຈົ້າເປັນໜ້າທີ່ຮັບຜິດຊອບຂອງຜູ້ປະກາດພຣະທັມຂອງພຣະເຈົ້າ ແລະສຳລັບໜ້າທີ່ຂອງຜູ້ປົກຄອງໄດ້ປ່ຽນໃຫ້ເປັນພາຣະຂອງກະສັດ. ມື້ນີ້ ພວກເຮົາອາດຈະເຂົ້າໃຈຄຳເວົ້າຂອງຊາມູ ເອນທີ່ໄດ້ປະກາດຢູ່ກິນການແລ້ວ ເຊິ່ງເປັນຂໍ້ຄວາມສຳຄັນສຳລັບປະຊາຊົນແລະຊາອູນ.

ຊາມູເອນເລີ້ມກ່າວສລູບໃຫ້ເຫັນລັກສະນະຂອງການຮັບໃຊ້ຂອງລາວໃຫ້ພວກປະຊາຊົນ ແລະຊາອູນຜູ້ເປັນກະສັດຟັງ. ລາວບໍ່ໄດ້ເວົ້າອວດຄວາມດີຂອງລາວ ແຕ່ລາວກ່າວໃນຖານະເປັນຜູ້ຮັບໃຊ້ຂອງພຣະຢາໂຮວາ. ໃນຖານະເປັນຜູ້ນຳ ຂອງພວກເຂົາ "ຕັ້ງແຕ່ໜຸ່ມນ້ອຍຈົນເຖິງດຽວນີ້", ຊາມູເອນບໍ່ເຄີຍເປັນຄົນລັກ, ລາວບໍ່ເຄີຍສໍ້ໂກງກົດຂີ່ຂົ່ມເຫງຜູ້ໃດ, ລາວບໍ່ເຄີຍຮັບສິນຈ້າງລາງວັນຈາກຜູ້ໃດ ຫລືກິນສິນບົນເພື່ອປິ້ນສິ້ນທັມ. ຖ້າຫາກວ່າລາວໄດ້ເຮັດຜິດໄປ, ລາວ "ຍິນດີ ສົ່ງຄືນທຸກຢ່າງ" (12:1-3). ປະຊາຊົນໄດ້ຕອບລາວວ່າ "ທ່ານບໍ່ໄດ້ສໍ້ໂກງຫລືຂົ່ມເຫັງພວກຂ້ານ້ອຍແຕ່ຢ່າງໃດດອກ ແລະທ່ານບໍ່ໄດ້ຮັບເອົາສິ່ງນຶ່ງສິ່ງໃດຈາກໃຜໝົດ" (12:4).

ໃນສມັຍຂອງພວກເຮົານີ້ ພວກເຮົາຢາກເຫັນຄວາມສັດຊື່ ແລະຄວາມຮູ້ເຖິງບາບບຸນຄຸນໂທດເໝືອນກັບຊາວເຮັບເຣີ ນັ້ນ. ເຣື່ອງລາວບໍ່ສັດຊື່ໃນການຄ້າຂາຍ, ການລະເມີດກົດໃນດ້ານກິລາໃນວິທະຍາລັຍ, ແລະລັກຄະແນນຂອງການສອບ ເສັງຂອງໂຮງຮຽນ ອ່ານລືໄປຕາມໜ້າໜັງສືພິມແລະອອກອາກາດທາງວິທະຍຸແລະໂທຣະທັດ. ຄວາມຈົງຮັກພັກດີສຸດ ຍອດທີ່ຊາມູເອນມີຕໍ່ພຣະເຈົ້າໄດ້ນຳໃຫ້ລາວມີຄວາມສັດຊື່ຢ່າງແທ້ຈິງ. ໃນບັ້ນປາຍຂອງການນຳພາຂອງລາວ, ຊາມູ ເອນບອກໃຫ້ປະຊາຊົນຮັບຮູ້ຄວາມບໍຣິສຸດໃນການຮັບໃຊ້ທີ່ລາວໄດ້ນຳພາພວກເຂົາແລະປະຊາຊົນກໍໄດ້ຮັບຮູ້ (12:5).

ແຕ່ເມື່ອປະຊາຊົນໄດ້ຍິນຄຳເຕືອນຂອງຊາມູເອນກ່ຽວກັບລັກສະນະຂອງກະສັດທັງຫລາຍ, ປະຊາຊົນໄດ້ເຫັນຢ່າງ ແຈ່ມແຈ້ງໃນຄຳເວົ້າປົກປ້ອງລັກສະນະຂອງການນຳພາແລະຄວາມສັດຊື່ໃນການຮັບໃຊ້ຂອງລາວ. ລາວບໍ່ໄດ້<u>ເອົາ</u>ອັນ ໃດນຳປະຊາຊົນ. ແຕ່ລາວ<u>ໃຫ້</u>ພວກເຂົາ. ກະສັດນັ້ນອາດຈະບໍ່<u>ໃຫ້</u>ປະຊາຊົນ, ພຣະອົງຈະ<u>ເອົາ</u>ລູກຊາຍຂອງພວກເຂົາມາ ເປັນທະຫານ, ແລະເປັນຜູ້ອອກແຮງງານ, ລູກສາວຂອງພວກເຂົາກໍຈະເປັນແມ່ຄົວແລະຈັດຕຽມນ້ຳຫອມໃນພຣະຣາຊ ວັງ, ໄຮ່ນາຮົ້ວສວນຂອງພວກເຂົາກໍຈະກາຍເປັນຂອງພຣະອົງ, ຄົນໃຊ້ແລະສັດລ້ຽງຂອງພວກເຂົາກໍຈະເປັນຂອງ

ພຣະອົງ, ນຶ່ງສ່ວນສິບຂອງສັດລ້ຽງແລະຜົລປູກກໍຈະນໍາມາເສັຽພາສີເຂົ້າຄັງຂອງພຣະອົງ (8:10-17).

ຊາມູເອນໄດ້ກ່າວສັ່ງສອນພວກເຂົາກ່ຽວກັບປະວັດຂອງຊົນຊາດອິສຣາເອນຕໍ່, ລາວທົບທວນໃຫ້ພວກເຂົາເຫັນນິສັຍຂອງໄພ່ພົນຂອງພຣະເຈົ້າ, ລາວປະເຊີນກັບພວກເຂົາກ່ຽວກັບຄວາມບາບຂອງພວກເຂົາ, ແລະລາວປຸກລະດົມແນວຄິດແລະຈິດໃຈຂອງພວກເຂົາ. ລາວກ່າວເຖິງຄຸນຄວາມດີຂອງພຣະເຈົ້າ ທີ່ພຣະອົງໄດ້ນໍາບັນພະບຸຣຸດຂອງພວກເຂົາອອກຈາກການເປັນຂ້າທາດໃນປະເທດເອຢິບ. ຕໍ່ມາ ລາວກ່າວໂທດພວກເຂົາໃນສິ່ງທີ່ພວກເຂົາໄດ້ກະທໍາໄປ (12:6-7). ລາວກ່າວວ່າພຣະເຈົ້າໄດ້ສົ່ງໂມເຊແລະອາໂຣນໄປນໍາເອົາປູ່ຍ່າຕາຍາຍຂອງພວກເຂົາ "ອອກໜີຈາກປະເທດເອຢິບ ແລະໃຫ້ພວກເຂົາມາຕັ້ງຫລັກຖານຢູ່ໃນປະເທດນີ້" (12:8). ລາວເຕືອນໃຫ້ພວກເຂົາເຫັນວ່າ ຫລາຍເທື່ອຫລາຍທີບັນພະບຸຣຸດຂອງພວກເຂົາໄດ້ລືມພຣະເຈົ້າ ແລະ "ພຣະອົງຈຶ່ງຊົງໃຫ້ຊີເຊຣາແມ່ທັບເມືອງຮາໂຊມາສູ້ຮົບກັບພວກເຂົາ ແລະໄດ້ຊັຍຊະນະ ຕໍ່ມາພວກຟີລິສຕິນກໍໄດ້ມາສູ້ຮົບກັບພວກເຂົາ ແລະຕໍ່ມາອີກເຈົ້າຊີວິດປະເທດໂມອາບກໍມາສູ້ຮົບແລະຊະນະພວກເຂົາ" (12:9). ລາວຊີ້ໃຫ້ພວກເຂົາເຫັນວ່າ ແຕ່ລະຄັ້ງບັນພະບຸຣຸດຂອງພວກເຂົາຮ້ອງທຸກຕໍ່ພຣະຜູ້ເປັນເຈົ້າ ພວກເຂົາຍອມຮັບສາຣະພາບຄວາມບາບຂອງພວກເຂົາທີ່ໄດ້ຫັນໜີຈາກພຣະເຈົ້າໄປນະມັສການ "ພຣະບາອານແລະພຣະອັຊໂທເຣັດ" ແລະສັນຍາຕໍ່ພຣະເຈົ້າວ່າຈະກັບມານະມັສການພຣະອົງ ຖ້າພຣະອົງຫາກຊ່ອຍຊີວິດພວກເຂົາຈາກສັດຕຣູຂອງພວກເຂົາ (12:10). ແຕ່ລະຄັ້ງພຣະອົງຈະສົ່ງຜູ້ປົກຄອງມາຊ່ອຍພວກເຂົາ (12:11). ເຖິງຢ່າງໃດກໍຕາມ ພວກເຂົາຍັງບໍ່ເຫັນຄວາມສາມາດຂອງພວກຜູ້ປົກຄອງທີ່ພຣະອົງຊົງເລືອກນັ້ນ.

ຊາມູເອນຊີ້ໃຫ້ພວກເຂົາເຫັນວ່າ ໃນຂນະນີ້ ຄວາມຈົ່ງຮັກພັກດີອັນສູງສົ່ງຕໍ່ກະສັດສວັນບໍ່ມີແລ້ວ. ພວກເຂົາຮຽກຮ້ອງເອົາກະສັດສໍາລັບໂລກນີ້ (12:12-13). ຕໍ່ມາ ລາວຊີ້ບອກໃຫ້ຊາອູນແລະປະຊາຊົນໃຫ້ມີຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າ. ຖ້າພວກເຂົາຫາກຢ້ານຢໍາພຣະເຈົ້າ, ຮັບໃຊ້ພຣະອົງ, ເຊື່ອຟັງພຣະອົງ, ບໍ່ກະບົດຄິດຄົດຕໍ່ພຣະອົງ ແລະຕິດຕາມພຣະອົງ, ພວກເຂົາກໍຈະຮຸ່ງເຮືອງ (12:14). ຖ້າພວກເຂົາບໍ່ເຊື່ອຟັງພຣະອົງ, ພຣະອົງຈະ "ຕໍ່ສູ້" ພວກເຂົາແລະເຈົ້າຊີວິດຂອງພວກເຂົາດ້ວຍ (12:15). ພວກເຂົາຈະຕ້ອງຈົ່ງຮັກພັກດີຕໍ່ພຣະມະຫາກະສັດເໜືອກະສັດທັງຫລາຍ. ຄໍາໝັ້ນສັນຍາຂອງອິສຣາເອນກັບພຣະເຈົ້າຄວນຈະເໜືອກວ່າກັບຄໍາໝັ້ນສັນຍາໃດໆກັບກະສັດສໍາລັບໂລກນີ້.

<u>**ຮຽກຮ້ອງໃຫ້ມີຄວາມຈົ່ງຮັກພັກດີ**</u> (11:16-25)

ຜູ້ທີ່ພຣະເຈົ້າຊົງຮ້ອງມາຮັບໃຊ້ແຕ່ຍັງເປັນເດັກຊາຍໄດ້ປິດຂໍ້ຄວາມຂອງລາວດ້ວຍການອ້ອນວອນ, ໃຫ້ຄໍາໝັ້ນສັນຍາແລະພະລັງອໍານາດ. ໃນເວລານັ້ນເປັນຣະດູແລ້ງຊຶ່ງເປັນຣະດູເກັບກ່ຽວ. ຝົນບໍ່ເຄີຍຕົກດົນໃນຣະດູນີ້. ແຕ່ຊາມູເອນໄດ້ຮ້ອງຂໍໃຫ້ພຣະເຈົ້າສົ່ງຟ້າຮ້ອງແລະຝົນຕົກລົງມາ ເພື່ອໃຫ້ພວກເຂົາລະນຶກເຫັນວ່າເມື່ອເວລາພວກເຂົາໄດ້ "ຮ້ອງຂໍເອົາເຈົ້າຊີວິດຈາກພຣະອົງ ພວກເຂົາໄດ້ກະທໍາຄວາມຜິດອັນຍິ່ງໃຫຍ່" (12:17). ສຽງຟ້າຮ້ອງດັງກ້ອງສນັ່ນ. ທອງຟ້າໄຂອອກ. ນໍ້າຝົນຕົກລົງມາ. ປະຊາຊົນຈ້ອງເບິ່ງພຣະຢາໂຮວາແລະຊາມູເອນດ້ວຍຄວາມປລາດໃຈ. ດ້ວຍວ່າມີຄວາມຢ້ານ ພວກເຂົາຮ້ອງຂໍໃຫ້ລາວອ້ອນວອນເພື່ອພວກເຂົາ ໃນຂນະທີ່ພວກເຂົາກັບໃຈຈາກການເຮັດບາບ ຣວມທັງ "ໄດ້ເຮັດຜິດໂດຍການຮ້ອງຂໍເອົາເຈົ້າຊີວິດ (12:18-19).

ເຖິງແມ່ນວ່າ ບາງຄັ້ງປະຊາຊົນໄດ້ເຮັດຜິດພາດໄປ, ຊາມູເອນໄດ້ໃຫ້ຄວາມໝັ້ນໃຈແກ່ພວກເຂົາທີ່ມາຈາກພຣະຢາໂຮວາ. ລາວທ້າທາຍພວກເຂົາ "ແຕ່ຈົ່ງຢ່າຫັນໜີຈາກພຣະຜູ້ເປັນເຈົ້າອີກ ຈົ່ງຮັບໃຊ້ພຣະອົງໃຫ້ສຸດອົກສຸດໃຈ" ຂອງພວກເຂົາ (12:20). ລາວໄດ້ເຕືອນພວກເຂົາ "ຢ່າໂຄຣົບນັບຖືພຣະປອມ ເພາະວ່າພວກມັນຊ່ອຍເຫລືອໃຫ້ພວກທ່ານພົ້ນໄພບໍ່ໄດ້" (12:21). ແຕ່ເຖິງຢ່າງໃດກໍຕາມລາວໃຫ້ຄໍາໜູນໃຈແກ່ພວກເຂົາວ່າພຣະອົງຊົງຮັກພວກເຂົາແລະພຣະອົງຈະບໍ່ປະຖິ້ມພວກເຂົາ ເພາະວ່າ "ພຣະອົງຈະຊົງຕັດສິນພຣະທັຍເອົາພວກທ່ານເປັນໄພ່ພົນຂອງພຣະອົງ" (12:22).

ຊາມູເອນໃຫ້ຄໍາສັນຍາວ່າ "ສ່ວນຂ້າພະເຈົ້າຈະບໍ່ເຊົາອ້ອນວອນສໍາລັບພວກທ່ານ ເພາະການເຊົາອ້ອນວອນເປັນການຜິດຕໍ່ພຣະຜູ້ເປັນເຈົ້າ ແຕ່ຂ້າພະເຈົ້າຈະສັ່ງສອນໃຫ້ພວກທ່ານເຮັດໃນສິ່ງທີ່ດີ ແລະສິ່ງທີ່ຖືກຕ້ອງ" (12:23). ລາວມ້ວນທ້າຍດ້ວຍການຮຽກຮ້ອງໃຫ້ພວກເຂົາຮັບໃຊ້ພຣະເຈົ້າ "ດ້ວຍຄວາມສັດຊື່" ແລະເຕືອນພວກເຂົາອີກວ່າ ຖ້າພວກເຂົາ "ຍັງດໍາເນີນການເຮັດຜິດຢູ່ອີກ ພວກທ່ານແລະເຈົ້າຊີວິດຂອງພວກທ່ານຈະຖືກທໍາລາຍ (12:24-25). ເຖິງຢ່າງໃດກໍຕາມ ແມ່ນແຕ່ກະສັດກໍຈະຕ້ອງຢູ່ໃຕ້ພຣະສັນຍາຂອງພຣະເຈົ້າ. ຊາອູນແລະປະຊາຊົນຈະຕ້ອງມີຄວາມຈົງຮັກພັກດີຕໍ່ພຣະຢາໂຮວາ.

## <u>ທ່ານຈະວ່າຢ່າງໃດ? ແລະທ່ານຈະທໍາຢ່າງໃດ?</u>

- ຄຣູສອນກິລາບອກໃຫ້ທ້າວບຣາຍແອນວ່າ ລາວຈະຕ້ອງໄດ້ຫລິ້ນກິລາ ເບັສບອນ ໃນຍາມພັກຣະດູຮ້ອນແລະໃນຣະດູໃບໄມ້ຫລົ່ນ ຖ້າບໍ່ຢ່າງນັ້ນ ລາວຈະບໍ່ໄດ້ທຶນໄປເຂົ້າມະຫາວິທະຍາລັຍ. ໝາຍຄວາມວ່າ ເວລາແຂ່ງຈະຕົກຖືກເກືອບທຸກວັນທ້າຍສັປດາ ຮວມທັງວັນອາທິດໝົດນີ້.

- ແມ່ຕູ້ແອນແລະພໍ່ຕູ້ໂທມາສອນໃນໂຮງຮຽນວັນອາທິດໄດ້ຫ້າສິບປີແລ້ວ ພວກເພິ່ນທັງສອງຮູ້ສຶກວ່າຢາກຈະເຊົາສອນ ແຕ່ກໍບໍ່ໝັ້ນໃຈວ່າຈະເຮັດຢ່າງໃດ.

<u>ຄໍາຖາມ</u>

1. ເປັນຫຍັງປະຊາຊົນອິສຣາເອນຈຶ່ງຈະຕົກຢູ່ໃນຄວາມອັນຕະລາຍ ເມື່ອມີຄວາມຈົງຮັກພັກດີຕໍ່ຜູ້ໃດຜູ້ນຶ່ງຫລືສິ່ງໃດສິ່ງນຶ່ງນອກເໜືອໄປຈາກພຣະເຈົ້າ?

2. ໃຫ້ຂຽນເປັນລາຍຊື່ຂອງມະນຸດຫລືວັດຖຸທີ່ປະຊາຊົນອິສຣາເອນຖືກຫລອກລວງໃຫ້ຈົງຮັກພັກດີຕໍ່. ແມ່ນອັນໃດຈະກໍ່ໃຫ້ເກີດບັນຫາສໍາລັບພວກເຮົາໃນສມັຍນີ້?

3. ໃນຖານະສ່ວນບຸກຄົນ, ຄອບຄົວ, ແລະຄຣິສຕະຈັກ ພວກເຮົາຈະແນ່ໃຈໄດ້ຢ່າງໃດວ່າພວກເຮົາຈະມີຄວາມຈົງຮັກພັກດີຕໍ່ພຣະເຈົ້າ?

4. ໃນເມື່ອມີການປ່ຽນແປງໃນການເປັນຜູ້ນໍາຂອງຊາວອິສຣາເອນ ຊາມູເອນປັບສະພາບການຂອງລາວຢ່າງໃດ? ພວກເຮົາຈະສາມາດປັບສະພາບການໃນການປ່ຽນແປງໃນຊີວິດສ່ວນຕົວແລະໃນຄຣິສຕະຈັກຢ່າງໃດ?

5. ຜູ້ນໍາໃນຄຣິສຕະຈັກແລະຜູ້ນໍາຝ່າຍໂລກແລະຜູ້ນໍາຝ່າຍການເມືອງມີລັກສະນະແຕກຕ່າງເປັນພິເສດຢ່າງໃດ?

*ສຈ. ບຸນເຮັ່ງ ພົງປຣະພັນ*

# ບົດຮຽນທີ 6
# ເມື່ອຊີວິດເປັນຮ້າຍແທ້ຮ້າຍວ່າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 1 ຊາມູເອນ 15:10-31
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 13-15
**ຈຸດສຳຄັນຂອງບົດຮຽນນີ້:** ການບໍ່ເຊື່ອຟັງເປັນການກະທຳອັນບໍ່ຖືກຕ້ອງແລະນຳໂທດມາສູ່ຕົນ ບໍ່ວ່າຈະພະຍາຍາມຫາຂໍ້ແກ້ຕົວຢ່າງໃດກໍຕາມ.
**ຄຳຖາມເພື່ອການສຳຣວດ:** ເປັນການຖືກຕ້ອງບໍ່ ການບໍ່ເຊື່ອຟັງໄດ້ນຳໂທດມາສູ່ຕົນ ທັງທີ່ພວກເຮົາມີເຫດຜົນພຽງພໍ?
**ຈຸດປະສົງຂອງບົດຮຽນນີ້:** ໂດຍກ່າວເຖິງການປະພຶດຂອງຊາອູນແລະການລົງໂທດເຊິ່ງເປັນຜົນທີ່ຕາມມາ.

## ບົດຮຽນ

### ຄຳນຳ

ພຣະເຈົ້າອະນຸຍາດໃຫ້ຊາວອິສຣາເອນມີກະສັດຕາມຄວາມປາຖນາຂອງພວກເຂົາ ແລະຜູ້ປະກາດພຣະທັມຊາມູເອນໄດ້ທົດສົງຊາອູນໃຫ້ເປັນກະສັດຂອງພວກເຂົາ. ການບໍ່ເຊື່ອຟັງຂອງຊາອູນ, ການຕັດສິນໃຈຜິດ, ແລະຄວາມຜິດພາດໃນການຮັບຜິດຊອບຂອງລາວໄດ້ນຳຄວາມຫລົ້ມຈົມມາສູ່ລາວເອງ.

**ຊາອູນ: ການປະພຶດແລະຄວາມຈອງຫອງ** (13:1-22)

ເປັນເຫມືອນດັ່ງຊາມູເອນໄດ້ເຕືອນມາກ່ອນແລ້ວ, ຊາອູນໄດ້ເກນເອົາລູກຊາຍຂອງຊາວອິສຣາເອນເຂົ້າເປັນທະຫານເພື່ອຕຽມໄວ້ສູ້ຮົບ (1 ຊາມູເອນ 8:11-12; 13:2). ຊາວຟີລິສຕິນສ້າງຄວາມແຕກຕື່ນໃນແຜ່ນດິນ. ພວກເຂົາຫ້າມບໍ່ໃຫ້ຊາວເຮັບເຣີສ້າງອາວຸດຍຸທະພັນຕ່າງໆ ແລະພວກເຂົາໃຫ້ຊາວເຮັບເຣີມີເຄື່ອງໃຊ້ໃນການປູກຝັງພຽງເລັກນ້ອຍ (13:19-22). ໂຢນາທານລູກຊາຍຂອງຊາອູນໄດ້ຂ້າຜູ້ບັນຊາການຟີລິສຕິນໃນເມືອງເກບາ, ຊາວຟີລິສຕິນຈຶ່ງເກີດຄວາມຮ້າຍ. ທັງກະສັດຊາອູນກໍໄດ້ທ້ອນໂຮມກຳລັງທະຫານໃຫ້ມາໂຮມກັນທີ່ເມືອງກິນການ ໃນຂນະດຽວກັນທາງຝ່າຍສັດຕຣູກໍໄດ້ທ້ອນໂຮມກຳລັງທະຫານຄືກັນ "ແລະມີທະຫານຫລວງຫລາຍເຫມືອນດັ່ງເມັດດິນຊາຍຢູ່ຝັ່ງທະເລ" (13:5). ຊາວອິສຣາເອນຖືກຈົນຕີຢ່າງຫນັກ ພວກເຂົາຈຶ່ງປົບຫນີໄປລີ້ຊ່ອນຕາມບ່ອນຕ່າງໆ (13:6-7). ສ່ວນປະຊາຊົນແລະທະຫານທີ່ຢູ່ກັບຊາອູນໃນເມືອງກິນການກໍພາກັນຕົກໃຈ, ຊາມູເອນບອກໃຫ້ພວກເຂົາລໍຖ້າລາວຢູ່ທີ່ນັ້ນເຈັດມື້ແລ້ວລາວຈະມາພົບພວກເຂົາ. ແຕ່ລາວບໍ່ໄດ້ມາຫາພວກເຂົາຕາມເວລາເວົ້າກັນໄວ້, ພວກປະຊາຊົນ "ກໍຄ່ອຍໆຫນີຈາກຊາອູນ" (13:8). ກະສັດປະເຊີນກັບບັນຫາ. ທະຫານບໍ່ສາມາດເຂົ້າຫນ້າເສິກກ່ອນຈະມີພິທີເຜົາເຄື່ອງບູຊາ ແລະເຄື່ອງຖວາຍບູຊາເພື່ອຄວາມສາມັກຄີໃຫ້ພຣະຢາໂຮວາ, ແລະຊາອູນບໍ່ມີປະໂລຫິດທີ່ຈະທຳພິທີໃຫ້ລາວໃນຂນະນັ້ນ.ຊາອູນບໍ່ມີຄວາມອົດທົນແລະບໍ່ຕຶກຕອງຢ່າງຖ້ວນທີ່ເລີຍເຮັດໄປຕາມຄວາມຄິດຂອງລາວ. ເຫມືອນດັ່ງກັບພວກເຮົານັ້ນແຫລະບາງຄັ້ງຮູ້ຢູ່ວ່າສິ່ງທີ່ຈະເຮັດໄປນັ້ນເປັນບາບລາວກໍຍັງເຮັດລົງໄປ. ການກະທຳນັ້ນເບິ່ງເຫມືອນກັບວ່າສົມເຫດສົມຜົນ. ພວກທະຫານຂອງລາວກໍຕຽມຈະປົບຢູ່. ລາວຈະຕ້ອງເຮັດອັນໃດອັນນຶ່ງ. ລາວເປັນຜູ້ບັງຄັບບັນຊາທະຫານ ແລະລາວສາມາດເຮັດຕາມໃຈລາວ. ສະນັ້ນ ລາວກໍຖວາຍເຄື່ອງບູຊາເອງ (13:9).

ໃນທັນໃດນັ້ນ ຊາມູເອນກໍມາຮອດ ແລະຊາອູນກໍອອກໄປຕ້ອນຮັບລາວ. ຊາມູເອນເວົ້າຕໍ່ຊາອູນວ່າ "ເປັນການໂງ່ຈ້າທີ່ສຸດທີ່ເຮັດຢ່າງນີ້" (13:13). ຄວາມປະພຶດຂອງຊາອູນເຮັດໃຫ້ເຫັນວ່າລາວມີຄວາມຈອງຫອງແລະບໍ່ເຊື່ອຟັງ. ດ້ວຍ

ເຫດນັ້ນ ລາວຈຶ່ງເສັຽຫມົດ. ຖ້າຫາກວ່າລາວເຊື່ອຟັງ "ພຣະຜູ້ເປັນເຈົ້າຈະໃຫ້ພຣະອົງ ແລະເຊື້ອສາຍຂອງພຣະອົງປົກຄອງຣາຊອານາຈັກອິສຣາເອນຕລອດໄປ" (13:13). ເປັນຄັ້ງແລກທີ່ຊາມູເອນໄດ້ປະກາດເປັນທາງການຊີ້ບົ່ງຕົວກະສັດດາວິດ "ພຣະຜູ້ເປັນເຈົ້າຈະສົ່ງຊາຍຜູ້ນຶ່ງທີ່ພຣະອົງຊົງພໍພຣະທັຍ ແລະຈະຊົງແຕ່ງຕັ້ງໃຫ້ລາວປົກຄອງໄພ່ພົນຂອງພຣະອົງ" (13:14). ເບິ່ງໃນເຫດຜົນນີ່ງ ຊາອູນເປັນຜູ້ຮັບໃຊ້ທອດຈາກຊາມູນເອນຈົນເຖິງເວລາຂອງດາວິດໄດ້ຮັບຕຳແໜ່ງເປັນກະສັດ. ບໍ່ເຫມືອນກັບຊາມູເອນທີ່ມາກ່ອນແລະດາວິດທີ່ມານຳຫລັງ, ຊາອູນບໍ່ເຂົ້າໃຈເຖິງຄວາມຈຳກັດໃນອຳນາດທີ່ລາວໄດ້ຮັບ ສຳລັບພວກເຂົາທັງສອງຄົນນັ້ນພວກເຂົາເຂົ້າໃຈ. ອັນທີ່ລາວພາດໄປນັ້ນ ແມ່ນລາວບໍ່ໄດ້ໄວ້ວາງໃຈໃນພຣະເຈົ້າທີ່ຈະນຳຊັຍຊະນະມາໃຫ້. ຄັ້ງນີ້ເປັນຄັ້ງທີ່ນຶ່ງທີ່ລາວໄດ້ຜິດພາດໄປ ເນື່ອງຈາກວ່າ ລາວເຮັດຕາມຄວາມພະຍາຍາມຂອງລາວເອງວ່າລາວເປັນກະສັດ.

**<u>ຊາອູນ: ຜູ້ຊັຍຊະນະແລະຜູ້ຊົ່ວຮ້າຍ</u>** (13:22-14:52)
ໃນຂນະທີ່ມີການຂັດແຍ່ງລະຫວ່າງຊາວຟີລິສຕິນແລະຊາວອິສຣາເອນ, ມີວັນນຶ່ງໂຢນາທານແລະຜູ້ທີ່ຖືອາວຸດຂອງລາວໄດ້ຊອນກັນວ່າ "ພວກເຮົາຂ້າມໄປຫາຄ້າຍພັກຂອງພວກຟີລິສຕິນເທາະ" (14:1). ໜ້າທີ່ຂອງຜູ້ທີ່ຖືອາວຸດນັ້ນເຫນືອກວ່າຄົນໃຊ້ ຜູ້ທີ່ຖືອາວຸດເປັນເຫມືອນເພື່ອນເປັນເພື່ອນຕາຍໃນສນາມຣົບ. ດາວິດເຄີຍເປັນຜູ້ທີ່ຖືອາວຸດໃຫ້ຊາອູນ (16:21).

ທັງທີ່ພວກເຂົາມີແຕ່ສອງຄົນເທົ່ານັ້ນ, ໂຢນາທານໄວ້ວາງໃຈໃນພຣະເຈົ້າເພື່ອຄວາມຊັຍຊະນະໂດຍກ່າວວ່າ "ຖ້າພຣະອົງຊົງຊ່ອຍເຫລືອກໍບໍ່ມີສິ່ງໃດຈະສາມາດຕ້ານທານໄດ້ ເຖິງພວກເຮົາມີນ້ອຍຄົນກໍຕາມ" (14:6). ໂຢນາທານໄດ້ທູນຂໍໝາຍສຳຄັນຈາກພຣະຢາໂຮວາ. ພວກເຂົາຈະປາກົດຕົວໃຫ້ຊາວຟີລິສຕິນເຫັນ. ຖ້ານັກຣົບຂອງຊາວຟີລິສຕິນບອກວ່າພວກເຂົາຈະມາຕີໂຢນາທານແລະຜູ້ຕິດຕາມ ທັງສອງກໍຈະບໍ່ໄປຫາພວກເຂົາ. ຖ້າພວກນັກຣົບທ້າທາຍໃຫ້ພວກເຂົາໄປຫາ ພວກເຂົາກໍຈະໄປ ເພາະຄຳເວົ້າຢ່າງນັ້ນເປັນເຄື່ອງໝາຍວ່າ ພຣະຜູ້ເປັນເຈົ້າຈະໃຫ້ພວກເຂົາໄດ້ຮັບຊັຍຊະນະ (14:7-11). ຊາວຟີລິສຕິນໄດ້ຮ້ອງຂຶ້ນມາວ່າ "ຈົ່ງຂຶ້ນມານີ້ ພວກຂ້ອຍມີເຣື່ອງຈະບອກເຈົ້າ" ພາສາອັງກິດໃຊ້ຄຳວ່າ "ຈົ່ງຂຶ້ນມາຫາພວກເຮົາແລະພວກເຮົາຈະສັ່ງສອນພວກເຈົ້າ" (14:12). ພວກເຂົາໄດ້ຂ້າຊາວຟີລິສຕິນຕາຍປະມານຊາວຄົນ (14:13-14). ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ທະຫານຂອງຊາວຟີລິສຕິນສັບສົນແລະຕົກໃຈ ແລະພວກເຂົາແລ່ນສັບສົນໄປທຸກທິນທຸກແຫ່ງ. ເມື່ອຊາອູນເຫັນເຫດການຢ່າງນີ້ ລາວກໍສັ່ງໃຫ້ນັບຈຳນວນທະຫານຂອງລາວ ແລະພົບວ່າໂຢນາທານແລະຜູ້ທີ່ຖືອາວຸດຂອງລາວບໍ່ໄດ້ຢູ່ນຳພວກເຂົາ (14:15-17). ຊາອູນຈຶ່ງສວຍໂອກາດພາທະຫານຂອງລາວເຂົ້າໄປໃນສນາມຣົບ ເພື່ອໂຈມຕີພວກຟີລິສຕິນທີ່ກຳລັງຕົກຢູ່ໃນຄວາມສັບສົນແລະຂ້າກັນເອງ (14:20).

ໃນເຊົ້າວັນນັ້ນຊາອູນໄດ້ອອກຄຳສັ່ງເດັດຂາດແລະທັງສາບານວ່າ "ໃນມື້ນີ້ຖ້າຜູ້ໃດກິນເຂົ້າກ່ອນຕາເວັນຕົກ ແລະກ່ອນຂ້ອຍໄດ້ແກ້ແຄ້ນສັດຕຣູຂອງຂ້ອຍ ຂໍໃຫ້ຄຳສາບແຊ່ງຕົກຖືກຜູ້ນັ້ນ" (14:24). ພວກເຂົາກໍບໍ່ກ້າກິນຫຍັງເລີຍ ແມ່ນແຕ່ພວກເຂົາເຫັນຮັງເຜີ້ງຢູ່ທຸກໆບ່ອນ ພວກເຂົາກໍຍັງບໍ່ກ້າເອົານ້ຳເຜີ້ງມາກິນ. ແຕ່ໂຢນາທານບໍ່ໄດ້ຍິນຄຳສັ່ງຂອງພໍ່ລາວລາວຈຶ່ງເອົາໄມ້ເທົ້າໄປແຍ່ຮັງເຜີ້ງແລະເອົານ້ຳເຜີ້ງມາກິນ ແລະລາວກໍຮູ້ສຶກມີແຮງຂຶ້ນມາ. ຕໍ່ມາລາວຈຶ່ງຮູ້ວ່າ ທີ່ພວກທະຫານບໍ່ມີເຫື່ອມີແຮງກໍຍ້ອນວ່າພວກເຂົາບໍ່ກ້າກິນອາຫານ ເພາະວ່າພວກເຂົາຖືກຂູ່ເຂັນໃນຄຳສາບແຊ່ງຂອງພໍ່ຂອງຕົນ. ພວກທະຫານຮູ້ວ່າ ຖ້າບໍ່ແມ່ນຍ້ອນຄຳສາບແຊ່ງນາບຂູ່ພວກເຂົາບໍ່ໃຫ້ກິນອາຫານນັ້ນ ພວກເຂົາຄົງຈະມີແຮງຂ້າພວກຟີລິສຕິນຫລາຍຂຶ້ນ (14:25-30).

ຄຳສັ່ງຊື່ງເປັນຄຳສາບານອັນບໍ່ເປັນປໂຍດນຳພາໃຫ້ເກີດການບໍ່ເຊື່ອຟັງ. ຊາວອິສຣາເອນໄດ້ເອົາແກະແລະງົວທີ່ຍຶດໄດ້ມາຂ້າກິນ. ພວກເຂົາກິນຊີ້ນທີ່ຂ້າບໍ່ໄດ້ເອົາເລືອດອອກ ແລະບໍ່ໄດ້ເອົາມາເປັນເຄື່ອງຖວາຍບູຊາ (ໃຫ້ເບິ່ງ ລະບຽບພວກເລວີ 17:10-14). ເມື່ອຊາອູນຮູ້ວ່າປະຊາຊົນເຮັດບາບ ລາວຈຶ່ງບອກໃຫ້ພວກເຂົາເອົາສັດມາຂ້າແລະເອົາເລືອດ

ອອກ, ລາວກໍສ້າງແທ່ນບູຊາຖວາຍແດ່ອົງພຣະຜູ້ເປັນເຈົ້າ (14:31-35). ຕໍ່ມາ ລາວຕັດສິນໃຈໄປຕາມລ້າພວກຟີລິສຕິນອີກ. ປະໂລຫິດເຕືອນຊາອູນໃຫ້ຖາມພຣະເຈົ້າເສັຽກ່ອນ, ແຕ່ພຣະເຈົ້າບໍ່ຕອບລາວ. ແນ່ນອນຕ້ອງມີຜູ້ໃດຜູ້ນຶ່ງເຮັດບາບ. ຊາອູນຮ້ອງຂໍພຣະເຈົ້າໃຫ້ບອກທາງສລາກ ກໍພົບວ່າໂຢນາທານເປັນຜູ້ທີ່ຝ່າຝືນ. ເມື່ອຖາມໂຢນາທານ, ລາວກໍຕອບວ່າລາວໄດ້ກິນນ້ຳເຜີ້ງ. ຊາອູນຕຽມຈະຂ້າລູກຂອງລາວ, ແຕ່ປະຊາຊົນໄດ້ຊ່ອຍໂຢນາທານໄວ້ ໃນເມື່ອລາວໄດ້ນຳຊັຍຊະນະມາໃຫ້ອິສຣາເອນ (14:41-45).

ຄັ້ງນີ້ເປັນຄັ້ງທີ່ສອງທີ່ລາວໄດ້ຜິດພາດໄປ ເນື່ອງຈາກວ່າ ລາວເຮັດຕາມຄວາມພະຍາຍາມຂອງລາວເອງວ່າລາວເປັນກະສັດ. ຄຳສັ່ງທີ່ເປັນຄຳສາບານຊົ່ວນຳພາໃຫ້ທະຫານເຮັດບາບແລະເກືອບເສັຽລູກຂອງລາວເອງ. ຄຳສາບແຊ່ງຂອງລາວເຮັດໃຫ້ພວກອິສຣາເອນບໍ່ກ້າກິນອາຫານແລະພວກເຂົາບໍ່ມີແຮງຂ້າພວກຟີລິສຕິນໄດ້ຫລາຍຂື້ນ.

<u>ຊາອູນ: ຄວາມໂສກເສົ້າເສັຽໃຈແລະຖືກປະຕິເສດ</u> (15:1-35)

ຊາມູເອນຜູ້ປະກາດພຣະທັມຂອງພຣະຜູ້ເປັນເຈົ້າໄດ້ສັ່ງໃຫ້ຊາອູນໄປລົງໂທດຊາວອາມາເລັກໃນສິ່ງທີ່ພວກເຂົາໄດ້ກະທຳຕໍ່ຊາວອິສຣາເອນມາກ່ອນ (ອົບພະຍົບ 17:8-15; ຈົດບັນຊີ 14:41-45). ພຣະເຈົ້າບອກໃຫ້ຊາອູນວ່າ "ຈົ່ງໄປຕໍ່ສູ້ຊາວອາມາເລັກແລະທຳລາຍທຸກຢ່າງທີ່ເຂົາມີ ຢ່າເມດຕາປານີເຂົາເລີຍ ຈົ່ງຂ້າຜູ້ຊາຍ, ຜູ້ຍິງ, ເດັກນ້ອຍແລະເດັກອ່ອນທຸກຄົນ ພ້ອມທັງງົວ, ແກະ, ອູດແລະລໍ" (1 ຊາມູເອນ 15:3). ສົງຄາມນີ້ເປັນສົງຄາມກວດລ້າງ ພາສາອັງກິດໃຊ້ຄຳວ່າ a holy war. ຊາອູນຈົມຕີຊາວອາມາເລັກ (15:4-7). ພຣະເຈົ້າໃຫ້ອິສຣາເອນຊັຍຊະນະ. ຊາວອິສຣາເອນບໍ່ໄດ້ຂ້າ
ໝົດທຸກຄົນ ແຕ່ພວກເຂົາໄດ້ຈັບເອົາກະສັດ. ພວກເຂົາຂ້າສັດເກືອບໝົດທຸກຕົວ "ແຕ່ໄດ້ຈັບເອົາເຈົ້າຊີວິດມາ ຊາອູນແລະທະຫານຂອງພຣະອົງໄດ້ປ່ອຍໃຫ້ອາກາກມີຊີວິດຢູ່ ແລະບໍ່ໄດ້ຂ້າແກະ ງົວໂຕທີ່ງາມທີ່ສຸດ" (15:8-9).

ແນ່ນອນ ພຣະເຈົ້າຮູ້ຄວາມບາບຂອງຊາອູນແລະພຣະອົງໄດ້ບອກຊາມູເອນ. ພຣະເຈົ້າ "ເສັຽໃຈຫລາຍ" ທີ່ໄດ້ແຕ່ງຕັ້ງຊາອູນໃຫ້ເປັນກະສັດ (1 ຊາມູເອນ 15:10). ຊາອູນໄດ້ອະທິຖານຮ້ອງຂໍກັບພຣະເຈົ້າໝົດຄືນ, ແຕ່ກໍບໍ່ໄດ້ປໂຍດຫຍັງເລີຍ. ແຕ່ເຊົ້າວັນໃໝ່ ລາວໄປນຳຫາຊາອູນ ລາວພົບວ່າຜູ້ນຳຈອງຫອງເດີນທາງໄປເມືອງກາເມນ ເພື່ອໄປສ້າງອານຸສາວະລີໄວ້ສຳລັບເພີ່ນເອງ-ບໍ່ແມ່ນໃຫ້ພຣະຢາໂຮວາ (15:12).

ໃນທີ່ສຸດຊາມູເອນກໍໄປພົບຊາອູນ. ລາວກໍທຳຄວາມຄຳນັບແລະກ່າວວ່າ "ທ່ານຊາມູເອນເອີຍ ຂໍພຣະຜູ້ເປັນເຈົ້າຊົງອ່ອຍພອນທ່ານເຖີ້ນ ເຮົາໄດ້ເຊື່ອຟັງຄຳສັ່ງຂອງພຣະເຈົ້າແລ້ວ" (15:13). ແຕ່ລາວບໍ່ສາມາດປົດບັງຄຳຕົວະຂອງລາວໄດ້. ສຽງຂອງແກະແລະງົວໄດ້ບອກຊາມູເອນ (15:14). ບາງຄັ້ງພວກເຮົາກໍແກ້ຕົວເໝືອນກັບຊາອູນ. ລາວຖີ້ມໂທດໃສ່ພວກທະຫານ. ລາວແກ້ຕົວໃຫ້ພວກເຂົາ "ພວກເຂົາໄດ້ເອົາຝູງແກະຝູງງົວທີ່ດີໄວ້ ເພື່ອຖວາຍເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຂອງທ່ານ" (15:15).

ຊາມູເອນບໍ່ຕ່າງຫຍັງກັບພໍ່ແມ່ ຫລືນາຍຄຣູໄດ້ຍິນຄຳແກ້ຕົວຫລາຍເທື່ອຫລາຍທີ, ລາວອິ່ມຫລາຍ. ລາວເລີຍເວົ້າວ່າ "ຢຸດກ່ອນ" (15:16). ຕໍ່ມາ ລາວໄດ້ກ່າວຖ້ອຍຄຳຂອງພຣະຜູ້ເປັນເຈົ້າ. ຜູ້ປະກາດພຣະທັມໄດ້ກ່າວເຖິງພຣະຄຸນຂອງພຣະເຈົ້າທີ່ໄດ້ຫົດສົງຊາອູນໃຫ້ເປັນກະສັດ ແລະມອບໜ້າທີ່ໃຫ້ໄປທຳລາຍພວກຄົນຊົ່ວຮ້າຍໃນເມືອງອາມາເລັກ (15:17-18). ທ້າຍສຸດ ຊາມູເອນໄດ້ຖາມຊາອູນວ່າ "ເປັນຫຍັງພຣະອົງບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ? ເປັນຫຍັງຈຶ່ງຍຶດເອົາສິ່ງຂອງເຫລົ່ານີ້? ແລະໄດ້ເຮັດໃນສິ່ງທີ່ພຣະຜູ້ເປັນເຈົ້າບໍ່ຊົງພໍພຣະທັຍ" (15:19).

ຊາອູນພະຍາຍາມໃຊ້ເຄື່ອງຖວາຍບູຊາເປັນສິ່ງປົດບັງບາບຂອງລາວ. ລາວໃຊ້ສາສນາເຮັດໃຫ້ງາມແຕ່ທາງນອກ ແທນທີ່ລາວຈະມີສາຍສຳພັນພາຍໃນກັບພຣະເຈົ້າ. ລາວຍັງຕໍ່ວ່າຕື່ມອີກວ່າລາວໄດ້ເຊື່ອຟັງພຣະເຈົ້າແລ້ວ. ລາວໄດ້ຂ້າຊາວອາມາເລັກທຸກຄົນເວັ້ນໄວ້ແຕ່ກະສັດຂອງພວກເຂົາເຫມືອນກັບນັກຮົບທີ່ໄດ້ຮັບຊັຍຊະນະກະທຳກັນມາ. ແລະລາວໄດ້ນຳສັດທີ່ອ້ວນພີດີງາມມາເພື່ອຖວາຍເປັນເຄື່ອງບູຊາແດ່ພຣະເຈົ້າ (15:20-21).

ຫນ້າເສົ້າໃຈທີ່ສຸດ ເບິ່ງເຫມືອນກັບວ່າຊາອູນເບິ່ງບໍ່ເຫັນຄວາມຜິດໃນການກະທຳຂອງລາວເລີຍ. ຊາມູເອນຕອບວ່າ "ພຣະຜູ້ເປັນເຈົ້າຕ້ອງການຢາກໃຫ້ມະນຸດເຊື່ອຟັງ ຫລືຖວາຍບູຊາແດ່ພຣະອົງ ສິ່ງທີ່ຖືກຄື ການເຊື່ອຟັງພຣະອົງດີກວ່າເອົາແກະຕົວງາມທີ່ສຸດມາຖວາຍເປັນເຄື່ອງບູຊາແດ່ພຣະອົງ" (15:22). ຊາມູເອນກ່າວຄຳສຸດທ້າຍອີກວ່າ "ຍ້ອນວ່າພຣະອົງໄດ້ປະຖິ້ມຄຳສັ່ງຂອງພຣະເຈົ້າ ພຣະເຈົ້າຈຶ່ງປົດພຣະອົງອອກຈາກຕຳແຫນ່ງເຈົ້າຊີວິດ" (15:23).

ຊາອູນຍອມຮັບສາຣະພາບແລະຮ້ອງຂໍໃຫ້ພຣະເຈົ້າອະພັຍລາວ. ທີ່ລາວເຮັດໄປນັ້ນກໍຍ້ອນວ່າລາວຢ້ານທະຫານຂອງລາວ ຈຶ່ງປ່ອຍໃຫ້ພວກເຂົາເຮັດໄປຕາມຄວາມໂລບຂອງພວກເຂົາ. ລາວຮ້ອງຂໍໃຫ້ຊາມູເອນອະພັຍໃຫ້ແກ່ລາວ ແລະກັບຄືນໄປກັບລາວ ເພື່ອລາວຈະໄດ້ນະມັສການພຣະຜູ້ເປັນເຈົ້າ (15:24-25). ຄວາມເສັຽໃຈແລະຮ້ອງຂໍໃຫ້ອະພັຍນັ້ນສາຍເກີນໄປເສັຽແລ້ວ. ຊາມູເອນບໍ່ສາມາດຈະຫັນໂນ້ມກັບຄືນໄດ້ "ເພາະພຣະອົງໄດ້ປະຖິ້ມຄຳສັ່ງຂອງພຣະຜູ້ເປັນເຈົ້າແລ້ວ ແລະພຣະເຈົ້າໄດ້ຊົງປົດພຣະອົງອອກຈາກຕຳແຫນ່ງເຈົ້າຊີວິດຂອງພວກອິສຣາເອນ" (15:26). ເມື່ອຊາມູເອນຈະຫັນຫລັງຫນີໄປ ຊາອູນຈັບສາຍເສື້ອຄຸມຂອງລາວໄວ້. ແຕ່ສາຍເສື້ອຄຸມຂາດ ສິ່ງເກີດຂຶ້ນນັ້ນ ເປັນສັນຍາລັກໃຫ້ເຫັນວ່າ ພຣະເຈົ້າຈະຍົກເອົາຣາຊອານາຈັກອິສຣາເອນຫນີຈາກກະສັດຊາອູນ. ລາວກ່າວວ່າ "ພຣະເຈົ້າອົງຍິ່ງໃຫຍ່ຂອງຊາວອິສຣາເອນບໍ່ຕົວະ ຫລືບໍ່ຊົງປ່ຽນພຣະທັຍເຫມືອນມະນຸດ" (15:27-29).

ເຖິງຢ່າງໃດກໍຕາມ ຊາມູເອນກໍຍັງເອົາຫນ້າຊາອູນໄວ້. ລາວກັບໄປນຳຊາອູນ ເພື່ອໄປນະມັສການພຣະເຈົ້າ. ໃນທີ່ນັ້ນຊາມູເອນໄດ້ທຳຫນ້າທີ່ຂອງຊາອູນທີ່ຕົກຄ້າງຢູ່ ຄືລາວໄດ້ຂ້າອາກາກະສັດຂອງຊາວອາມາເລັກເສັຽ (15:30-33). ແລ້ວລາວກໍກັບບ້ານຂອງລາວ ແລະຊາອູນກໍກັບບ້ານຂອງລາວຄືກັນ. ຕໍ່ຈາກນັ້ນ ຜູ້ປະກາດພຣະທັມຂອງພຣະເຈົ້າແລະກະສັດທີ່ພຣະເຈົ້າເຄີຍເລືອກເອົານັ້ນກໍບໍ່ໄດ້ພົບກັນອີກ.

ຊາມູເອນບໍ່ມີຄວາມສຸກໃຈເລີຍ "ແຕ່ເພິ່ນກໍເສົ້າສລົດໃຈນຳພຣະອົງຫລາຍ ສ່ວນພຣະຜູ້ເປັນເຈົ້າກໍຊົງເສັຽພຣະທັຍ" (15:34-35). ຊາອູນຄົງຈະສົງສັຍວ່າ ແມ່ນຫຍັງຫນໍຈະເປັນໄປ.

ແມ່ນຫຍັງເກີດຂຶ້ນ? ເປັນຫຍັງຈຶ່ງເປັນຮ້າຍຢ່າງນີ້? ເປັນຫຍັງພຣະເຈົ້າເລືອກຊາອູນໃຫ້ເປັນກະສັດ ແລະກໍປະຕິເສດລາວ? ຄວາມບາບຂອງລາວເປັນຮ້າຍປານນັ້ນບໍຈຶ່ງສູນເສັຽຣາຊອານາຈັກຂອງລາວ? ເປັນຫຍັງພຣະເຈົ້າຈຶ່ງບໍ່ໃຫ້ໂອກາດລາວອີກ ໃນເມື່ອລາວກັບໃຈໃຫມ່? ເປັນຫຍັງເທື່ອນີ້ ຄືເທື່ອທີສາມລາວຈຶ່ງບໍ່ມີໂອກາດອີກ?

ປະສົບການຂອງຊາອູນໄດ້ສອນພວກເຮົາວ່າ ຊາອູນມີທາງເລືອກ. ພວກເຮົາກໍມີເຫມືອນກັນ. ແຕ່ພວກເຮົາມີໂອກາດເລືອກຫລາຍກວ່າ ຊາອູນບໍ່ມີ. ພວກເຮົາມີພຣະຜູ້ໂຜດໃຫ້ພົ້ນແລະພຣະວິນຍານຂອງພຣະອົງຊົງນຳ. ຖ້າພວກເຮົາໄວ້ວາງໃຈແລະເຊື່ອໃນພຣະອົງ ພວກເຮົາກໍຈະບໍ່ຖືກຫລອກລວງໃນເຫດການທີ່ວ່າ "ແມ່ນຫຍັງຫນໍຈະເປັນໄປ."

## <u>ຄຳຖາມ</u>

1. ແມ່ນຫຍັງຄືຄວາມຜິດພາດຂອງຊາອູນໃນການນຳພາຂອງລາວ? ເຫດການເຫລົ່ານັ້ນນຳລາວໄປສູ່ຄວາມຫລົ້ມຈົມໄດ້ຢ່າງໃດ? ມີຜູ້ນຳຄົນອື່ນຄົນໃດແດ່ທີ່ໄດ້ເຮັດຜິດພາດຄືກັນ?

2. ຊາອູນໄດ້ສະແດງການໂຕ້ຕອບຢ່າງໃດ ເມື່ອກ່າວເຖິງຄວາມຜິດບາບຂອງລາວໃນການກ້າວກ່າຍໜ້າທີ່ຂອງປະໂລຫິດ, ຄວາມຜິດຂອງຄຳສາບແຊ່ງ, ແລະນຳເອົາສິ່ງທີ່ຫວງຫ້າມກັບມາ? ພວກເຮົາຈະສະແດງການຕອບໂຕ້ຢ່າງໃດເມື່ອຖືກກ່າວຄວາມຜິດບາບ?
3. ພຣະເຈົ້າແລະຊາມູເອນໃຫ້ຄວາມເປັນທັມແກ່ຊາອູນບໍ່? ເປັນຫຍັງແລະເປັນຫຍັງບໍ່?
4. ເມື່ອໃດການກັບໃຈນັ້ນຊ້າເກີນໄປ?
5. ພຣະເຈົ້າເວົ້າກັບຊາມູເອນວ່າ, "ເຮົາເສັຽໃຈຫລາຍທີ່ໄດ້ແຕ່ງຕັ້ງໃຫ້ຊາອູນເປັນເຈົ້າຊີວິດ" (1 ຊາມູເອນ 15:11). ບາງຄັ້ງພວກເຮົາໃຊ້ສິດຂອງພວກເຮົາໃນທາງທີ່ຜິດ ຈຶ່ງເຮັດໃຫ້ພຣະເຈົ້າເສັຽໃຈໄດ້ຢ່າງໃດ?
6. ມີຫຍັງຈະເກີດຂຶ້ນກັບຊາອູນ ຖ້າຫາກວ່າລາວເຊື່ອຟັງ? ພວກເຮົາຈະໃຊ້ຊີວິດຢູ່ຢ່າງໃດຈຶ່ງຈະບໍ່ມີຄຳວ່າ "ແມ່ນຫຍັງໜໍຈະເປັນໄປ"?

*ສຈ. ບຸນເຮັ່ງ ພົງປຣະພັນ*

# ບົດຮຽນທີ 7
# ຮູບຮ່າງແລະຈິດໃຈ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ຊາມູເອນທີນຶ່ງ 16: 1-13, 21-23

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 16

**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຈົ້າບໍ່ໃຫ້ພວກເຮົາເບິ່ງຮູບຮ່າງພາຍນອກ ແຕ່ໃຫ້ເບິ່ງທີ່ຈິດໃຈ.

**ຄໍາຖາມເພື່ອການສໍາຣວດ:** ຈະມີຫຍັງຜິດບໍ່ ຖ້າພວກເຮົາບອກວ່າ "ຮູບພາບສໍາຄັນກວ່າທຸກຢ່າງ"?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະເອົາຕົວຢ່າງຈາກພຣະເຈົ້າໃນການເບິ່ງທີ່ຈິດໃຈ ແທນທີ່ຈະເບິ່ງແຕ່ຮູບຮ່າງພາຍນອກ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວພຣະເຈົ້າມີສ່ວນໃນການຕັດສິນໃຈ ແລະຮັບໃຊ້.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ວຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

## ຄໍານໍາ

ຄຣິສຕະຈັກຈະຕ້ອງຮຽນເບິ່ງຄົນ ເໝືອນທີ່ພຣະເຈົ້າຊົງເບິ່ງ ໂດຍການຊອກຫາລັກສະນະທີ່ພຣະເຈົ້າເຫັນວ່າສໍາຄັນ ແລະເລືອກຜູ້ນໍາໂດຍການເບິ່ງຈິດໃຈຂອງພວກເຂົາ.

ໃນສມັຍນີ້, ພວກເຮົາສແວງຫາຜູ້ນໍາທີ່ມີຄວາມສລາດ, ມີນິມິດໝາຍ, ມີຄວາມສໍາເຣັດ,ແລະມີຄວາມສາມາດໃນການນໍາພາຜູ້ອື່ນ. ຜູ້ນໍາໃນອະດີດຫລາຍໆຄົນໄດ້ປ່ຽນແປງຊີວິດຂອງຝູງຊົນຢ່າງຫລວງຫລາຍດ້ວຍວິທີທາງຕ່າງໆຂອງພວກ ເຂົາ; ການປ່ຽນແປງໄດ້ເກີດຂຶ້ນເພາະຄວາມສໍາເຣັດຜົນ ຫລືຄວາມຜິດພາດຂອງພວກຜູ້ນໍາເຫລົ່ານັ້ນ. ຜູ້ນໍາຫລາຍຄົນ ໄດ້ເປັນຜູ້ສ້າງປະວັດສາດ ໃນຂະນະທີ່ປະວັດສາດກໍໄດ້ປ່ຽນແປງພວກຜູ້ນໍາທັງຫລາຍເຊັ່ນກັນ.

ໃນສັຕວັດນີ້ ພວກເຮົາກໍໄດ້ເຫັນຜູ້ນໍາຫລາຍໆຄົນທີ່ໄດ້ຖືກເລືອກໃຫ້ເປັນຜູ້ນໍາເພາະເຂົາມີຊື່ທີ່ຄົນທັງຫລາຍຮູ້ຈັກດີແລະມີຖານະດີໃນສັງຄົມ; ພວກເຮົາໄດ້ເບິ່ງຂ້າມກຽດສັກສີ, ຄວາມຖ່ອມຕົວ, ແລະຄວາມສັດຊື່ຂອງພວກເຂົາ; ພວກເຮົາລືມເບິ່ງສ່ວນເລິກໃນຈິດໃຈຂອງພວກເຂົາ.

## ມີຫຍັງຕໍ່ໄປ (16:1)

ການເລືອກດາວິດມາເປັນເຈົ້າຊີວິດຂອງອິສຣາເອນເກີດຂຶ້ນໄດ້ເພາະກະສັດຊາອູນບໍ່ເຊື່ອຟັງພຣະເຈົ້າ. ພຣະຜູ້ເປັນເຈົ້າໄດ້ຊົງກ່າວໄວ້ໃນຕອນນີ່ງວ່າ "ເຮົາເສັຽໃຈຫລາຍທີ່ໄດ້ແຕ່ງຕັ້ງໃຫ້ຊາອູນເປັນເຈົ້າຊີວິດ ລາວໄດ້ຫັນໜີຈາກເຮົາແລະບໍ່ໄດ້ເຊື່ອຟັງຄຳສັ່ງຂອງເຮົາ" (ຊາມູເອນນື່ງ 15:10-11). ຜູ້ປະກາດພຣະທັມຊາມູເອນໄດ້ໂສກເສົ້າເສັຽໃຈຕລອດວັນຕລອດຄືນເພາະການກະທຳຂອງກະສັດຊາອູນ.

ມາເຖິງຕອນນີ້, ພຣະຜູ້ເປັນເຈົ້າກໍຊົງອິດເໝື່ອຍໃນການໂສກເສົ້າຂອງຊາມູເອນ. ພຣະອົງຊົງຕັດກັບເຂົາວ່າ "ເຈົ້າຍັງຈະໂສກເສົ້າສລົດໃຈນຳຊາອູນນັ້ນອີກດົນປານໃດເຮົາໄດ້ປົດລາວອອກຈາກຕຳແໜ່ງເຈົ້າຊີວິດຂອງອິສຣາເອນແລ້ວ." ພຣະອົງຊົງສັ່ງຊາມູເອນໃຫ້ຕຽມເອົານ້ຳມັນຊະໂລມ ແລະອອກເດີນທາງ.

ມີເວລາສຳລັບການໂສກເສົ້າເສັຽໃຈ ແລະມີເວລາສຳລັບການກ້າວໜ້າຕໍ່ໄປພາຍໃຕ້ການນຳພາຂອງພຣະເຈົ້າ. ພຣະເຈົ້າຊົງແຕ່ງຕັ້ງຊາມູເອນໃຫ້ໄປທີ່ເມືອງເບັດເລເຮັມ ແລະໃຫ້ໄປບ້ານຂອງ ອີຊາຍ (ເຢຊີ) ເພື່ອຈະຊະໂລມກະສັດອົງໃໝ່ສຳລັບອິສຣາເອນ.

## ຮ້າຍ, ໂສກເສົ້າ, ບໍ່ດີໃຈ, ແລະຢ້ານກົວ (16:2-3)

ຊາມູເອນຮູ້ດີວ່າການທີ່ຈະໄປຊະໂລມກະສັດອົງໃໝ່ໃນຂະນະທີ່ເຈົ້າຊີວິດອົງເກົ່າຍັງຄອງບັນລັງຢູ່ນັ້ນ ຈະມີພັຍອັນຕະລາຍຕໍ່ຕົວເອງທີ່ສຸດ. ຊາມູເອນ ເອງເປັນຄົນຊະໂລມຊາອູນໃຫ້ເປັນກະສັດ ແລະຕອນນີ້ຊາອູນກໍຍັງມີຊີວິດຢູ່. ເຮັດແນວໃດຊາມູເອນຈະສາມາດຊະໂລມກະສັດອົງໃໝ່ໄດ້ຢ່າງປອດພັຍ?

ຊາມູເອນມີຄວາມສັບສົນຫລາຍໃນຕອນນີ້; ລາວຮູ້ສຶກໃຈຮ້າຍ, ຮູ້ສຶກໂສກເສົ້າ, ຮູ້ສຶກບໍ່ຍິນດີ,ແລະຮູ້ສຶກຢ້ານກົວ. ລາວບໍ່ຮູ້ຈະເຮັດແນວໃດດີ. ພຣະເຈົ້າໄດ້ຊົງໃຫ້ວິທີກັບຊາມູເອນໂດຍຊົງສັ່ງໃຫ້ລາວເອົາງົວນ້ອຍໄປນຳນື່ງໂຕ ເພື່ອເປັນເຄື່ອງຖວາຍບູຊາ ແລະໃຫ້ເຊີນ ອີຊາຍໄປຮ່ວມໃນພິທີດ້ວຍ.

## ພະລັງຂອງອິດທິພົນ (16: 4-5)

ເມື່ອຊາມູເອນໄປເຖິງເມືອງເບັດເລເຮັມ, ພວກເຖົ້າແກ່ທັງຫລາຍກໍເກີດຄວາມຢ້ານກົວທີ່ໄດ້ເຫັນຜູ້ປະກາດພຣະທັມ. ພວກເຂົາຄິດວ່າທ່ານມາດ້ວຍອຳນາດຂອງກະສັດຊາອູນ. ຄວາມຢ້ານກົວຂອງຄົນທັງຫລາຍໄດ້ບອກເຖິງອຳນາດຂອງກະ ສັດຊາອູນຜູ້ຊົງມີອິດທິພົນເໜືອພວກເຂົາໃນຖານະຂອງເຈົ້າຊີວິດ. ບໍ່ມີໃຜທີ່ຢາກຈະຢູ່ໃຈກາງຂອງການຕໍ່ສູ້ລະຫວ່າງ ກະສັດຊາອູນ ແລະຜູ້ປະກາດພຣະທັມຊາມູເອນ.

ຊາມູເອນກໍໄດ້ອະທິບາຍການມາຂອງເຂົາໃນຄັ້ງນີ້ໃຫ້ທຸກຄົນຟັງ. ແລ້ວອີຊາຍແລະລູກຊາຍຂອງລາວກໍຍິນດີຮັບຄຳເຊື້ອເຊີນຂອງຊາມູເອນ.

## ເນື້ອໃນຂອງເຣື່ອງ (16:6-7)

ການພົບພໍ້ກັນຣະຫວ່າງຊາມູເອນແລະພວກລູກຊາຍຂອງອີຊາຍໄດ້ເປີດເຜີຍວິທີທີ່ພຣະເຈົ້າຊົງເບິ່ງມະນຸດ ແລະສິ່ງທີ່ພຣະອົງຖືວ່າສຳຄັນໃນຊີວິດຂອງຜູ້ນຳສຳລັບໄພ່ພົນຂອງພຣະອົງ. ແມ່ນແຕ່ຊາມູເອນເອງກໍເບິ່ງຄົນຈະເປັນຜູ້ນຳຕາມທັສນະທີ່ພວກເຮົາທັງຫລາຍເຄີຍໃຊ້ກັນໃນການເລືອກຜູ້ນຳ.

ພໍຫລຽວເຫັນເອລີອາບລູກຂອງອີຊາຍ ຊາມູເອນຄິດວ່າເຂົາຜູ້ນີ້ຄົງຈະເປັນຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້ ເພາະຮູບຮ່າງອັນຈົບງາມຂອງລາວ; ແຕ່ພຣະເຈົ້າບໍ່ໄດ້ຊົງເລືອກເອົາເອລີອາບ. ພຣະຜູ້ເປັນເຈົ້າໄດ້ຊົງສອນຊາມູເອນໃນການເລືອກຄົນທີ່ຈະນໍາພາຊົນຊາດອິສຣາເອນ. ພຣະອົງຍັງຊົງໃຊ້ບົດຮຽນນີ້ເພື່ອສອນພວກເຮົາທັງຫລາຍເປັນເວລາຫລາຍກວ່າສາມພັນປີຜ່ານມາແລ້ວ. ພຣະເຈົ້າຊົງຕັດວ່າ "ການຕັດສິນໃຈຂອງເຮົາບໍ່ຄືມະນຸດ ມະນຸດເບິ່ງແຕ່ສິ່ງທີ່ຢູ່ຂ້າງນອກເທົ່ານັ້ນ ແຕ່ວ່າເຮົາເບິ່ງພາຍໃນຈິດໃຈ" (16:7).

ຄວາມເຂົ້າໃຈຄໍາວ່າ "ຈິດໃຈ" ຂອງຄົນເຮັບເຣີ ອາດຈະແຕກຕ່າງກັບຄວາມເຂົ້າໃຈຂອງພວກເຮົາໃນສມັຍນີ້. "ຈິດໃຈ" ສໍາລັບພວກເຂົາເຈົ້າໝາຍເຖິງ ຈຸດສໍາຄັນຂອງຕົວເຮົາ. ຈິດໃຈໝາຍເຖິງຄວາມນຶກຄິດ, ຄວາມຮູ້ສຶກ, ຄວາມປະສົງ, ແລະການກະທໍາ ຊຶ່ງຈະບອກເຖິງກຽດສັກສີຂອງບຸກຄົນ ທີ່ຄົນທັງຫລາຍສາມາດຮູ້ເຫັນ. ພາຍໃນຈິດໃຈ, ພຣະເຈົ້າຊົງທໍາງານເພື່ອສ້າງ, ປ່ຽນແປງ, ແລະແກ້ໄຂຄວາມນຶກຄິດ, ຄວາມຮູ້ສຶກ, ແລະການປະພຶດຂອງມະນຸດແຕ່ລະຄົນ.

<u>**ສຶກສາເບິ່ງສາຍຕາ**</u> (16: 8-13)
ພຣະເຈົ້າຊົງມອງເຫັນທຸກຢ່າງກ່ອນທີ່ພວກເຮົາຈະເຫັນ; ພວກເຮົາໄດ້ເຫັນຢ່າງຊັດແຈ້ງຈາກເຣື່ອງຂອງຊາມູເອນແລະດາວິດຊຶ່ງປະກອບດ້ວຍຫລັກການຫລາຍໆຢ່າງທີ່ພວກເຮົາຕ້ອງພິຈາຣະນາເບິ່ງ.

ເຣື່ອງຊາມູເອນຊະໂລມດາວິດໃຫ້ເປັນກະສັດອົງຕໍ່ໄປຂອງອິສຣາເອນ ເປັນຕົວຢ່າງນຶ່ງຈາກຫລາຍໆຕົວຢ່າງໃນພຣະຄັມພີຊຶ່ງຊີ້ໃຫ້ເຫັນຊ່ອງຫວ່າງຣະຫວ່າງສາຍຕາຂອງພວກເຮົາ ແລະສາຍຕາຂອງພຣະເຈົ້າ. ຖ້າພວກເຮົາຢາກມີສາຍຕາຄ້າຍກັບພຣະເຈົ້າ ພວກເຮົາຈະຕ້ອງຮຽນເບິ່ງຄົນທັງຫລາຍຕາມວິທີທີ່ພຣະອົງເບິ່ງພວກເຂົາ. ເວລາພວກເຮົາເບິ່ງຄົນອື່ນ ໃຫ້ພວກເຮົາຊອກຫາລັກສະນະທີ່ພຣະເຈົ້າຊົງພໍພຣະທັຍ. ພຣະທັມໄດ້ບອກວ່າດາວິດ "ເປັນຄົນງາມ ເປັນຊາຍໜຸ່ມທີ່ມີສຸກຂະພາບສົມບູນດີ." ດາວິດມີລັກສະນະເຊັ່ນນັ້ນ ເພາະລາວເປັນຄົນທີ່ມີຈິດໃຈບໍຣິສຸດ.

ຜ່ານການອ້ອນວອນ, ສຶກສາພຣະທັມ, ພິຈາຣະນາ, ສະຕິປັນຍາ, ແລະຄວາມເຂົ້າໃຈ ພວກເຮົາຈະຕ້ອງພຍາຍາມເຮັດໃຫ້ຖືກພຣະປະສົງ ແລະການນໍາພາຂອງພຣະເຈົ້າ. ການເຮັດເຊັ່ນນີ້ ຈະຊ່ວຍໃຫ້ຊ່ອງຫວ່າງ ຣະຫວ່າງສິ່ງທີ່ພວກເຮົາເຫັນ ແລະສິ່ງທີ່ພຣະເຈົ້າຊົງເຫັນນັ້ນລົດນ້ອຍລົງ.

<u>**ຮູ້ສຶກສະບາຍຂຶ້ນ**</u> (16: 21-23)
ຫລັງຈາກພຣະເຈົ້າໄດ້ຊົງປະຕິເສດຊາອູນໃນການເປັນກະສັດແລ້ວ, ຈິດໃຈຂອງຊາອູນກໍເຣີ່ມເປັນທຸກ. ຄົນໃນສມັຍຂອງຜູ້ປະກາດພຣະທັມຊາມູເອນເຊື່ອວ່າທຸກຢ່າງທີ່ເກີດຂຶ້ນ ບໍ່ວ່າຈະດີຫລືຮ້າຍແມ່ນມາຈາກພຣະເຈົ້າ. ພຣະເຈົ້າຊົງ "ສົ່ງວິນຍານຊົ່ວເຂົ້າມາທໍຣະມານພຣະອົງ." ພວກຄົນຮັບໃຊ້ຂອງຊາອູນໄດ້ເຫັນຄວາມທຸກທໍຣະມານຂອງທ່ານ ແລະພວກເຂົາກໍມີຄວາມລໍາບາກ ຈຶ່ງຊ່ວຍຫາວິທີແກ້ໄຂ. "ຂໍຊົງອອກຄໍາສັ່ງມາ ແລ້ວພວກຂ້ານ້ອຍຈະຊອກຫາຄົນທີ່ຮູ້ຈັກດີດພິນມາໃຫ້ ເວລາພຣະອົງມີວິນຍານຊົ່ວສິງຢູ່ໃນພຣະອົງ ຊາຍຄົນນັ້ນກໍຈະດີດພິນຂອງລາວ ແລະພຣະອົງກໍຈະດີຄືເກົ່າອີກ." ຄົນນຶ່ງໃນພວກຂ້າໃຊ້ແນະນໍາໃຫ້ໄປເອົາດາວິດ ລູກຂອງອີຊາຍ.

ເວລາດາວິດມາຢູ່ໃນວັງ ກະສັດຊາອູນກໍພໍໃຈຫລາຍ; ພຣະທັມໄດ້ບອກວ່າ "ເມື່ອເວລາໃດວິນຍານຊົ່ວທີ່ສົ່ງມາຈາກພຣະເຈົ້າເຂົ້າສິງຊາອູນ ດາວິດກໍຈັບເອົາພິນຂອງລາວມາດີດ ແລ້ວວິນຍານຊົ່ວກໍໜີຈາກໄປ ແລະຊາອູນກໍຮູ້ສຶກສະບາຍຂຶ້ນ ແລະເປັນປົກກະຕິເໝືອນເດີມ" (16:23). ຊາອູນຍັງໄດ້ແຕ່ງຕັ້ງດາວິດໃຫ້ເປັນຄົນຖືອາວຸດ ຊຶ່ງເປັນຕໍາແໜ່ງທີ່ກະສັດໄວ້ໃຈຫລາຍ (16:21).

ທ່ານຜູ້ທີ່ພຣະເຈົ້າຊົງເລືອກທັງຫລາຍເອີຍ, ທ່ານໄດ້ຖືກຊະໂລມໃຫ້ເປັນຜູ້ດົດພົນເພື່ອຊ່ວຍຄົນອື່ນໆໃຫ້ "ຮູ້ສຶກສະບາຍຂຶ້ນ" ແລະໃຫ້ຂັບໄລ່ວິນຍານຊົ່ວອອກຈາກພວກເຂົາ. ທ່ານແລະພວກເຂົາຈະໄດ້ຮັບພຣະພອນ ຖ້າທ່ານເບິ່ງຂ້າມສິ່ງທີ່ຢູ່ພາຍນອກ. ໃຫ້ພວກເຮົາພາກັນຮຽນເບິ່ງຈິດໃຈ ເພື່ອເຮົາຈະເຮັດໃຫ້ຊ່ອງຫວ່າງຣະຫວ່າງສາຍຕາຂອງພຣະເຈົ້າແລະສາຍຕາຂອງພວກເຮົານັ້ນໄດ້ນ້ອຍລົງ.

<u>ຄຳຖາມ:</u>

1. ແມ່ນຫຍັງແດ່ຄືລັກສະນະສຳຄັນຂອງຜູ້ນຳທີ່ດີເລີດທີ່ທ່ານເຄີຍຮູ້ຈັກ?

2. ແມ່ນຫຍັງຄືເຄື່ອງໝາຍຕ່າງໆຂອງຜູ້ນຳທີ່ບໍ່ເກີດຜົນແລ້ວ?

3. ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງການໃຊ້ຕຳແໜ່ງເພື່ອມີອິດທິພົນບັງຄັບຄົນອື່ນ ແລະການມີອິດທິພົນຢູ່ໃນກຸ່ມ ເພາະບຸກຄະລິກລັກສະນະ?

4. ທ່ານໝາຍເຖິງຫຍັງ ເວລາທ່ານເວົ້າວ່າຄົນຜູ້ນັ້ນ "ມີຈິດໃຈກວ້າງຂວາງ"?

5. ທ່ານເຄີຍມີໂອກາດສຳລັບການຂັບໄລ່ວິນຍານຮ້າຍອອກຈາກຊີວິດຂອງຄົນອື່ນໆບໍ່?

*ສຈ. ດຣ. ສີດນີ ຄານ*

# ບົດຮຽນທີ 8
# ຕໍ່ສູ້ກັບຍັກຕາຂຽວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນທີນຶ່ງ 18: 1-16
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 18--19
**ຈຸດສຳຄັນຂອງບົດຮຽນນີ້:** ຄວາມອິດສາສາມາດທຳລາຍແມ່ນກະທັງຄວາມສັມພັນທີ່ໃກ້ຊິດ.
**ຄຳຖາມເພື່ອການສຳຣວດ:** ທ່ານຊົມຊື່ນຍິນດີໃນຄວາມສຳເຣັດຂອງຄົນອື່ນໄດ້ດີເທົ່າໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍບັນຫາທີ່ຈະເກີດຂຶ້ນເພາະຄວາມອິດສາ ແລະເພື່ອຫາວິທີແກ້ໄຂ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ວິທີຈະເອົາຊະນະຄວາມອິດສາຄືພິສູດເບິ່ງຕາຂຽວຂອງຕົວເອງ ແລະຕັ້ງໃຈໃຊ້ເວລາກັບຄວາມສັມພັນເພື່ອເຫັນແກ່ຣາຊອານາຈັກຂອງພຣະເຈົ້າ.

ຄວາມອິດສາສາມາດທຳລາຍຕົວເອງແລະຄົນອື່ນໆ. ຄວາມອິດສາແມ່ນອ້າຍນ້ອງຂອງຄວາມໂລບ. ຄວາມອິດສາພາເຮົາໃຫ້ເຮັດໃນສິ່ງທີ່ເຮົາຄິດບໍ່ເຖິງ. ຄວາມອິດສາພາເຮົາໃຫ້ມີໜີ້, ເຮັດໃຫ້ເຮົາບໍ່ເຕີບໃຫຍ່ຝ່າຍຈິດວິນຍານ, ແລະທຳລາຍຄວາມສັມພັນຕ່າງໆໃນຊີວິດ. ຄວາມອິດສາເຮັດໃຫ້ເຮົາບໍ່ສາມາດມີໝູ່ ຫລືຄວາມສັມພັນທີ່ເກີດຈາກຄວາມຮັກ. ຄວາມອິດສາເຮັດໃຫ້ເກີດຄວາມໂມໂຫຮ້າຍຂາດ ແລະພາເຮັດໃນສິ່ງທີ່ໃຊ້ເລ້ຫລ່ຽມ. ຄວາມອິດສາສ້າງຝາກັ້ນ, ທຳລາຍສະພານ, ທຳລາຍຊື່ສຽງ, ແລະເປັນອຸປສັກຕໍ່ວຽກງານຂອງພຣະເຈົ້າ.

ບົດຮຽນນີ້ນີ້ຈະເວົ້າເຖິງຊີວິດທີ່ໂສກເສົ້າຂອງຊາອູນ ຫລັງຈາກທີ່ດາວິດກາຍເປັນຄົນດັງໃນຖ້າມກາງປະຊາຊົນ. ຕອນແລກຫລາຍຄົນຄິດວ່າ ຊາອູນຊົມຊື່ນຍິນດີໃນຄວາມສຳເຣັດຂອງດາວິດ. ໂຢນາທານລູກຊາຍຂອງຊາອູນກໍໄດ້ກາຍມາເປັນເພື່ອນສນິດຂອງດາວິດເພາະຄວາມເຊື່ອ ແລະການໃຫ້ກຽດທີ່ມີຂຶ້ນຣະຫວ່າງເຂົາທັງສອງ. ຊາອູນອິດສາດາວິດ. ທະຫານນັບຖືດາວິດ. ປະຊາຊົນຮັກດາວິດ. ພຣະເຈົ້າຊົງໃຫ້ພອນດາວິດ. ດາວິດເປັນຊາຍໜຸ່ມ, ເຂັ້ມແຂງ, ມີຄົນນິຍົມ, ສັດຊື່, ມີສີມືເຣື່ອງດົນຕຣີ, ແລະມີຄຸນສົມບັດດີ. ດາວິດມີທຸກຢ່າງທີ່ຊາອູນບໍ່ສາມາດມີໄດ້. ຊາອູນອິດສາດາວິດເຖິງຂັ້ນເຂົາເບິ່ງໜ້າດາວິດບໍ່ໄດ້. ໃນທີ່ສຸດຄວາມອິດສາກໍກາຍເປັນເສັ້ນທາງຊີວິດຂອງກະສັດຊາອູນ.

**ເສັ້ນທາງຂອງຄວາມເປັນມິດ** (18:1-4)

ຄວາມເປັນມິດເກີດຂຶ້ນເວລາໃດ? ນ້ອຍນັກທີ່ການເປັນມິດກັນຈະເກີດຂຶ້ນໃນທັນໃດ. ຄວາມເປັນມິດ ຄ້າຍກັບການ

ເດີນທາງ ເກີດຂຶ້ນເພາະເວລາ. ພຣະທັມຂອງພຣະເຈົ້າບອກວ່າໂຢນາທານ ລູກຂອງຊາອູນລໍຄອຍເວລາທີ່ຈະໄດ້ ເວົ້າລົມກັບດາວິດ. "ເມື່ອຊາອູນແລະດາວິດໄດ້ສົນທະນາປາສັຍກັນແລ້ວໆ ໂຢນາທານ ລູກຊາຍຂອງຊາອູນກໍເກີດມີຄວາມນິຍົມຊົມຊອບດາວິດຫລາຍ."

ໂຢນາທານຮັກແພງດາວິດຫລາຍ; ເຂົາອາດຈະເປັນຄົນທີ່ຂໍໃຫ້ຊາອູນເອົາດາວິດໄປຢູ່ນຳ ເພື່ອເຂົາຈະມີໂອກາດຮູ້ຈັກກັບດາວິດ. ຕອນແລກເຂົາອາດຈະນິຍົມດາວິດເພາະຄວາມສາມາດຂອງເຂົາ; ດາວິດສາມາດເອົາຊະນະໂກລີອາດດ້ວຍກະຖຸນແລະກ້ອນຫີນ (17:49). ຄວາມສັມພັນຣະຫວ່າງໂຢນາທານແລະດາວິດບໍ່ແມ່ນພຽງຄວາມນິຍົມນັກຮົບຜູ້ກ້າຫານເທົ່ານັ້ນ, ແຕ່ເປັນຄວາມຮັກທີ່ເກີດມາຈາກໃຈຈິງ. "ຍ້ອນໂຢນາທານຮັກແພງດາວິດຫລາຍ ລາວຈຶ່ງສາບານເປັນເພື່ອນທີ່ດີກັບດາວິດຕລອດໄປ" (18: 4). ໂຢນາທານໄດ້ມອບເສື້ອ, ເຄື່ອງຮົບ, ດາບ, ຄັນທະນູ, ແລະສາຍຮັດຂອງຕົນເອງໃຫ້ດາວິດ. ສິ່ງເຫລົ່ານີ້ບອກເຖິງວ່າດາວິດມີຄຸນຄ່າກວ່າຕົວເຂົາ ແລະສົມຄວນທີ່ຈະເປັນກະສັດຄົນຕໍ່ໄປໃນອິສຣາເອນ.

ໂຢນາທານມີລັກສະນະກົງກັນຂ້າມກັບຊາອູນຜູ້ເປັນພໍ່ຂອງເຂົາ. ຊີວິດຂອງຊາອູນເຄື່ອນໄປດ້ວຍຄວາມອິດສາ ແຕ່ຊີວິດຂອງໂຢນາທານເຄື່ອນໄປດ້ວຍຄວາມຖ່ອມຕົວ. ໃນທີ່ສຸດທາງສອງເສັ້ນ, ຄວາມອິດສາແລະການຖ່ອມຕົວ, ກໍຕ້ອງພົບກັບຄວາມທຸກລຳບາກ ແລະໃນທີ່ສຸດກໍຄືຄວາມຕາຍ. ແຕ່ມີຜູ້ດຽວທີ່ຮູ້ຄວາມໝາຍຂອງຄຳວ່າ "ມິດສະຫາຍ" ບົນເສັ້ນທາງຂອງຊີວິດ.

## <u>ວິທີໃຫ້ກຽດຄວາມສຳເຣັດຂອງຄົນອື່ນແບບບໍ່ຈິງໃຈ</u> (18:5)

ພວກເຮົາບໍ່ຮູ້ວ່າເວລາໄດ້ຜ່ານໄປດົນປານໃດໃນຣະຫວ່າງພຣະທັມຂໍ້ 18: 4 ເຖິງຂໍ້ 18:5; ແຕ່ພວກເຮົາຮູ້ວ່າຊາອູນໄດ້ມອບໝາຍໜ້າທີ່ສຳຄັນຫລາຍໆຢ່າງໃຫ້ດາວິດເຮັດ ແລະເຂົາກໍໄດ້ເຮັດທຸກຢ່າງໃຫ້ສຳເຣັດ. ດາວິດໄດ້ກາຍເປັນນາຍທະຫານຄົນສຳຄັນໃນກອງທັບຂອງກະສັດຊາອູນ.

ພາຍນອກ, ພວກເຮົາເຫັນວ່າກະສັດຊາອູນໄດ້ໃຫ້ກຽດດາວິດໃນທຸກຢ່າງ; ແຕ່ພາຍໃນຈິດໃຈ, ຊາອູນຕ້ອງການ ທີ່ຂ້າດາວິດໃຫ້ຕາຍ. ການປະພຶດຂອງຊາອູນ ໄດ້ຜິດກັບຈິດໃຈຂອງເຂົາ. ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດເຫັນຈິດໃຈທີ່ແທ້ຂອງມະນຸດ. ພວກເຮົາຮຽນຮູ້ວ່າກະສັດຊາອູນມີຄວາມສາມາດໃນການໃຫ້ກຽດແລະຍົກຍ້ອງຄວາມສຳເຣັດຂອງຄົນອື່ນໆໃນກາງຊຸມຊົນ ແຕ່ສ່ວນຕົວແລ້ວລາວຫວັງໃຫ້ພວກເຂົາເຫລົ່ານັ້ນຕາຍເສັຽດີກວ່າ.

## <u>ເມື່ອຄົນອື່ນມາຍາດເອົາການສເລີມສລອງຂອງທ່ານ</u> (18:6-9)

ໃນເວລາຜ່ານໄປ ກະສັດຊາອູນກໍໄດ້ກັບຈາກການສູ້ຮົບພ້ອມດ້ວຍກອງທະຫານຂອງເຂົາ; ພວກຜູ້ຍິງໃນແຕ່ລະເມືອງທີ່ເປັນທາງຜ່ານກໍໄດ້ພາກັນອອກຕ້ອນຮັບດ້ວຍການຟ້ອນ, ຕີກອງ, ດີດພິນ, ແລະຮ້ອງເພງສເລີມສລອງ. ພວກເຂົາໄດ້ຮ້ອງເພງວ່າ "ຊາອູນໄດ້ຂ້າຫລາຍພັນຄົນ." ກະສັດຊາອູນໄດ້ເຫັນການສເລີມສລອງ, ໄດ້ຍິນສຽງເພງ, ແລະໄດ້ເຫັນຄວາມຕື່ນເຕັ້ນຂອງປະຊາຊົນ; ແຕ່ເຂົາບໍ່ໄດ້ຊົມຊື່ນຍິນດີໃນສິ່ງເຫລົ່ານັ້ນ ເພາະຈິດໃຈຂອງເຂົາເຕັມໄປດ້ວຍຄວາມອິດສາ. ເພາະໃນຂະນະທີ່ພວກຜູ້ຍິງໄດ້ຮ້ອງເພງວ່າ "ຊາອູນໄດ້ຂ້າຫລາຍພັນຄົນ," ພວກເຂົາໄດ້ຮ້ອງຕື່ມວ່າ "ດາວິດໄດ້ຂ້າຫລາຍໝື່ນຄົນ." ຈຳນວນອາດຈະບໍ່ສຳຄັນເທົ່າໃດ, ແຕ່ຄວາມເວົ້ານີ້ບອກຊາອູນໃຫ້ຮູ້ວ່າປະຊາຊົນຄຶດວ່າດາວິດເປັນນັກຮົບທີ່ເກັ່ງກ້າກວ່າຊາອູນ.

ຖ້າທ່ານຢາກເຫັນທາດແທ້ຂອງຄົນທີ່ມີໃຈອິດສາ ໃຫ້ທ່ານຍ້ອງຍໍຄົນອື່ນທີ່ມີຄວາມສາມາດເທົ່າກັນ ຫລືຫລາຍກວ່າຕໍ່ໜ້າເຂົາ. ໃນມື້ນັ້ນກະສັດຊາອູນໄດ້ເສັຽສະຕິເພາະຄຳຮ້ອງໂຮຂອງປະຊາຊົນຍ້ອນຄວາມອິດສາທີ່ເຕັມຢູ່ໃນຈິດໃຈ

ຂອງຕົນ. ພຣະທັມໄດ້ບອກວ່າ "ນັບແຕ່ມື້ນັ້ນມາ ຊາອູນກໍອິດສາດາວິດ" (18:9). ຊາອູນໄດ້ກາຍເປັນລູກນ້ອງ ແລະ ເປັນສາວົກຂອງຍັກຕາຂຽວ.

## ເກີນກວ່າການແຍກ (18: 10-11)

ມາເຖິງຕອນນີ້, ຊາອູນໝົດຄວາມສາມາດທີ່ຈະແຍກຄວາມຮູ້ສຶກ ແລະການກະທຳຂອງເຂົາ; ເມື່ອກ່ອນ, ຊີວິດຂອງຊາອູນ ໄດ້ຖືກແບ່ງອອກເປັນສອງພາກ. ເຂົາເຄີຍເປັນຄົນສອງໜ້າ ຄືເຂົາສາມາດຍົກຍ້ອງດາວິດໃນທີ່ຊຸມຊົນ ແລະ ຢຽບຢາມເຂົາໃນເວລາສ່ວນຕົວ. ມາບັດນີ້ ຄວາມອິດສາຂອງຊາອູນສຳລັບດາວິດໄດ້ປາກົດໃຫ້ເຫັນຢ່າງເປີດແປນ.

ຊາອູນບໍ່ສາມາດລືມຄຳຮ້ອງໂຮຂອງພວກຜູ້ຍິງທີ່ວ່າ " ຊາອູນໄດ້ຂ້າຫລາຍພັນຄົນ ແຕ່ດາວິດໄດ້ຂ້າຫລາຍໝື່ນຄົນ." ເຂົາຄິດວ່າກຽດແລະອຳນາດຂອງຕົນຈະຕ້ອງເສື່ອມລົງ ເພາະດາວິດ. ມື້ນຶ່ງໃນຂະນະທີ່ດາວິດກຳລັງດີດພິນຢູ່ ຊາອູນກໍຊັດຫອກໃສ່ເຂົາເຖິງສອງເທື່ອ; ແຕ່ດາວິດສາມາດຫລົບຫລີກທັນ. ຫລາຍຄົນອາດຈະຫລົບໜີຈາກພຣະຣາຊວັງເພື່ອຮັກສາຊີວິດຂອງຕົນ, ແຕ່ດາວິດຍອມຢູ່ຕໍ່ໄປດ້ວຍກຽດສັກສີ.

## ຕົ້ນຕໍ ແລະໝາກຜົນ: ຕົ້ນຂອງຄວາມອິດສາ ແລະມິດພາບ (18: 12-16)

ຄວາມສາມາດເອົາຕົວລອດຂອງດາວິດເຮັດໃຫ້ກະສັດຊາອູນໂມໂຫຫລາຍຂຶ້ນ. ຊາອູນຈຶ່ງວາງແຜນຂ້າດາວິດດ້ວຍວິທີອື່ນ. ເຂົາໄດ້ແຕ່ງຕັ້ງດາວິດໃຫ້ເປັນຜູ້ບັງຄັບບັນຊາທະຫານພັນຄົນ ແລ້ວສົ່ງເຂົາອອກສູ່ສນາມຮົບ. ແທນທີ່ດາວິດຈະຕາຍຢູ່ໃນສນາມ ພຣະທັມຂອງພຣະເຈົ້າບອກວ່າ ດາວິດ "ໄດ້ເຮັດຫລ້ອນໜ້າທີ່ທຸກຢ່າງ ກໍເພາະວ່າພຣະເຈົ້າຊົງສະຖິດຢູ່ກັບລາວ" (18: 14). ປະຊາຊົນອິສຣາເອນ ແລະ ຢູດາກໍເກີດມີຄວາມຮັກຕໍ່ດາວິດຫລາຍຂຶ້ນ.

ຄວາມສຳເຣັດໃນສນາມ ແລະຄວາມນິຍົມຂອງປະຊາຊົນ ເຮັດໃຫ້ຊາອູນເກີດຄວາມຢ້ານກົວດາວິດ. ຫລັງຈາກທີ່ຊາອູນໄດ້ໃຊ້ຫລາຍວິທີທາງທີ່ຈະຂ້າດາວິດ ແຕ່ກໍບໍ່ສຳເຣັດ ເຂົາຈຶ່ງຮູ້ຕົວວ່າວັນນຶ່ງດາວິດອາດຈະຄິດແກ້ແຄ້ນ. ຄວາມອິດສາຂອງຊາອູນໄດ້ນຳເຂົາໄປສູ່ຄວາມຢ້ານກົວ.

ໃນຂະນະດຽວກັນ ໂຢນາທານກໍໄດ້ລໍຄອຍຢູ່ຂ້າງນອກ; ໂຢນາທານບໍ່ໄດ້ປະຖິ້ມດາວິດ ແລະເຂົາໄດ້ສແດງຄວາມເປັນມິດທີ່ແທ້ຈິງຢູ່ສເມີ. ໂຢນາທານຜູ້ມີສິດທີ່ຈະເປັນກະສັດຄົນຕໍ່ໄປ ບໍ່ໄດ້ເຂົ້າຂ້າງພໍ່ຂອງເຂົາ ແຕ່ໄດ້ຊ່ວຍເຫລືອດາວິດເພື່ອໃຫ້ເຂົາພົບກັບຄວາມສຳເຣັດ. ໂຢນາທານໄດ້ປົກປ້ອງດາວິດ ແລະຕຽມພ້ອມທີ່ຈະສລະຊີວິດຂອງຕົນເພື່ອເຂົາ.

**ຄຳຖາມ:**

1. ມີວິທີໃດແດ່ທີ່ພວກເຮົາໄດ້ເຫັນຄວາມອິດສາເກີດຂຶ້ນຢູ່ສເມີໃນຊີວິດ?

2. ທ່ານຄິດວ່າມັນເປັນການຍາກບໍ່ທີ່ຈະລ້ຽງດູແລະຮັກສາມິຕພາບໃຫ້ສົມບູນດີໃນທຸກມື້ນີ້? ເປັນຫຍັງ?

3. ຄວາມອິດສາໄດ້ສອນບົດຮຽນແນວໃດແດ່ສຳລັບທ່ານ?

4. ເປັນຫຍັງຄືງ່າຍແທ້ໃນການທີ່ຈະດຳເນີນຊີວິດແບບສອງໜ້າ? ມີຫຍັງແດ່ທີ່ພວກເຮົາສາມາດເຮັດໄດ້ເພື່ອຈະຫລີກເວັ້ນສິ່ງນັ້ນ ແລະເພື່ອຈະໄດ້ດຳເນີນຊີວິດດ້ວຍຄວາມສັດຊື່?

*ສຈ. ດຣ. ສິດນີ ຄານ*

# ບົດຮຽນທີ 9
# ຄວາມຈົງຮັກພັກດີຖືກທົດສອບ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນທີນຶ່ງ 20: 1-18, 35-42
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 20
**ຈຸດສຳຄັນຂອງບົດຮຽນນີ້:** ການເລືອກແລະການຕິດຕາມທາງທີ່ຖືກຕ້ອງໃນຊີວິດອາດຈະຄັດແຍ້ງກັບຄວາມຈົງຮັກພັກດີອື່ນໆ, ຊຶ່ງອາດຈະໝາຍເຖິງຄວາມຈົງຮັກພັກດີຕໍ່ເຖິງຄອບຄົວ.
**ຄຳຖາມເພື່ອການສຳຣວດ:** ມີຄວາມຈົງຮັກພັກດີແນວໃດແດ່ທີ່ເຮັດໃຫ້ທ່ານບໍ່ສາມາດເລືອກ ແລະຕິດຕາມທາງທີ່ຖືກຕ້ອງໃນຊີວິດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອພິຈາຣະນາເບິ່ງຄວາມສຳຄັນຂອງຄວາມຈົງຮັກພັກດີຕໍ່ຄອບຄົວແລະມິຕພາບໃນການເລືອກແລະການຕິດຕາມທາງທີ່ຖືກຕ້ອງໃນຊີວິດ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວພຣະເຈົ້າມີສ່ວນໃນການຕັດສິນໃຈ ແລະຮັບໃຊ້.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ວຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

**ຄຳນຳ**

ຄວາມຈົງຮັກພັກດີແມ່ນການລົງທຶນກັບຄົນທີ່ຈະລົງທຶນກັບທ່ານ. ຜົນກຳໄລກໍຄືມິຕພາບທີ່ແທ້ຈິງ. ການເປັນສາວົກຂອງພຣະຄຣິດເປັນບົດບາດສຳຄັນຂອງທ່ານເຣື່ອງຄວາມຈົງຮັກພັກດີ. ບາງຄົນຕ້ອງການມິຕພາບ. ອີກບາງຄົນຕ້ອງການໃຫ້ຍອມຈຳນົນ. ແຕ່ໃນມິຕພາບ, ຄວາມຈົງຮັກພັກດີຕ້ອງມາຈາກທັງສອງທາງ.

**ເປັນຄົນກາງ** (20: 1-4)

ໃນຊາມູເອນທີນຶ່ງ 20: 1, ພວກເຮົາໄດ້ເຫັນດາວິດໄປພົບໂຢນາທານເພື່ອຂໍຄຳອະທິບາຍ. ດາວິດໄດ້ຖາມໂຢນາທານວ່າ "ຂ້ອຍໄດ້ເຮັດຫຍັງຜິດ? ຂ້ອຍມີຄະດີເຣື່ອງຫຍັງ? ຂ້ອຍໄດ້ເຮັດຫຍັງຜິດກັບພໍ່ຂອງເຈົ້າເພິ່ນຈຶ່ງພຍາຍາມຂ້າຂ້ອຍ?" ໂຢນາທານຕົກໃຈແລະຕອບວ່າ "ບໍ່ດອກ." ແລ້ວໂຢນາທານກໍພຍາຍາມປ້ອງກັນພໍ່ຂອງລາວ. ລາວບອກດາວິດວ່າພໍ່ "ໄດ້ບອກໃຫ້ຂ້ອຍຮູ້ທຸກໆສິ່ງທີ່ເພິ່ນຈະເຮັດ." ສລູບແລ້ວໂຢນາທານຢາກບອກດາວິດວ່າ "ບໍ່ເປັນຫຍັງດອກ." ແຕ່ດາ

ວິດຮູ້ໃນສິ່ງທີ່ໂຢນາທານບໍ່ຮູ້. ດາວິດຮູ້ວ່າກະສັດຊາອູນເປັນໂຣກປະສາດ. ຄອບຄົວຂອງເພິ່ນບໍ່ໄດ້ເອົາໃຈໃສ່ໃນເຣື່ອງນີ້ ແລະປັດຈຸບັນ ບັນຫາຂອງຊາອູນໄດ້ກາຍເປັນພັຍຕໍ່ຜູ້ຮັບໃຊ້ທັງຫລາຍຂອງເພິ່ນ.

ໃນຕອນນີ້, ໂຢນາທານຮູ້ວ່າຕົນເອງກຳລັງຕົກເປັນຄົນກາງຣະຫວ່າງເຈຕນາຮ້າຍຂອງພໍ່ ແລະເພື່ອນທີ່ກຳລັງຕົກຢູ່ໃນພັຍອັນຕະລາຍ. ແຕ່ໂຢນາທານຮູ້ຕົວດີວ່າເຂົາຈະເຣັດໃນສິ່ງທີ່ຖືກຕ້ອງ. ໃນຂໍ້ 2, ໂຢນາທານໄດ້ບອກກັບດາວິດເຖິງຄຳສັນຍາຂອງຊາອູນທີ່ເຄີຍໃຫ້ໄວ້ວ່າ ເພິ່ນຈະບໍ່ຂ້າດາວິດ (19:6). ໂຢນາທານເຄີຍປ້ອງກັນດາວິດຕໍ່ໜ້າພໍ່ຂອງລາວ ແລະກະສັດຊາອູນເຄີຍບອກວ່າຈະບໍ່ລົບກວນດາວິດອີກຕໍ່ໄປ. ໂຢນາທານເຊື່ອແລະວາງໃຈພໍ່ຂອງຕົນ.

ຊາອູນຢາກໃຫ້ໂຢນາທານມີຄວາມຈົງຮັກພັກດີກັບລາວ ແຕ່ລາວບໍ່ໄດ້ສະແດງຄວາມຈົງຮັກພັກດີກັບໂຢນາທານເລີຍ. ບາງຄົນຕ້ອງການມິຕພາບ. ອີກບາງຄົນຕ້ອງການໃຫ້ຍອມຈຳນົນ. ແຕ່ໃນມິຕພາບ, ຄວາມຈົງຮັກພັກດີຕ້ອງມາຈາກທັງສອງທາງ.

ທ້າຍສຸດ, ໂຢນາທານກໍເຂົ້າໃຈສະພາບທີ່ແທ້ຈິງຂອງດາວິດ. ໂຢນາທານໄດ້ເຫັນຄວາມກັງວົນຂອງດາວິດ ຈຶ່ງໄດ້ຍອມຮັບຄຳສເນີຂອງລາວ. ໂຢນາທານເວົ້າວ່າ "ຂ້ອຍຈະເຣັດທຸກສິ່ງທີ່ເຈົ້າຕ້ອງການ" (20:4). ນີ້ຄືຕົວຢ່າງຂອງຄວາມຈົງຮັກພັກດີຕໍ່ກັນ.

<u>ທ່ານບອກເຣື່ອງລາວຂອງຕົວເອງຢູ່ຕລອດ</u> (20: 5-18)

ການຕົກລົງຂອງໂຢນາທານທີ່ຈະຊ່ອຍດາວິດມີຄວາມສຳຄັນ. ຕາມທັສນະຂອງໂຢນາທານແລ້ວ, ກະສັດຊາອູນບໍ່ໄດ້ເປັນພິດເປັນພັຍແກ່ຄົນອື່ນ ຍົກເວັ້ນແຕ່ເວລາລາວຖືກວິນຍານຮ້າຍມາສິງເທົ່ານັ້ນ.

ດາວິດຍັງບໍ່ແນ່ໃຈເຣື່ອງຊາອູນ ລາວຈຶ່ງສເນີຄວາມຄິດໃໝ່ກັບໂຢນາທານ ເພື່ອຈະທົດສອບຄວາມຮ້າຍຂາດຂອງຊາອູນອີກເທື່ອນຶ່ງ. ວັນສລອງເດືອນອອກໃໝ່ເປັນວັນທີ່ດາວິດຈະຕ້ອງຮ່ວມໂຕະກິນເຂົ້ານຳກະສັດຊາອູນ. ດາວິດຈຶ່ງຂໍອະນຸຍາດຂາດຈາກໂຕະນຳໂຢນາທານ. ຖ້າດາວິດບໍ່ຢູ່ໃນໂຕະກິນເຂົ້າເວລາງານສລອງ, ກະສັດຊາອູນກໍຈະຮູ້ທັນທີ; ແລະ ເວລາຊາອູນຖາມຫາດາວິດ, ໂຢນາທານຈະເປັນຄົນຕອບ ພ້ອມຈະບອກວ່າດາວິດຂໍອະນຸຍາດໄປເບັດເລເຮັມເພື່ອຮ່ວມສລອງກັບຄອບຄົວ. ຖ້າຊາອູນຕອບໃນທາງດີ, ໂຢນາທານກໍຈະຮູ້ວ່າພໍ່ຂອງຕົນບໍ່ໄດ້ມີເຈຕນາຮ້າຍກັບດາວິດ. ແຕ່ຖ້າ ຊາອູນຕອບດ້ວຍຄວາມໂມໂຫ, ໂຢນາທານກໍຈະຮູ້ວ່າດາວິດໄດ້ເວົ້າຢ່າງຖືກຕ້ອງແລ້ວ. ໂຢນາທານໄດ້ເວົ້າຕໍ່ໄປວ່າຖ້າ ຊາອູນມີແຜນຈະຂ້າດາວິດ ເຂົາເອງຈະເປັນຄົນມາບອກໃຫ້ຮູ້.

ໂຢນາທານໄດ້ໃຫ້ສັນຍາກັບດາວິດວ່າ, "ຖ້າເພິ່ນເຈຕນາດີຕໍ່ເຈົ້າຂ້ອຍຈະສົ່ງຂ່າວມາຫາເຈົ້າຖ້າຫາກວ່າເພິ່ນມີເຈຕນາຮ້າຍ ຂ້ອຍຈະບໍ່ສົ່ງຂ່າວໃຫ້ເຈົ້າ ແລ້ວໃຫ້ເຈົ້າໜີໄປ" (20:13). ກ່ອນຈາກກັນໂຢນາທານໄດ້ຂໍຮ້ອງດາວິດໃຫ້ສັດຊື່ຕໍ່ລາວ ແລະຖ້າລາວໄດ້ຕາຍໄປກໍໃຫ້ດາວິດສແດງຄວາມເມດຕາກະຣຸນາຕໍ່ຄອບຄົວດ້ວຍ. ດາວິດແລະໂຢນາທານໄດ້ສະແດງຄວາມຮັກທີ່ພວກເຂົາມີຕໍ່ກັນ ແລະໂຢນາທານໄດ້ອະທິບາຍວ່າເຂົາຈຳເອົາຄຳຕອບມາໃຫ້ດາວິດວິທີໃດ. ທຸກຢ່າງໄດ້ເກີດຂຶ້ນເໝືອນດັ່ງດາວິດໄດ້ທຳນວາຍໄວ້. ເມື່ອບໍ່ເຫັນດາວິດເຂົ້າຮ່ວມໂຕະເຖິງສອງມື້, ຊາອູນກໍເກີດໂມໂຫຢ່າງແຮງ. ລາວຮ້າຍໃຫ້ໂຢນາທານ ແລະເວົ້າຕໍ່ລາວວ່າ "ລູກທໍຣະຍົດດຽວນີ້ຂ້ອຍຮູ້ວ່າເຈົ້າເວົ້າເຂົ້າຂ້າງດາວິດ ແລະເຈົ້າກຳລັງເຣັດໃຫ້ເຈົ້າເອງກັບແມ່ເຈົ້າເສື່ອມເສັຽກຽດ" (20:30). ຊາອູນເວົ້າຕໍ່ໄປວ່າ "ຈົ່ງໄປນຳຕົວລາວ (ດາວິດ) ມານີ້ ລາວຄວນຈະຕາຍ" (20: 31).

ໂຢນາທານໄດ້ຖາມກະສັດຊາອູນວ່າດາວິດໄດ້ເຮັດຫຍັງຜິດ; ແທນທີ່ຈະໄດ້ຮັບຄຳຕອບຈາກພໍ່, ຊາອູນໄດ້ຖອດຫອກຂອງຕົນເພື່ອຈະຂ້າໂຢນາທານ (20:33). ໂຢນາທານຈຶ່ງຮູ້ໄດ້ວ່າພໍ່ຂອງຕົນຍັງບໍ່ເຊົາທີ່ຈະຂ້າດາວິດ. ໂຢນາທານ "ຈຶ່ງລຸກອອກຈາກໂຕະດ້ວຍຄວາມຮ້າຍ ແລະບໍ່ຍອມກິນຫຍັງເລີຍ" (20:34). ລາວບໍ່ໄດ້ຕອບໂຕ້ພໍ່ຂອງຕົນ ພຽງແຕ່ໜີໜ້າ. ການປະພຶດຂອງໂຢນາທານໃນຄັ້ງນີ້ບໍ່ໄດ້ໝາຍຄວາມວ່າລາວເຫັນວ່າໝູ່ດີກວ່າພໍ່ແມ່ ແຕ່ລາວເລືອກເອົາຫລັກການແທນທີ່ຈະເຂົ້າຂ້າງຄົນບ້າ.

ແຜນການທີ່ດາວິດແລະໂຢນາທານນຳໄປໃຊ້ເພື່ອທົດສອບເຈຕນາຂອງຊາອູນນັ້ນ ເກີດມາຈາກຫລັກການຂອງຊີວິດທີ່ວ່າພວກເຮົາບອກເຣື່ອງລາວຂອງຕົວເອງຢູ່ຕລອດເວລາ. ຄວາມເວົ້າທີ່ເຮົາໃຊ້, ນິສັຍທີ່ເຮົາມີ, ຄວາມຮູ້ສຶກທີ່ສະແດງອອກ, ນິທານແລະເຣື່ອງສນຸກທີ່ເຮົາມັກເລົ່າໃຫ້ຄົນຟັງ, ທັສນະທີ່ເຮົາສະແດງອອກ, ສິ່ງທີ່ເຮົາສແວງຫາ, ແລະຄວາມເສັຽສະລະທີ່ເຮົາເຮັດໃຫ້ຄົນເຫັນ ລ້ວນແຕ່ບອກເຖິງເຣື່ອງລາວກ່ຽວກັບຕົວຂອງເຮົາເອງ. ເວລາທ່ານຄຸເຂົ່າລົງເວົ້າກັບເດັກນ້ອຍ, ທ່ານກໍເລົ່າເຣື່ອງຂອງທ່ານເອງ. ເວລາທ່ານນັ່ງລົມກັບຄົນທີ່ຕ້ອງການຄວາມໜູນໃຈ, ທ່ານກໍເລົ່າເຣື່ອງຂອງທ່ານເອງ. ເວລາທ່ານເກີດໃຈຮ້າຍໃນເຣື່ອງເລັກນ້ອຍ ທ່ານກໍເລົ່າເຣື່ອງຂອງທ່ານເອງ.

ເວລາຊາອູນເກີດໃຈຮ້າຍເພາະດາວິດບໍ່ຢູ່ໃນໂຕະກິນເຂົ້າ, ລາວກໍໄດ້ເລົ່າເຣື່ອງຂອງຕົວເອງ. ຄົນອື່ນສາມາດທີ່ຈະຮູ້ເຈຕນາຂອງເຮົາໄດ້ ໂດຍການສັງເກດຊອມເບິ່ງເຮົາພຽງນິດດຽວ. ແລະຖ້າພວກເຂົາສັງເກດເບິ່ງພວກເຮົາຢ່າງສັດຊື່ ແລະຟັງສິ່ງທີ່ເຮົາເວົ້າເປັນເວລານານສົມຄວນເຂົາກໍຈະເຂົ້າໃຈເຣື່ອງລາວຂອງພວກເຮົາ. ນັ້ນຄືສິ່ງທີ່ເກີດຂຶ້ນໃນວັນສລອງເດືອນອອກໃໝ່ທີ່ວັງຂອງກະສັດຊາອູນ.

<u>**ປະພຶດໂຕແບບລູກຜູ້ຊາຍ**</u> (20: 35-42)

ໂຢນາທານໄດ້ບອກກັບດາວິດວ່າເຂົາຈະກັບມາໃນຕອນແລງຂອງມື້ທີສອງ (20:19), ແຕ່ລາວບໍ່ໄດ້ກັບມາຈົນກວ່າມື້ເຊົ້າຂອງວັນທີສາມ. ແຕ່ພໍມາເຖິງໂຢນາທານກໍໄດ້ໃຫ້ສັນຍານຕາມທີ່ໄດ້ເວົ້າກັນໄວ້ (20: 17-23). ພໍຊາຍໜຸ່ມຄົນໃຊ້ຂອງໂຢນາທານອອກໄປຊອກຫາລູກໜ້າທະນູ, ດາວິດກໍອອກມາຈາກບ່ອນລີ້ ແລະກອດກັບໂຢນາທານ ແລະຮ້ອງໃຫ້ໃສ່ກັນ (20: 41). ແຕ່ນັ້ນມາ ຄວາມສັມພັນຣະຫວ່າງໂຢນາທານແລະພໍ່ຂອງເຂົາກໍບໍ່ຄືເກົ່າອີກຕໍ່ໄປ.

ດາວິດແລະໂຢນາທານຮັກສາຄວາມສັດຊື່ຕໍ່ກັນ; ພວກເຂົາຮັກສາຄວາມສັນຍາທີ່ໄດ້ໃຫ້ຕໍ່ກັນ, ຄວາມສັນຍາທີ່ໃຫ້ກັບພຣະຜູ້ເປັນເຈົ້າ, ແລະຄວາມຫ່ວງໃຍຕໍ່ຣາຊບັນລັງ. ໂຢນາທານເຫັນຫລັກການສຳຄັນກວ່າອິດທິພົນ, ຄວາມສັດຊື່ຕໍ່ແນວທາງຂອງພຣະເຈົ້າສຳຄັນກວ່າຄວາມຈົງຮັກພັກດີຕໍ່ຄອບຄົວ, ແລະພຣະເຈົ້າຈະເປັນຜູ້ຊະນະໃນບັ້ນປາຍ.

ແມ່ນຫຍັງຄືກະສັດຊາອູນໃນຊີວິດຂອງທ່ານໃນທຸກມື້ນີ້? ມີໃຜ ຫລືພວກໃດແດ່ທີ່ກຳລັງບອກທ່ານໃຫ້ຈົງຮັກພັກດີກັບພວກເຂົາ? ເວລາມີການຂັດແຍ້ງເຣື່ອງຄວາມຈົງຮັກພັກດີ, ຈົ່ງຮູ້ວ່າການສັດຊື່ແລະການໃຫ້ກຽດພຣະເຈົ້າສຳຄັນກວ່າທຸກຢ່າງ. ພຣະເຈົ້າຄືມິດສະຫາຍທີ່ດີເລີດຂອງທ່ານ.

ຈົ່ງຈຳໄວ້ວ່າ: ບາງຄົນຕ້ອງການມິດພາບ. ອີກບາງຄົນຕ້ອງການໃຫ້ຍອມຈຳນົນ. ແຕ່ໃນມິດພາບ, ຄວາມຈົງຮັກພັກດີຕ້ອງມາຈາກທັງສອງທາງ.

<u>**ຄຳຖາມ:**</u>

1. ຊາມູເອນນຶ່ງ 20:41 ເວົ້າວ່າ "ດາວິດມີຄວາມໂສກເສົ້າເສັຽໃຈຫລາຍ." ທ່ານຄິດວ່າເປັນຫຍັງດາວິດຈຶ່ງຮ້ອງໃຫ້ເສັຽໃຈຫລາຍກວ່າໂຢນາທານ?

2. ຄວາມສະດວກສະບາຍໃນການຍົກຍ້າຍ (ຈາກບ່ອນນຶ່ງໄປຢູ່ອີກບ່ອນນຶ່ງ) ໃນສມັຍນີ້ ມີຜົນສະທ້ອນແນວໃດແດ່ ໃນເຣື່ອງຄວາມຈົງຮັກພັກດີຕໍ່ມິຕພາບ?

3. ໃນຂໍ້ຄວາມຕໍ່ໄປນີ້ ໃຫ້ທ່ານຈັດລຳດັບເບິ່ງວ່າສິ່ງໃດສຳຄັນສຳລັບຊີວິດ; ໃຫ້ໝາຍໃສ່ຂ້າງໜ້າຂອງຄວາມເວົ້າ ໂດຍໃຊ້ເລກ ແຕ່ 1 ເຖິງ 7; 1 ຖືວ່າສຳຄັນຫລາຍ, 2 ແມ່ນລອງລົງມາ, ແລະຕໍ່ໆໄປ.

| | |
|---|---|
| __ ລູກ | __ ວຽກງານ |
| __ ໂບດ | __ ເພື່ອນບ້ານ |
| __ ຮັບໃຊ້ສັງຄົມ | __ ພໍ່ແມ່ |
| __ ສະມາຄົມ | __ ສະມາຄົມອາຊີບ |
| __ ໝູ່ເພື່ອນ | __ ການຢຸດພັກ / ການທ່ອງທ່ຽວ |
| __ ພຣະເຈົ້າ | __ ໂຮງຮຽນ |
| __ ສຸຂພາບ | __ ເອື້ອຍນ້ອງ |
| __ ເຮືອນ | __ ສາມີ / ພັລຍາ |

ທ່ານເຄີຍເຫັນການຂັດແຍ້ງໃນສິ່ງທີ່ທ່ານມີຄວາມຈົງຮັກພັກດີໃນຊີວິດບໍ່? ທ່ານໃຊ້ເວລາແລະເງິນທອງ ໃນສິ່ງທີ່ທ່ານຖືວ່າສຳຄັນໃນຊີວິດບໍ່? ທ່ານຈຳເປັນຈະຕ້ອງຈັດລຳດັບໃໝ່ເຣື່ອງຄວາມຈົງຮັກພັກດີບໍ່?

4. ທ່ານໄດ້ຜົນປໂຍດແນວໃດແດ່ຈາກການສ້າງຄວາມສັມພັນກັບພຣະເຈົ້າ ເວລາຊີວິດພົບກັບຄວາມກົດດັນ ຫລື ພົບກັບບັນຫາຫຍຸ້ງຍາກ ແລະພົບກັບຄົນອື່ນທີ່ຄອຍຈ່ອງດຶງທ່ານລົງທຸກເວລາ?

*ສຈ. ດຣ. ສິດນີ ຄານ*

# ບົດຮຽນທີ 10
# ປະພຶດຕົວຢ່າງສງ່າງາມໃນໂລກທີ່ບໍ່ໄວ້ໜ້າກັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນທີນຶ່ງ 24: 2-15; 26: 6-12

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 24--26

**ຈຸດສຳຄັນຂອງບົດຮຽນນີ້:** ການຮູ້ຈັກບັງຄັບຕົນເອງເວລາຕໍ່ສູ້ກັບຄົນທີ່ຕໍ່ຕ້ານທ່ານ ແລະຄວາມຄິດເຫັນຂອງທ່ານ ຄືລັກສະນະທີ່ຈະຕ້ອງປູກສ້າງ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາຈະເປັນຄົນທີ່ຈເຣີນແລ້ວ ແລະຜ່ອນຄຳເວົ້າແລະການກະທຳທີ່ເປັນການສຽດສີກັບຄົນອື່ນໆໃນໂລກທີ່ສີວິໄລແລ້ວໄດ້ວິທີໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຫາວິທີທາງທີ່ຈະເປັນຄົນທີ່ສີວິໄລຂື້ນ ແລະຜ່ອນຄຳເວົ້າແລະການກະທຳທີ່ເປັນການສຽດສີກັບຄົນອື່ນໆໃນໂລກທີ່ສີວິໄລແລ້ວ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ວຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ວິທີທີ່ດີທີ່ສຸດທີ່ພວກເຮົາຈະຮ່ວມມືກັບພຣະເຈົ້າໄດ້ໃນການຊົງໄຖ່ມະນຸດຂອງພຣະອົງ ຄືປ່ອຍໃຫ້ພຣະລັກສະນະຂອງພຣະເຢຊູຄຣິດປ່ຽນແປງຄວາມຮູ້ສຶກ, ລັກສະນະ, ແລະການປະພຶດຂອງພວກເຮົາ.

ພວກເຮົາຈະເຮັດແນວໃດກັບບຸກຄົນທີ່ເຮັດກັບເຮົາເໝືອນວ່າເປັນສັດ? ເວລາພວກເຮົາມີໂອກາດ, ເຮົາຈະຕອບການກະທຳຂອງພວກເຂົາແນວໃດ? ຄຣິສຕຽນຜູ້ໄປໂບດເປັນປະຈຳກໍຍັງເຄີຍເຮັດໃຫ້ຄົນອື່ນເຈັບຊ້ຳ. ເວລາມີຄົນເຮັດໃຫ້ທ່ານເຈັບປວດ ທ່ານອາດຈະມີເວລາເຮັດໃຫ້ເຂົາເຈັບປວດເຊັ່ນກັນ. ທ່ານຈະເຮັດແນວໃດເວລາໂອກາດເປັນຂອງທ່ານ?

## ຄວາມເມດຕາເປັນສິ່ງທີ່ເລືອກໄດ້ (24:1-4)

ກະສັດຊາອູນມີເຈຕນາຢ່າງແຮງທີ່ຈະຂ້າດາວິດ; ໃນຕອນນີ້ຊາອູນໄດ້ນຳກຳລັງທະຫານຈຳນວນ 3000 ຄົນເພື່ອຕາມຫາດາວິດ. ກຳລັງທະຫານຂອງກະສັດຊາອູນໄດ້ຕິດຕາມດາວິດມາເຖິງເຂດຖິ່ນກັນດານໃກ້ເມືອງເອນເກດີ ຊຶ່ງຢູ່ປະມານ 25 ໄມທາງທິດຕະວັນອອກສ່ຽງໃຕ້ຂອງກຸງເຢຣູຊາເລັມ. ເມືອງເອນເກດີເປັນເຂດທີ່ເຕັມໄປດ້ວຍຖ້ຳ ແລະລຳທານ ແລະເປັນດິນແດນທີ່ອຸດົມໄປດ້ວຍພືນໄມ້ແລະພືດພັນ. ດາວິດແລະທັງຜູ້ຕິດຕາມຂອງເຂົາກໍໄດ້ອາສັຍຢູ່ໃນ

ຊີວິດນີ້.

ໃນຂະນະທີ່ກຳລັງຊອກຫາດາວິດຢູ່, ກະສັດຊາອູນກໍເກີດມີຄວາມຈຳເປັນທີ່ຈະຕ້ອງໄປຊຳຣະ. ທ່ານຈຶ່ງເຂົ້າໄປໃນຖ້ຳເພື່ອການລະບາຍ ໂດຍບໍ່ຮູ້ວ່າດາວິດແລະທະຫານຂອງລາວໄດ້ລີ້ຢູ່ໃນຖ້ຳນັ້ນ. ພວກທະຫານຂອງດາວິດໄດ້ເວົ້າກັບທ່ານວ່າ "ນີ້ແມ່ນໂອກາດຂອງທ່ານແລ້ວ ພຣະຜູ້ເປັນເຈົ້າໄດ້ມອບສັດຕຣູຂອງທ່ານໄວ້ໃນອຳນາດຂອງທ່ານຕາມທີ່ຊົງໄດ້ບອກໄວ້ແລ້ວ" (ຂໍ້ 4). ໂອກາດສຳລັບການແກ້ແຄ້ນກຳລັງຢູ່ໃນກຳມືຂອງດາວິດ; ແຕ່ດາວິດເປັນຄົນທີ່ຢຳເກງພຣະເຈົ້າ ລາວຈຶ່ງບໍ່ຍອມທຳອັນຕະລາຍຢ່າງໃດແກ່ກະສັດຊາອູນຜູ້ເປັນເຈົ້ານາຍຂອງຕົນ.

ເວລາທ່ານມີໂອກາດທີ່ຈະເຮັດໃຫ້ຄົນອື່ນເຈັບປວດ ເພາະຄົນຜູ້ນັ້ນເຄີຍເຮັດໃຫ້ທ່ານເຈັບປວດມາກ່ອນ, ທ່ານສາມາດເລືອກວ່າຈະເຮັດແນວໃດດີ. ທ່ານສາມາດແກ້ແຄ້ນກັບຄົນນັ້ນແລະເປັນສັດຕຣູກັນຕໍ່ໄປ ຫລືທ່ານສາມາດສະແດງຄວາມ ເມດຕາຕໍ່ເຂົາເພື່ອຈະໄດ້ເປັນມິດຕໍ່ໄປ.

<u>**ຄວາມຮູ້ສຶກເປັນສິ່ງກີດກັ້ນ**</u> (24:5-7)

ຄວາມຮູ້ສຶກເປັນສິ່ງທີ່ຊ່ວຍທ່ານໃຫ້ຮູ້ວ່າການກະທຳຕ່າງໆຈະຜິດຫລືຖືກ. ຄວາມຮູ້ສຶກຈະຊ່ວຍທ່ານໃຫ້ເລືອກທາງຖືກ. ທ່ານເຄີຍຟັງຄວາມຮູ້ສຶກພາຍໃນບໍ່? ຄົນປະພຶດດີແລະຄົນປະພຶດຮ້າຍແຕກຕ່າງກັນຢູ່ທີ່ຄວາມຮູ້ສຶກ. ຫລາຍຄົນປະກາດຕົວເອງວ່າຮູ້ຈັກພຣະເຈົ້າ ແຕ່ບໍ່ໄດ້ໃຫ້ຄວາມສຳຄັນກັບລັກສະນະຂອງພຣະເຈົ້າທີ່ໄດ້ເປີດເຜີຍໃຫ້ຮູ້ຜ່ານທາງອົງພຣະເຢຊູຄຣິດ. ເຂົາເຈົ້າບໍ່ໄດ້ປ່ອຍໃຫ້ພຣະລັກສະນະຂອງພຣະເຈົ້າປ່ຽນແປງຄວາມຮູ້ສຶກ, ລັກສະນະ, ແລະການປະພຶດຂອງຕົວເອງເລີຍ.

ດາວິດຟັງຄວາມຮູ້ສຶກຂອງຕົນເອງ (ຂໍ້ 5); ລາວໄດ້ບອກກັບພວກທະຫານຂອງລາວວ່າ "ຂໍພຣະຜູ້ເປັນເຈົ້າຢ່າອະນຸຍາດໃຫ້ຂ້ອຍທຳອັນຕະລາຍຢ່າງໃດໜຶ່ງແກ່ເຈົ້ານາຍຂອງຂ້ອຍ ຊຶ່ງເປັນຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກເອົາເປັນເຈົ້າຊີວິດ" (24:6). ແລະດາວິດກໍບໍ່ໄດ້ອະນຸຍາດໃຫ້ທະຫານຂອງລາວຕໍ່ສູ້ຊາອູນ.

ມີຫລາຍຄົນມັກຈະເວົ້າວ່າ "ໃຫ້ເຮັດຕາມຄວາມຮູ້ສຶກ." ແຕ່ພວກເຮົາຄວນລະວັງໃນຄຳເວົ້າເຫລົ່ານີ້ ໂດຍສະເພາະໃນກໍຣະນີທີ່ຄວາມຮູ້ສຶກຂອງບຸກຄົນບໍ່ໄດ້ມີພື້ນຖານໃນພຣະລັກສະນະຂອງພຣະເຈົ້າໃນພຣະເຢຊູຄຣິດ. ໃນພຣະທັມຕອນນີ້ພວກເຮົາໄດ້ເຫັນດາວິດສແດງອອກເຖິງຄວາມສຳຄັນຂອງການດຳເນີນຊີວິດຕາມຫລັກການ. ການເປັນຜູ້ນຳຝ່າຍຈິດວິນຍານທີ່ດີຈະຕ້ອງມີລັກສະນະ ແລະການກະທຳທີ່ເກີດມາຈາກຫລັກການຊຶ່ງຢັ່ງຢູ່ໃນພຣະລັກສະນະຂອງພຣະເຈົ້າ.

<u>**ສງົບເສີກຊົ່ວຄາວ**</u> (24:8-15)

ດາວິດສັ່ງທະຫານຂອງລາວບໍ່ໃຫ້ທຳລາຍກະສັດຊາອູນ; ຊາອູນກໍອອກຈາກຖ້ຳໄປດ້ວຍຄວາມປອດພັຍເພາະຄວາມເມດຕາຂອງດາວິດ. ດາວິດອອກຈາກຖ້ຳແລ້ວເອີ້ນໃສ່ຊາອູນວ່າ "ພຣະອົງເອີຍ." ຊາອູນໄດ້ຍິນສຽງຂອງດາວິດກໍຫລຽວຫລັງເບິ່ງ ແລະເຫັນດາວິດກົ້ມຂາບລົງດ້ວຍຄວາມນັບຖື. ດາວິດໄດ້ຖາມກະສັດຊາອູນວ່າ "ເປັນຫຍັງທ່ານຈຶ່ງໄປເຊື່ອ ຄົນທີ່ເວົ້າວ່າຂ້ານ້ອຍມີເຈຕນາຮ້າຍກັບທ່ານ. ມື້ນີ້ພຣະເຈົ້າໃຫ້ໂອກາດຂ້ານ້ອຍແລ້ວ ຕອນຢູ່ໃນຖ້ຳ ແຕ່ຂ້ານ້ອຍຍັງບໍ່ຍອມຂ້າທ່ານ ເພາະທ່ານເປັນເຈົ້າຊີວິດທີ່ພຣະເຈົ້າຊົງເລືອກໄວ້... ເປັນຫຍັງພຣະອົງຕາມຂ້າຂ້ານ້ອຍໂດຍທີ່ຂ້ານ້ອຍ ບໍ່ໄດ້ເຮັດຫຍັງຜິດເລີຍ... ຂ້ານ້ອຍເປັນພຽງໝານ້ອຍທັມມະດາໂຕນຶ່ງເທົ່ານັ້ນ... ຂໍໃຫ້ພຣະເຈົ້າຊົງຕັດສິນວ່າໃນພວກເຮົາໃຜເປັນຄົນຖືກ ຫລືຄົນຜິດຊານໍ." (ນີ້ແມ່ນຄຳເວົ້າຂອງຜູ້ຂຽນເພື່ອໃຫ້ເຂົ້າໃຈງ່າຍຂື້ນ).

ໃນພຣະທັມຂໍ້ຕໍ່ໄປ (24:16-22) ພວກເຮົາໄດ້ເຫັນວ່າກະສັດຊາອູນກໍເກີດຄວາມຮູ້ສຶກດີຂຶ້ນໂດຍປະກາດວ່າ: ດາວິດເປັນຄົນຖືກ, ຂໍໃຫ້ພຣະເຈົ້າອວຍພອນດາວິດ, ມື້ນຶ່ງດາວິດຈະເປັນເຈົ້າຊີວິດຂອງອິສຣາເອນ, ແລະດາວິດຈະມີອາຍຸຍືນຍາວກວ່າຊາອູນ. ຊາອູນຍັງຮ້ອງຂໍດາວິດບໍ່ໃຫ້ທຳລາຍ ຫລືລຶບຊື່ແລະເຊື້ອສາຍຂອງລາວໃນປະວັດສາດ. ດາວິດ "ກໍສັນຍາວ່າ ລາວຈະປະຕິບັດຕາມ" (24:22). ຫລັງຈາກນັ້ນທະຫານທັງສອງຝ່າຍກໍແຍກທາງກັນໄປຄົນລະທາງ.

ພວກເຮົາຮຽນຮູ້ວ່າ ການສງົບເສິກຣະຫວ່າງຊາອູນແລະດາວິດໃນຕອນນີ້ເປັນການສງົບພຽງຊົ່ວຄາວ. ພາຍຫລັງມາກະສັດຊາອູນກໍຕິດຕາມຂ້າດາວິດອີກ. ແຕ່ສົງຄາມໃນຕອນນີ້ສງົບລົງເພາະດາວິດເປັນຄົນທີ່ດຳເນີນຊີວິດໃນຫລັກ, ເປັນຄົນຖ່ອມຕົວ, ແລະຍອມສ່ຽງພັຍຕໍ່ໜ້າຊາອູນ. ເຖິງກະສັດຊາອູນຈະຖືກຜີຮ້າຍສິງຢູ່ ລາວຍັງຕອບຄວາມເມດຕາຂອງດາວິດດ້ວຍຄວາມດີ. ໂປໂລໄດ້ກ່າວເຖິງຫລັກການເຣື່ອງຄວາມຖ່ອມຕົວຂອງພຣະເຈົ້າໃນຊີວິດຂອງພຣະເຢຊູຄຣິດໃນພຣະທັມຟີລິບປອຍ 2:6-11.

<u>ເມື່ອລັກສະນະສຳຄັນກວ່າການຜິດຫລັກ</u> (26:6-12)

ໃນເວລາຕໍ່ມາກະສັດຊາອູນກໍໄດ້ຕາມຂ້າດາວິກອີກ; ແລະດາວິດກໍມີໂອກາດອີກເທື່ອນຶ່ງທີ່ຈະສັງຫານກະສັດຊາອູນ. ແຕ່ດາວິດກໍບໍ່ຍອມທຳລາຍຊາອູນ ແລະລາວກໍບໍ່ຍອມໃຫ້ອະບີຊາຍຜູ້ຕິດຕາມຂອງລາວ ທຳລາຍພຣະອົງ. ດາວິດສາມາດໃຊ້ຄົນອື່ນເພື່ອທຳລາຍກະສັດຊາອູນຊຶ່ງເປັນສິ່ງທີ່ງ່າຍສຳລັບລາວ ແຕ່ດາວິດກໍບໍ່ຍອມເຮັດ ເພາະສິ່ງນັ້ນບໍ່ແມ່ນບຸກຄະລິກລັກສະນະຂອງເຂົາ.

ມີຄຳສະດຸດີກ່າວໄວ້ໃນທຳນອງນີ້ວ່າ, "ຈົ່ງເບິ່ງບຸກຄະລິກລັກສະນະຂອງທ່ານໃຫ້ດີ, ເພາະບຸກຄະລິກລັກສະນະຈະກຳໜົດໂຊກຊະຕາຂອງທ່ານ." ຫລັກການ ສຳຄັນກວ່າການໄດ້ຊັຍຊະນະຕໍ່ຄົນທີ່ບໍ່ເຫັນພ້ອມກັບເຮົາ. ມີຄວາມສັມພັນໃດແດ່ທີ່ທ່ານຈະຕ້ອງໄດ້ນຳຫລັກການໃນບົດຮຽນນີ້ໄປປະຕິບັດ ເພື່ອຈະໄດ້ປິ່ນປົວບາດແຜໃຫ້ດີຂຶ້ນ?

<u>ຄຳຖາມ:</u>

1. ເປັນຫຍັງການສແດງຄວາມເມດຕາກັບຄົນທີ່ເຮັດໃຫ້ເຮົາເຈັບປວດຈຶ່ງເປັນສິ່ງທີ່ເຮັດໄດ້ຍາກຫລາຍ?

2. ພວກເຮົາຈະປູກສ້າງຄວາມຮູ້ສຶກແບບຄຣິສຕຽນໃຫ້ກັບເດັກນ້ອຍ, ນັກຮຽນປະຖົມ, ນັກຮຽນມັທຍົມ, ນັກຮຽນມະຫາວິທະຍາລັຍ, ແລະ ຜູ້ໃຫຍ່ ໄດ້ວິທີໃດ?

3. ໃນທຸກວັນນີ້, ຄວາມຄິດຂອງຄົນສ່ວນຫລາຍກາຍເປັນເຣື່ອງໃຫຍ່ໃນອະເມຣິກາ ແມ່ນແຕ່ໃນກຸ່ມຄຣິສຕຽນ, ມີຫຍັງແດ່ທີ່ພວກເຮົາບັບຕິດສາມາດເຮັດໄດ້ເພື່ອສົ່ງເສີມເສຣີພາບເຣື່ອງສາສນາສຳລັບທຸກໆຄົນ ແລະສົ່ງເສີມຄວາມຮູ້ສຶກຕາມ ຫລັກຂອງສາສນາ ຫລາຍກວ່າຫລັກການອື່ນໆ ຫລືຄວາມເຊື່ອເຣື່ອງການເມືອງ?

4. ມີຫລາຍຄົນບອກວ່າ, "ຄຣິສຕະຈັກຂອງພຣະເຈົ້າໃນແຕ່ລະທ້ອງຖິ່ນຈະຕ້ອງເປັນຜູ້ນຳໃນທິດທາງຂອງສັງຄົມ." ທ່ານເຫັນພ້ອມກັບຂໍ້ຄວາມນີ້ບໍ່? ເປັນຫຍັງຈຶ່ງເຫັນພ້ອມ ຫລືວ່າເປັນຫຍັງຈຶ່ງບໍ່ເຫັນພ້ອມ? ທ່ານມີຕົວຢ່າງແນວໃດແດ່?

5. ທ່ານເຫັນພ້ອມກັບຄຳສະດຸດີໃນຕອນທ້າຍຂອງບົດຮຽນນີ້ບໍ່, "ຈົ່ງເບິ່ງບຸກຄະລິກລັກສະນະຂອງທ່ານໃຫ້ດີ, ເພາະບຸກຄະລິກລັກສະນະຈະກຳໜົດໂຊກຊະຕາຂອງທ່ານ"?

ສຈ. ດຣ. ສິດນີ ຄານ

# <u>ບົດຮຽນທີ 11</u>
# <u>ອວຍພອນຄອບຄົວຜູ້ຮັບໃຊ້</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຊາມູເອນສອງ 7:1-17
**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຊາມູເອນສອງ 2:1-4; 5:1--7:29
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າສັນຍາວ່າອະນາຄົດຄອບຄົວຜູ້ຮັບໃຊ້ຈະແຈ່ມໃສ
**<u>ຄຳຖາມເພື່ອການສຳຣວດ:</u>** ພຣະເຈົ້າໄດ້ສັນຍາກັບບັນພະບຸຣຸດດາວິດແລ້ວ ເຮົາຈະຮ້ອນໃຈອັນໃດອີກ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສອນໃຫ້ຮູ້ວ່າຊົງສັນຍາກັບດາວິດນັ້ນສຳຄັນຕໍ່ພວກເຮົາ.

**<u>ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## <u>ບົດນຳ</u>

ຫລັງຈາກຜ່ານຜ່າອຸປສັກນາໆປະການແລ້ວດາວິດກໍຂຶ້ນສເວີຍຣາດເປັນເຈົ້າຊີວິດຂອງອິສຣາເອນ, ພຣະທັມຊາມູເອນສະບັບທີສອງບົດ 7 ນີ້ໄດ້ບັນທຶກຄຳສັນຍາຂອງອົງພຣະຜູ້ເປັນເຈົ້າທີ່ຊົງສັນຍາກັບດາວິດວ່າ ຈະອວຍພອນເຊື້ອສາຍຂອງດາວິດຕລອດໄປເນື່ອງຈາກວ່າດາວິດເປັນຂ້າຮັບໃຊ້ຜູ້ເຊື່ອຟັງ. ກ່ອນອື່ນຂໍນຳທ່ານໄປຍັງເບື້ອງຕົ້ນດັ່ງນີ້: ຈາກອັບຣາຮາມເຖິງກະສັດດາວິດແມ່ນ 14 ຊົ່ວຄົນ, ຈາກກະສັດດາວິດເຖິງສມັຍບາບີໂລນມີ 14 ຊົ່ວຄົນ ແລະຈາກສມັຍບາບີໂລນ ຫລົ້ມຈົນມາເຖິງສມັຍພຣະເຢຊູຄຣິດມີ 14 ຊົ່ວຄົນ, ຄຳສັນຍາຂອງອົງພຣະຜູ້ເປັນເຈົ້າໃນສມັຍຂອງດາວິດມາຈົນເຖິງພຣະເຢຊູຄຣິດລົງມາເກີດກໍນັບວ່າເປັນເວລາ 28 ຊົ່ວຄົນຄຳອວຍພອນນັ້ນຈຶ່ງມາເຖິງ.

<u>ດາວິດຄຶດເຖິງຫີບຄຳສັນຍາ</u> 7:1-2

ເມື່ອສິ້ນເສິກສົງຄາມແລະຢູ່ຢ່າງສງົບສຸກແລ້ວກະສັດດາວິດກໍສ້າງພະຣາຊວັງຂອງເພິ່ນດ້ວຍໄມ້ສົນຣາຄາແພງ. ໄມ້ສົນທີ່ເພິ່ນສ້າງພະຣາຊວັງນັ້ນໄດ້ເອົາມາແຕ່ພູເຂົາເລບານອນພຸ້ນ ໄມ້ສົນນັ້ນໃນເວລານັ້ນມີນັກປຽບທຽບຄົນນຶ່ງກ່າວວ່າອາດຈະປຽບທຽບໃສ່ໄມ້ Mahogany (ຕົ້ນໝາກກອນການີ) ໃນປະເທດອະເມຣິກາທີ່ຫາຍາກທີ່ສຸດ. ດາວິດນັ່ງສັງເກດເບິ່ງພຣະຣາຊວັງຂອງເພິ່ນດ້ວຍຄວາມຍິນດີທີ່ພຣະເຈົ້າໄດ້ອວຍພອນເພິ່ນຫລາຍປານນີ້. ໃນຂະນະທີ່ ເພິ່ນກຳລັງຊົມພຣະຣາຊວັງຢູ່ນັ້ນເພິ່ນກໍໄດ້ຄຶດເຫັນຫີບພຣະສັນຍາຂອງພຣະເຈົ້າ *"ເບິ່ງແມ ຂ້າພະເຈົ້າກຳລັງຢູ່ໃນ ເຮືອນທີ່ສ້າງດ້ວຍໄມ້ສົນ ແຕ່ວ່າຫີບສັນຍາຂອງພຣະເຈົ້າໄດ້ເອົາໄວ້ໃນຕູບຜ້າເຕັນ"* (ຂໍ້ 2). ສຳລັບຂ້າພະເຈົ້າເຂົ້າໃຈວ່າເພິ່ນຄຶດຖືກແລ້ວ ດ້ວຍວ່າເພິ່ນຄຶດເຫັນພຣະເຈົ້າຊົງນຳເພິ່ນຜ່ານຜ່າອຸປສັກຕ່າງໆນາໆ ຈາກເສິກສົງຄາມ, ຈາກການຕາມລ້າຂອງຊາອູນ (ຊາມູເອນນຶ່ງ 19). ຈາກເດັກລ້ຽງແກະໃນທົ່ງນາຈົນກາຍເປັນເຈົ້າຊີວິດຜູ້ມີຊື່ສຽງໂດ່ງດັງ ໃນພຣະທັມ (ຊາມູເອນນຶ່ງ 16:11).

ເຣື່ອງດາວິດຕອນນີ້ສອນເຮົາທັງຫລາຍວ່າເມື່ອກ່ອນນີ້ເຮົາທັງຫລາຍເປັນຂ້ອຍຂ້າຂອງຄວາມຜິດບາບ, ຄໍາວ່າຂ້ອຍຂ້າຂອງຄວາມຜິດບາບມີຄວາມໝາຍວ່າເຮົາເຮັດບາບຫລາຍຢ່າງໂດຍບໍ່ຮູ້ວ່າຕົນເອງເຮັດບາບ ເພາະວ່າຄວາມບາບທີ່ອາສັຍໃນຈິດໃຈຂອງເຮົານັ້ນ ບັງຄັບໃຫ້ເຮົາເຮັດໄປທົ່ວທິບຄ້າຍຄືວິນຍານຊົ່ວຮ້າຍເຂົ້າສິງໃນຮ່າງຂອງຄົນແລ້ວກໍທໍາຮ້າຍຕົນເອງ ແລະທໍາຮ້າຍຜູ້ອື່ນດ້ວຍວາຈາ ແລະການກະທໍາຊົ່ວອື່ນໆອີກ. ເມື່ອກ່ອນເຮົາທັງຫລາຍເປັນຄົນແນວນັ້ນ ແຕ່ດຽວນີ້ພຣະເຈົ້າໄດ້ຊົງໄຖ່ເຮົາທັງຫລາຍດ້ວຍພຣະໂຣຫິດອັນປະເສີດຂອງພຣະບຸດພຣະອົງຄືພຣະເຢຊູຄຣິດ ແລ້ວເຮົາທັງຫລາຍຈຶ່ງບໍ່ດໍາເນີນຊີວິດເດີມອີກຕໍ່ໄປ ຈຶ່ງສົມຄວນຈະຄິດເຖິງພຣະຄຸນພຣະເຈົ້າໂດຍການກະທໍາເພື່ອຕອບແທນບຸນຄຸນພຣະເຈົ້າເໝືອນດາວິດ.

ເມື່ອກະສັດດາວິດຄິດເຖິງພຣະຄຸນພຣະເຈົ້າ ໃນເວລາເພິ່ນຢູ່ສຸກສຸກສໍາບາຍໃນຫໍຜາສາດຣາຊວັງທີ່ເຮັດດ້ວຍໄມ້ສົນຣາຄາແພງ, ເພິ່ນກໍຄິດວ່າເພິ່ນແມ່ນເດັກນ້ອຍລ້ຽງແກະຜູ້ທີ່ພຣະເຈົ້າຊົງຍົກຂຶ້ນມາເປັນກະສັດຈົນໄດ້ຢູ່ໃນຫໍຜາສາດຣາຊວັງແຖມຍັງມີຜູ້ບົວຣະບັດຈົນນັບບໍ່ຖ້ວນ *ແຕ່ວ່າຫີບຄໍາສັນຍາຂອງພຣະເຈົ້າໄດ້ເອົາໄວ້ຢູ່ໃນຕູບຜ້າເຕັ້ນ.* ຄໍາວ່າຕູບພາສາລາວມີຄວາມໝາຍວ່າ ເຮືອນນ້ອຍໆຂອງຄົນທຸກຈົນ. ດ້ວຍເຫດນີ້ເພິ່ນຈຶ່ງຄິດຈະປຸກພຣະວິຫານສໍາລັບເກັບມ້ຽນຫີບຄໍາສັນຍາຂອງພຣະເຈົ້າ. ສໍາລັບທ່ານເດ ເມື່ອທ່ານຕົກແຕ່ງບ້ານເຮືອນຕົນໃຫ້ສະອາດສວຍງາມແລ້ວຍັງມີເຄື່ອງເອ້ຣາຄາແພງຫລາຍຢ່າງ. ວັນນີ້ທ່ານຈະຕົກແຕ່ງໂບດຂອງທ່ານທີ່ທ່ານຮ້ອງວ່າວິຫານຢ່າງໃດແດ່?

**ພຣະເຈົ້າຊົງເປັນຜູ້ລ້ຽງ** 7:3-7

ດາວິດໄດ້ເລົ່າຄວາມຄິດຂອງເພິ່ນ ທີ່ຈະສ້າງພຣະວິຫານສໍາລັບຫີບຄໍາສັນຍາຕໍ່ນາທານຜູ້ຮັບໃຊ້ພຣະເຈົ້າປະຈໍາພຣະຣາຊວັງຟັງເພື່ອເປັນການປຶກສາແລະຂໍຄໍາເຫັນ ຝ່າຍນາທານຈຶ່ງອອກຄໍາເຫັນວ່າ "*ຂໍຈົ່ງເຮັດຕາມສິ່ງທີ່ພຣະອົງພໍພຣະທັຍເຖີ້ນ ເພາະວ່າພຣະຜູ້ເປັນເຈົ້າຊົງສຖິດຢູ່ນໍາພຣະອົງ*" (ຂໍ້ 3). ເຮົາສັງເກດເຫັນວ່າດາວິດບໍ່ແມ່ນຄິດແລ້ວເຮັດໂລດ ເພິ່ນ ຍັງໄດ້ປຶກສາກັບນາທານຜູ້ຮັບໃຊ້ພຣະເຈົ້າສາກ່ອນ ແຕ່ເຖິງປານນັ້ນຜູ້ຮັບໃຊ້ຍັງບອກເພິ່ນວ່າ *ຂໍຈົ່ງເຮັດຕາມສິ່ງທີ່ພຣະ ອົງພໍພຣະທັຍເຖີ້ນ* ( ແປວ່າຈົ່ງເຮັດຕາມໃຈມັກຂອງທ່ານໂລດ). ນາທານຍັງຢໍ້າອີກວ່າ *ເພາະວ່າພຣະຜູ້ເປັນເຈົ້າຊົງ ສຖິດຢູ່ນໍາພຣະອົງ* ໝາຍຄວາມວ່າພຣະເຈົ້າຊົງຢູ່ກັບທ່ານໆຈະເຮັດແນວໃດກະຖືກ, ນັ້ນເປັນພຽງຄໍາເຫັນຂອງຜູ້ຮັບໃຊ້ພຣະເຈົ້າ.

ພໍເຖິງເວລາຄໍານາທານກໍນອນຫລັບພຣະເຈົ້າກໍກ່າວກັບນາທານທາງຄວາມຝັນວ່າ "ຈົ່ງໄປບອກດາວິດຜູ້ຮັບໃຊ້ຂອງເຮົາວ່າ "*ເຮົາເວົ້າກັບລາວດັ່ງນີ້ ເຈົ້າບໍ່ແມ່ນຜູ້ທີ່ສ້າງພຣະວິຫານໃຫ້ເຮົາຢູ່ ນັບຕັ້ງແຕ່ເຮົາໄດ້ນໍາເອົາຊາວອິສຣາເອນອອກມາຈາກເອຢິບຈົນເທົ່າເຖິງທຸກມື້ນີ້ ເຮົາບໍ່ໄດ້ຢູ່ໃນພຣະວິຫານເລີຍ ເຮົາໄດ້ຍົກຍ້າຍໄປນໍາພວກເຈົ້າ*" (ຂໍ້ 5-6). ນາທານເປັນຜູ້ຮັບໃຊ້ທີ່ມີຕໍາແໜ່ງ Prophet ແປວ່າ ຜູ້ຮູ້ເຫດການຂ້າງໜ້າ ຫລືຜູ້ທໍານວຍ ຫລື ຜູ້ເຜີຍແຜ່ປະຈໍາສມັຍກະສັດ. ພຣະເຈົ້າບໍ່ໄດ້ກ່າວຕໍ່ດາວິດໂດຍຕົງແຕ່ບອກໃຫ້ນາທານເປັນຜູ້ໄປບອກກັບດາວິດຊຶ່ງເປັນການບົ່ງບອກວ່າພຣະເຈົ້າເລືອກເວົ້ານໍາຜູ້ຮັບໃຊ້ທີ່ໃກ້ຊິດກັບພຣະອົງ. ພຣະເຈົ້າກ່າວຕໍ່ໄປອີກວ່າ "*ເຮົາບໍ່ໄດ້ຖາມພວກຜູ້ ປົກຄອງຜູ້ທີ່ເຮົາແຕ່ງຕັ້ງໃຫ້ເປັນຜູ້ດູແລໄພ່ພົນຂອງເຮົາເລີຍວ່າ ເປັນຫຍັງພວກເຈົ້າຈຶ່ງບໍ່ສ້າງວິຫານດ້ວຍໄມ້ສົນ ໃຫ້ເຮົາຢູ່*" (ຂໍ້7). ພຣະເຈົ້າບໍ່ອະນຸຍາດໃຫ້ດາວິດສ້າງພຣະວິຫານຂອງພຣະອົງ ແຕ່ພຣະອົງຈະອະນຸຍາດໃຫ້ເຊື້ອສາຍຂອງດາວິດສ້າງພຣະວິຫານ (ຂໍ້ 13). ພຣະເຈົ້າຍັງບອກໃຫ້ນາທານໄປບອກດາວິດວ່າດາວິດເປັນຜູ້ທີ່ພຣະເຈົ້າເລືອກມາເປັນຜູ້ຮັບໃຊ້, ພຣະເຈົ້າເປັນຜູ້ປົກປ້ອງຄຸ້ມຄອງດາວິດອີກ ເຖິງແມ່ນພຣະຣາຊວັງຂອງດາວິດທີ່ສ້າງດ້ວຍໄມ້ສົນຢ່າງດີກໍບໍ່ເໝາະສົມ ກັບພຣະກຽດຂອງພຣະເຈົ້າ. ເຮົາສັງເກດເຫັນວ່າດາວິດຄິດວາງແຜນຢາກສ້າງພຣະວິຫານ ໃຫ້ພຣະເຈົ້າດ້ວຍໃຈໂມທະນາ ດ້ວຍເຫດນີ້ພຣະເຈົ້າຈຶ່ງອວຍພອນໃຫ້ດາວິດມີຄວາມສຸກຢູ່ຫໍຜາສາດຣາຊວັງຂອງເພິ່ນ. ເຣື່ອງນີ້ມີຄວາມໝາຍວ່າພຣະເຈົ້າຊົງລ້ຽງດູເບິ່ງແຍງຜູ້ຮັບໃຊ້ແລະຄອບຄົວຜູ້ຮັບໃຊ້ພຣະອົງສເມີ.

__ພຣະສັນຍາຕໍ່ດາວິດ__ 7:8-11

ຫາກເຮົາອ່ານຂໍ້ 6 ເຮົາຈະເຫັນວ່າພຣະເຈົ້າຊົງຢູ່ກັບໄພ່ພົນຂອງພຣະອົງບໍ່ແມ່ນຢູ່ໃນພຣະວິຫານ *"ເຮົາໄດ້ຍົກຍ້າຍໄປນໍາພວກເຈົ້າ"* (ຂໍ້ 6ຂ). ຄວາມຈິງແລ້ວຫາກພຣະເຈົ້າພໍພຣະທັຍພຣະອົງກໍຈະມີຣະມິດສ້າງພຣະວິຫານພຣະອົງເອງຢ່າງສວຍງາມຊຶ່ງບໍ່ມີສິ່ງໃດມາປຽບໄດ້, ແຕ່ພຣະເຈົ້າຊົງພໍພຣະທັຍທີ່ຈະຢູ່ກັບໄພ່ພົນຂອງພຣະອົງ. ຢ່າເຂົ້າໃຈຜິດວ່າພຣະເຈົ້າປະຕິເສດການສ້າງພຣະວິຫານຂອງດາວິດ ແຕ່ຫມາຍຄວາມວ່າພຣະເຈົ້າຈະອວຍພອນດາວິດໃນເມື່ອເພິ່ນຄິດຕອບສນອງພຣະຄຸນພຣະເຈົ້າ. ພຣະພອນຂອງດາວິດມີດັ່ງຕໍ່ໄປນີ້;

ພຣະເຈົ້າຊົງບອກນາທານຜູ້ຮັບໃຊ້ຂອງພຣະອົງໄປບອກເຕືອນດາວິດວ່າ *ເຈົ້າເປັນຄົນລ້ຽງແກະຢູ່ຕາມທົ່ງນາເຮົາໄດ້ເອົາເຈົ້າມາເປັນຜູ້ປົກຄອງຊາວອິສຣາເອນໄພ່ພົນຂອງເຮົາ ເຮົາໄດ້ຢູ່ກັບເຈົ້າທຸກບ່ອນທີ່ເຈົ້າໄປແລະໄດ້ທໍາໃຫ້ສັດຕຣູທັງຫລາຍຂອງເຈົ້າພ່າຍແພ້ ເຮົາໄດ້ສ້າງເຈົ້າເທົ່າກັບຜູ້ຍິ່ງໃຫຍ່ໃນໂລກນີ້ ເຮົາຈະເລືອກບ່ອນສໍາລັບຊາວອິສຣາເອນຂອງເຮົາ ຈະໃຫ້ພວກເຂົາຢູ່ໃນບ່ອນນັ້ນໂດຍປາສຈາກການລົບກວນທຸກຢ່າງ ນັບຕັ້ງແຕ່ພວກເຂົາເຂົ້າມາຢູ່ໃນແຜ່ນດິນນີ້ ພວກເຂົາຈະຖືກພວກທະຫານເກັ່ງກ້ານມາສູ້ຣົບ ແຕ່ວ່າຄຣາວນີ້ຈະບໍ່ມີເຫດການຢ່າງໃດເກີດຂຶ້ນອີກ ເຮົາຂໍສັນຍາວ່າ ເຮົາຈະຮັກສາເຈົ້າໃຫ້ພົ້ນຈາກສັດຕູທັງຫລາຍຂອງເຈົ້າ ແລະຈະໃຫ້ເຈົ້າມີເຊື້ອສາຍສືບຕໍ່ໄປ"* (ຂໍ້ 8-11).

ສລູບພຣະພອນຕອນນີ້ມີດັ່ງນີ້; 1. ຈະເຮັດໃຫ້ດາວິດເດັກລ້ຽງແກະເປັນໃຫຍ່. 2. ເລືອກບ່ອນດີສໍາລັບອິສຣາເອນ. 3. ຈະໃຫ້ດາວິດພັກຜ່ອນແລະພົ້ນຈາກສັດຕຣູ. ແລະ 4. ຈະໃຫ້ເຊື້ອສາຍສືບໄປເພື່ອປົກຄອງ. ເພື່ອຄວາມເຂົ້າໃຈເຣື່ອງເຊື່ອສາຍດາວິດສືບໄປຂ້າພະເຈົ້າຂໍນໍາທ່ານ ກັບຄືນໄປຍັງບົດນໍາດັ່ງນີ້; ຈາກກະສັດດາວິດເຖິງສມັຍບາບີໂລນມີ 14 ຊົ່ວຄົນ ແລະຈາກສມັຍບາບີໂລນຫລົ້ມຈົມມາເຖິງສມັຍພຣະເຢຊູຄຣິດມີ 14 ຊົ່ວຄົນ, ຄໍາສັນຍາຂອງອົງພຣະຜູ້ເປັນເຈົ້າໃນສມັຍຂອງດາວິດມາຈົນເຖິງພຣະເຢຊູຄຣິດລົງມາເກີດກໍນັບວ່າເປັນເວລາ 28 ຊົ່ວຄົນ. ພຣະເຢຊູເປັນເຊື້ອສາຍຂອງດາວິດ (ມັດທາຍ 1:17). *"ເພາະເພິ່ນເປັນເຊື້ອສາຍແລະວົງສະກຸນດຽວກັນກັບດາວິດ"* (ລູກາ 2:4).

__ຊົງອວຍພອນຕລອດໄປ__ 7:12-17

ເມື່ອເຮົາອ່ານມາເຖິງບ່ອນນີ້ເຮົາກໍເຂົ້າໃຈທັນທີວ່າພຣະເຈົ້າກໍາລັງເວົ້າເຖິງລູກຊາຍຂອງດາວິດຈົນເຖິງສມັຍພຣະເຢຊູຄຣິດ, ພຣະເຈົ້າຊົງກ່າວໃນຕອນນີ້ເຮົາເຫັນຄວາມສໍາຄັນຢູ່ສາມປະການດັ່ງນີ້; 1. ພຣະເຈົ້າຈະແຕ່ງຕັ້ງຜູ້ນຶ່ງໃນເຊື້ອສາຍຂອງດາວິດໃຫ້ເປັນເຈົ້າຊີວິດສືບຕໍ່ດາວິດ *"ເຮົາຈະແຕ່ງຕັ້ງຜູ້ນຶ່ງໃນເຊື້ອສາຍຂອງເຈົ້າໃຫ້ເປັນກະສັດແລະຈະໃຫ້ຣາຊອານາຈັກຂອງຜູ້ນັ້ນເຂັ້ມແຂງ"* (ຂໍ້ 12). ຄໍາວ່າເຂັ້ມແຂງມີຄວາມຫມາຍວ່າ ເຂັ້ມແຂງທາງດ້ານການທະຫານ, ການປົກຄອງ ຕລອດເຖິງດ້ານເສດຖະກິດດ້ວຍ. 2. ກະສັດອົງທີ່ສືບຕໍ່ຈາກເຊື້ອສາຍຂອງດາວິດຈະເປັນຜູ້ສ້າງພຣະວິຫານຂອງພຣະເຈົ້ານັ້ນແມ່ນກະສັດຊະໂລໂມນຜູ້ເປັນລູກຊາຍເພິ່ນ ທີ່ເກີດຈາກນາງເບັດເຊບາ(12:24). ພຣະເຈົ້າຊົງກ່າວດັ່ງນີ້; *"ເຮົາຂໍບອກຢ່າງແນ່ນອນວ່າ ເຊື້ອສາຍຂອງລາວຈະປົກຄອງຕລອດໄປ ແລະລາວກໍຈະສ້າງວິຫານໃຫ້ແກ່ເຮົາ"* (ຂໍ້ 13). 3. ພຣະເຈົ້າຈະຮັກກະສັດຄືພໍ່ຮັກລູກ ເມື່ອຜິດຈະລົງໂທດ ແຕ່ຈະບໍ່ຊັງ *"ເຮົາຈະເປັນພໍ່ຂອງລາວ ແລະລາວຈະເປັນລູກຊາຍຂອງເຮົາ ເມື່ອລາວເຮັດຜິດ ເຮົາຈະລົງໂທດເໝືອນດັ່ງພໍ່ລົງໂທດລູກ ແຕ່ເຮົາຈະບໍ່ເຊົາຮັກລາວ"* (ຂໍ້ 14). ນາທານໄດ້ບອກສິ່ງເຫລົ່ານີ້ແກ່ດາວິດຕາມຄໍາສັ່ງຂອງອົງພຣະຜູ້ເປັນເຈົ້າທຸກປະການ.

__ຄໍາຖາມ:__

1. ດາວິດແມ່ນໃຜໃນເບື້ອງຕົ້ນ? ຕໍ່ມາເພິ່ນມີຕໍາແຫນ່ງອັນໃດ?

2. ລູກຊາຍຂອງເພິ່ນແມ່ນໃຜ? ແລະເພິ່ນເຮັດການອັນໃດສໍາຄັນແດ່?

3. ພຣະເຢຊູຄຣິດເປັນເຊື້ອສາຍຂອງດາວິດຢ່າງໃດ?

4. ຫລັງຈາກສງົບເສິກແລ້ວດາວິດຢູ່ໃສ? ແລະເພິ່ນຄິດຢາກເຮັດຫຍັງຕອບພຣະຄຸນພຣະເຈົ້າ?

5. ດາວິດໄດ້ປຶກສາເຣື່ອງນີ້ກັບໃຜ? ແລະມີຄໍາຕອບຢ່າງໃດ?

6. ດາວິດຄິດຖືກຫລືຜິດຢ່າງໃດໃນເຣື່ອງຢາກສ້າງພຣະວິຫານ?

7. ເປັນຫຍັງພຣະເຈົ້າບໍ່ອະນຸຍາດໃຫ້ດາວິດສ້າງພຣະວິຫານ ແລະພຣະເຈົ້າໃຫ້ໃຜສ້າງ?

8. ບົດຮຽນໃນວັນນີ້ສອນທ່ານຢ່າງໃດ?

*ສຈ. ດຣ. ທູນພັນ ວົງສຸຣິດ*

## ບົດຮຽນທີ 12
## ບາບໃນອຳນາດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນສອງ 11:2-15; 12-1-15
**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນສອງ 11--12
**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າການໃຊ້ອຳນາດຂົ່ມເຫງຜູ້ອື່ນນຳໄປເຖິງພຣະພິໂຣດ
**ຄຳຖາມເພື່ອການສຳຣວດ:** ເປັນຫຍັງຄົນເຮົາຈຶ່ງບໍ່ຮູ້ວ່າພຣະເຈົ້າຊົງເບິ່ງຢູ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນເຮົາວ່າການກະທຳຜິດຂອງດາວິດເປັນບົດຮຽນທີ່ດີສຳລັບເຮົາ.

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

### ບົດນຳ

ເຣື່ອງທີ່ເກີດຂຶ້ນກັບດາວິດແມ່ນເຣື່ອງຂອງກິເລດຕັນຫາ ເນື່ອງຈາກການຢູ່ສນຸກສຸກສຳບາຍແລະລືມຕົນ. ເພິ່ນມີເວລາຫວ່າງຢ່າງຫລວງຫລາຍດ້ວຍວ່າເພິ່ນບໍ່ໄປຕີເສິກໃນແລ້ງນີ້ກໍເພາະເພິ່ນມີພວກນາຍທະຫານໄປຕໍ່ສູ້ແລ້ວ ເພິ່ນເປັນກະສັດທີ່ມີອຳນາດ ແລະເພິ່ນກໍໃຊ້ອຳນາດໃນທາງຜິດ. ສ່ວນນາງບັດເຊບານັ້ນເບິ່ງປາກົດວ່ານາງບໍ່ໄດ້ສແວງຫາເຣື່ອງການຫລິ້ນຊູ້ແຕ່ຢ່າງໃດ ແຕ່ພໍເມື່ອເຫັນວ່າຈະໄດ້ດີມີອຳນາດກໍເລີຽສວຍໂອກາດບາງທີອາດຈະເປັນເພາະຄວາມງາມ ແລະຄວາມອ້າງວ້າງຂອງນາງທີ່ຜົວບໍ່ຢູ່ກໍວ່າໄດ້.

**ດາວິດເຮັດບາບ** 11:2-15
ຣະດູແລ້ງປີນີ້ເປັນປີທຳອິດທີ່ດາວິດບໍ່ໄດ້ອອກສູ້ຣົບ ເພາະວ່າເພິ່ນມີພວກນາຍທະຫານເປັນຜູ້ສູ້ຣົບແທນເພິ່ນທີ່ແນວໜ້າ ແຕ່ເພິ່ນເອງກຳລັງປະສົບສິ່ງຄາມບາບຢູ່ແນວຫລັງ, ພຣະຄັມພີບອກວ່າໃນແລງວັນນຶ່ງດາວິດຍ່າງຂຶ້ນໄປເທິງຫລັງຄາເຮືອນພຣະຣາຊວັງ ກໍພົບກັບສິ່ງທີ່ບໍ່ຄາດຝັນ ຄືເຫັນຍິງສວຍງາມອາບນ້ຳຢູ່ ແຕ່ພຣະຄັມພີບໍ່ໄດ້ບອກວ່ານາງອາບນ້ຳໃນຫ້ອງນ້ຳ ຫລືທີ່ເປີດແປນ ແຕ່ສາຍຕາຂອງດາວິດກໍຊຶ້ນເຂົ້າໄປດ້ວຍໄຟຣາຄະ. *"ດັ່ງນັ້ນກໍສົ່ງຄົນອອກໄປສືບຖາມເບິ່ງວ່ານາງແມ່ນໃຜ ແລ້ວຮູ້ວ່ານາງຊື່ບັດເຊບາລູກສາວເອລີອັມ ແລະເປັນເມັຽຂອງອູຣີອາຊາວຮິດຕີ ດາວິດໄດ້ສົ່ງຄົນໄປນຳເອົານາງມາ ພວກເຂົາກໍພານາງມາຫາພະອົງ ແລ້ວດາວິດກໍສົມສູ່ກັບນາງ"* ຂໍ້ 3-4"

ມີນັກວິຈານຜູ້ນຶ່ງວິຈານວ່າເຫດທີ່ເປັນເຊັ່ນນີ້ກໍເພາະວ່າດາວິດປະລະໜ້າທີ່ຂອງເພິ່ນ ເພາະຕາມທຳມະດາເພິ່ນຈະຕ້ອງໄປສູ້ຣົບ ແຕ່ໃນເວລານີ້ເພິ່ນປະໃຫ້ພວກນາຍທະຫານແລະທະຫານຢູ່ໃນເຂດອັນຕະລາຍ ແຕ່ສ່ວນຕົວເພິ່ນຫາຄວາມສຸກສ່ວນຕົວ. ນັກວິຈານເວົ້າອີກວ່າ ຄົນຜິດກັນທີ່ໂຮງງານທຸກມື້ນີ້ມີແຕ່ພວກບໍ່ເຮັດວຽກໂດຍໃຊ້ເວລາຣາຊການໄປຜິດຖຽງກັນ, ຄົນທີ່ເຮັດງານແທ້ຈະບໍ່ມີເວລາຈະໄປຜິດກັບຜູ້ໃດ. ດາວິດມີເວລາຫວ່າງກໍເລີຍຍ່າງຫລິ້ນໄປ

ແລະກໍເຫັນສິ່ງທີ່ບໍ່ຄາດຄິດ ແຕ່ເພິ່ນກໍຄິດໃນເຣື່ອງນີ້ຢູ່ ຈຶ່ງໄດ້ລົງມືໃຊ້ອຳນາດໄປລາກດຶງບັດເຊບາມາເປັນເມັຽຈົນໄດ້.

ການລໍ້ລວງຄັ້ງນີ້ເປັນການລໍ້ລວງແບບງຽບເຢັນທີ່ຈະລໍ້ລວງຄົນຂອງພຣະເຈົ້າໃຫ້ຫລົງກົນອຸບາຍຂອງຊາຕານ, ເຮົາບໍ່ຮູ້ວ່າດາວິດເຄີຍເຫັນນາງບັດເຊບາມາແຕ່ກ່ອນຫລືບໍ່ ດ້ວຍວ່າທ່ານເອລີອັມ ຜູ້ເປັນພໍ່ຂອງບັດເຊບາກໍແມ່ນນາຍທະຫານຜູ້ເກັ່ງກ້າຮອງມາຈາກດາວິດ (ຊາມູເອນສອງ 23:34). ສ່ວນອູຣີອາກໍເປັນທະຫານເກັ່ງກ້າແລະສັດຊື່ຕໍ່ດາວິດ (ຊາມູເອນສອງ 23:39). ອີງຕາມພຣະຄັມພີແລ້ວຄອບຄົວນີ້ເປັນຄອບຄົວທີ່ໃກ້ຊິດກັບດາວິດສົມຄວນ ອີກປະການນຶ່ງເຮືອນຂອງນາງບັດເຊບາຕ້ອງບໍ່ຢູ່ໄກຈາກພະຣາຊວັງຂອງດາວິດຈຶ່ງເບິ່ງກັນເຫັນດ້ວຍຕາເປົ່າ, ເມື່ອເຮົາສັນນະສູດເບິ່ງແລ້ວດາວິດອາຈເຫັນນາງບັດເຊບາມາກ່ອນ ແຕ່ບໍ່ແມ່ນເຫັນແບບທີ່ເຫັນໃນເວລານີ້. ຫລັງຈາກດາວິດເຫັນບັດເຊບາອາບນໍ້າແລ້ວພາຍໃນໃຈຂອງເພິ່ນກໍຮ້ອນຮົນ ຈຶ່ງໃຊ້ອຳນາດກະສັດຂົ່ມຂູ່ນາງ. ການຫລົງຜິດຄັ້ງນີ້ເປັນຄັ້ງທີ່ດາວິດເສັຽຫາຍຢ່າງໃຫຍ່ຫລວງຄືເພິ່ນຍອມຖິ້ມກຽດສັກສີຂອງກະສັດ ແລະກຽດໃນການເປັນຄົນຂອງພຣະເຈົ້າແລກປ່ຽນກັບຄວາມງາມຂອງນາງບັດເຊບາ.

ຫລັງຈາກດາວິດໄດ້ສົມສູ່ກັບນາງບັດເຊບາຈົນຕັ້ງທ້ອງແລ້ວກໍຢ້ານເກີດເຣື່ອງໃຫຍ່ ເພິ່ນຈຶ່ງຫາວິທີປົກປ້ອງຄວາມລັບໄວ້ໂດຍວາງແຜນໃຫ້ອູຣີອາຜູ້ເປັນຜົວຂອງນາງທີ່ປະຈຳການຢູ່ແນວໜ້າໃຫ້ກັບຄືນມາຢາມບ້ານເພື່ອລາວຈະສົມສູ່ກັບເມັຽຂອງລາວ *"ສ່ວນດາວິດ ກໍສົ່ງຂ່າວໄປຫາໂຢອາບວ່າ ໃຫ້ທ່ານສົ່ງອູຣີອາ ຄົນຮິດຕີມາຫາຂ້ອຍແດ່ ໂຢອາບກໍສົ່ງອູຣີອາໄປຫາດາວິດ"* (ຂໍ້ 6). ດັ່ງນັ້ນນາຍພົນໂຢອາບຈຶ່ງສົ່ງອູຣີອາກັບແນວຫລັງ, ແຜນນີ້ຍັງໃຊ້ກັນຕາມກອງທະຫານຢູ່ ໂດຍສເພາະຢ່າງຍິ່ງແມ່ນໃຊ້ກັບຄົນທີ່ປາກບໍ່ໄດ້, ອູຣີອາກໍປາກບໍ່ໄດ້ເພາະວ່າເພິ່ນເປັນຄົນ ຮິດຕີຖືວ່າເປັນຄົນຕ່າງດ້າວ, ຫລັງຈາກຖາມຂ່າວຄາວກັນແລ້ວ ດາວິດກໍບອກອູຣີອາໃຫ້ໄປນອນພັກຢູ່ເຮືອນ *"ຈົ່ງກັບໄປພັກຜ່ອນຈັກຄາວຢູ່ເຮືອນເຈົ້າສາ"* (ຂໍ້ 8). ອູຣີອາກໍອອກຈາກພະຣາຊວັງໄປແຕ່ບໍ່ໄດ້ໄປຢູ່ກິນກັບເມັຽຂອງຕົນ.

ດາວິດຮູ້ຂ່າວວ່າອູຣີອາບໍ່ໄດ້ໄປນອນເຮືອນຈຶ່ງເອີ້ນລາວມາສືບຖາມຫລາຍຢ່າງ ແລ້ວຈຶ່ງຊວນລາວກິນເຂົ້າເພື່ອຈະໄດ້ເກືອເຫລົ້າລາວໃຫ້ເມົາແລ້ວລາວກໍຈະໄປນອນນຳເມັຍລາວ, *"ດາວິດໄດ້ເຊີນໃຫ້ລາວມາກິນເຂົ້ານຳ ແລະເກືອເຫລົ້າລາວໃຫ້ເມົາ ແຕ່ວ່າໃນຄືນນັ້ນອູຣີອາຍັງບໍ່ກັບຄືນເມືອເຮືອນ"* (ຂໍ້ 13). ດາວິດໄດ້ພະຍາມຍາມສອງຄັ້ງແລ້ວບໍ່ສຳເຣັດຈຶ່ງວາງແຜນຂ້າອູຣີອາໂດຍສົ່ງອູຣີອາໄປຕາຍທີ່ແນວໜ້າ, *"ເຊົ້າມື້ໃຫມ່ມາດາວິດໄດ້ຂຽນຈົດໝາຍສົ່ງນຳອູຣີອາ ໄປຫາໂຢອາບ ພຣະອົງຂຽນວ່າ ໃຫ້ເຈົ້າສົ່ງອູຣີອາໄປແນວໜ້າບ່ອນທີ່ເຂົາສູ້ຮົບກັນຢ່າງໜັກ ແລ້ວໃຫ້ພວກເຈົ້າຖອຍຫລັງຄືນ ເພື່ອປ່ອຍໃຫ້ອູຣີອາຖືກຂ້າຕາຍຢູ່ທີ່ນັ້ນ"* (ຂໍ້ 14-15). ນາຍພົນໂຢອາບກໍປະຕິບັດຕາມນັ້ນ.

**<u>ຄວາມກ້າຫານແລະວິທີເວົ້າ</u>** 12:1-4

ປະໂລຫິດນາທານຮັບໜ້າທີ່ອັນໃຫຍ່ທີ່ພຣະເຈົ້າມອບໝາຍໃຫ້ເພິ່ນໄປເວົ້າກັບກະສັດດາວິດ, ເຮົາທັງຫລາຍຮູ້ກັນດີຢູ່ແລ້ວວ່ານາທານເປັນປະໂລຫິດປະຈຳພຣະຣາຊວັງຂອງດາວິດ ໜ້າທີ່ຂອງເພິ່ນກໍຄືເປັນຜູ້ຖວາຍບູຊາພຣະເຈົ້າ, ຮັບຄຳສັ່ງຈາກພຣະເຈົ້າແລ້ວບອກກະສັດດາວິດຕລອດເຖິງປະຊາຊົນອິສຣາເອນ. ຜູ້ຮັບໃຊ້ພຣະເຈົ້າຈຳຕ້ອງເປັນຄົນກ້າທີ່ຈະເວົ້າຕາມຄຳສັ່ງຂອງພຣະເຈົ້າ ໂດຍສເພາະຢ່າງຍິ່ງແມ່ນເວົ້າກັບພວກເຈົ້ານາຍ. ນາທານເປັນຄົນກ້າທີ່ຈະເວົ້າຄວາມຈິງແລະເພິ່ນຍັງຮູ້ຈັກວິທີເວົ້າອ້ອມຄ້ອມດັ່ງນີ້; *"ຍັງມີຊາຍສອງຄົນຢູ່ໃນເມືອງດຽວກັນ ຜູ້ນຶ່ງເປັນຄົນຮັ່ງມີແລະອີກຜູ້ນຶ່ງ ເປັນຄົນທຸກຍາກ ຊາຍຮັ່ງມີນັ້ນມີງົວແລະແກະຫລາຍໂຕ ແຕ່ວ່າ ຊາຍຜູ້ທີ່ທຸກຍາກມີພຽງແຕ່ແກະນ້ອຍໂຕດຽວທີ່ລາວຊື້ໄວ້ ລາວໄດ້ລ້ຽງຮັກສາແກະນ້ອຍນັ້ນໄວ້ ໄດ້ເອົາອາຫານເກືອມັນ ແລະໃຫ້ມັນກິນນໍ້າໃນຈອກຂອງລາວທັງນອນເທິງຕັກ ແກະນ້ອຍນັ້ນເປັນເໝືອນລູກສາວຂອງລາວ ມື້ນຶ່ງມີແຂກມາຢ້ຽມຢາມເຮືອນຂອງຄົນຮັ່ງມີ ຄົນຮັ່ງບໍ່ຢາກຂ້າສັດຂອງຕົນໃຫ້ແຂກກິນ ລາວຊໍ້າໄປເອົາແກະນ້ອຍຂອງຄົນທຸກຍາກນັ້ນມາຂ້າແທນ"* (ຂໍ້ 1-4).

ມີສາມຢ່າງທີ່ເຮົາທັງຫລາຍໄດ້ຮັບບົດຮຽນຈາກນາທານຜູ້ຮັບໃຊ້ພຣະເຈົ້າຄື; 1. ເພິ່ນເປັນຄົນສັດຊື່ຕໍ່ໜ້າທີ່ການງານຂອງເພິ່ນ. 2. ເພິ່ນເປັນຄົນກ້າຫານໃນການທີ່ຈະເວົ້າຕາມຄຳສັ່ງຂອງພຣະເຈົ້າ. 3. ເພິ່ນຮູ້ວິທີທີ່ຈະເວົ້າກັບກະສັດ ຜູ້ຮັບໃຊ້ພຣະເຈົ້າທຸກມື້ນີ້ຫລາຍຄົນກໍໄດ້ຮຽນຈາກບົດຮຽນນີ້ ຄືເປັນຜູ້ຮັບໃຊ້ທີ່ສັດຊື່ແລະກ້າຫານໃນການເວົ້າຄວາມຄວາມຈິງ ແຕ່ບາງຄັ້ງຍັງຂາດວິທີການເວົ້າຢູ່ ໂດຍສເພາະແມ່ນຍາມເຮົາເຫັນຄວາມຜິດຂອງຜູ້ອື່ນ ຫລືຄວາມຜິດຂອງໃຜຜູ້ໃດຜູ້ນຶ່ງໃນຄອບຄົວເຮົາກໍເວົ້າໂດຍຂາດຄວາມຣະມັດຣະວັງ. ນາທານເຫັນຄວາມຜິດຂອງດາວິດຢູ່ເຕັມຕາ ແຕ່ເພິ່ນບໍ່ໄດ້ເວົ້າດ້ວຍຄວາມຮ້າຍຂາດ, ວິທີເວົ້າຂອງນາທານບໍ່ແມ່ນໃຊ້ໄດ້ດີແຕ່ວຽກງານຂອງພຣະເຈົ້າ ເທົ່ານັ້ນ ແຕ່ຍັງໃຊ້ໄດ້ດີແກ່ຄອບຄົວຕລອດແລະສະຖານທີ່ອື່ນໆອີກ.

## <u>ພຣະເຈົ້າລົງໂທດດາວິດ</u> 12:5-15

ດາວິດເປັນກະສັດທີ່ພຣະເຈົ້າຮັກແລະລ້ຽງດູເປັນຢ່າງດີ ແຕ່ເນື່ອງຈາກການກະທຳບາບຂອງເພິ່ນຈຶ່ງເຮັດໃຫ້ກາຍເປັນສິ່ງກີດກັ້ນໃນຣະວ່າງເພິ່ນກັບພຣະເຈົ້າ, ອັກຄະສາວົກໂປໂລກ່າວວ່າ *"ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ"* (ໂຣມ 3:23). *"ດ້ວຍວ່າຄ່າຈ້າງຂອງຄວາມບາບນັ້ນຄືຄວາມຕາຍ"* (ໂຣມ 6:23). ຫາກເອົາພຣະທັມທັງສອງຂໍ້ມາພິຈາຣະນາຕໍ່ການກະທຳຂອງດາວິດແລ້ວ ແມ່ນເພິ່ນຂາດຈາກຣັສມີຂອງພຣະເຈົ້າຈຶ່ງເຮັດບາບແນວນັ້ນ ຫາກເພິ່ນຢູ່ໃນຣັສມີຫລືຢູ່ໃນພຣະເຈົ້າເພິ່ນກໍຈະບໍ່ເຮັດບາບ ແລະຄວາມບາບຂອງເພິ່ນທີ່ໄດ້ເຮັດນັ້ນເອງເຮັດໃຫ້ເພິ່ນຕາຍຈາກພຣະເຈົ້າ ຄືຄວາມສຳພັນໃນຣະຫວ່າງພຣະເຈົ້າແລະດາວິດໄດ້ຫ່າງໄກອອກໄປ.

ຫລັງຈາກນາທານເລົ່ານິທານສົມທຽບຈົບລົງ ດາວິດກໍໃຈຮ້າຍຢ່າງຮຸນແຮງແກ່ຊາຍຮັ່ງມີໂດຍຄິດວ່າຊາຍນັ້ນສົມຄວນຕາຍ ແລະລາວຈະຕ້ອງໃຊ້ຄືນສີ່ເທົ່າທີ່ລາວເຮັດ. ດາວິດກ່າວດ້ວຍຄວາມໃຈຮ້າຍວ່າ *"ຂ້ອຍຂໍສາບານຕໍ່ພະຜູ້ເປັນເຈົ້າອົງມີພຣະຊົນວ່າ ຊາຍກະທຳຢ່າງນັ້ນຈະຕ້ອງຕາຍ ລາວຕ້ອງໃຊ້ຄືນສີ່ເທົ່າທີ່ລາວໄດ້ເອົາໄປນັ້ນ ເພາະລາວເຮັດສິ່ງທີ່ໂຫດຮ້າຍທີ່ສຸດ"* (ຂໍ້ 5-6). ດາວິດກ່າວດ້ວຍຄວາມໃຈຮ້າຍເມື່ອເພິ່ນເຫັນຄວາມຜິດຂອງຜູ້ອື່ນ ດາວິດຄິດວ່າຈະໃຊ້ອຳນາດທີ່ເພິ່ນມີຈັດການກັບຊາຍຮັ່ງມີນັ້ນ, ເມື່ອເປັນເຊັ່ນນັ້ນກໍເປັນໂອກາດດີທີ່ນາທານຈະເປີດເຜີຍນິທານຂອງເພິ່ນ. *"ນາທານຈຶ່ງເວົ້າຕໍ່ດາວິດວ່າ ພຣະອົງນັ້ນແຫຼະເປັນຊາຍຄົນນັ້ນ"* (ຂໍ້ 7) ຈຶ່ງເຮັດໃຫ້ດາວິດຮູ້ເມື່ອຄຶງໃນການກະທຳບາບຂອງຕົນ. ນາທານເວົ້າກັບດາວິດໃນສິ່ງທີ່ພຣະເຈົ້າຊົງສັ່ງໃຫ້ເວົ້າ ເພິ່ນບອກກັບດາວິດວ່າພຣະເຈົ້າຈະລົງ ໂທດດາວິດ ຂໍ້ 7-12.

ເມື່ອດາວິດໄດ້ຟັງສິ່ງທີ່ພຣະເຈົ້າຕຽມລົງໂທດເພິ່ນແລ້ວເພິ່ນກໍສາຣະພາບວ່າ *"ຂ້າພະເຈົ້າໄດ້ເຮັດຜິດຕໍ່ພຣະຜູ້ເປັນເຈົ້າແລ້ວ"* (ຂໍ້ 13). ເຖິງແມ່ນດາວິດຈະເຮັດຜິດບາບໂດຍການໃຊ້ອຳນາດທີ່ພຣະເຈົ້າໃຫ້ໃນທາງຜິດກໍຕາມແຕ່ເພິ່ນກໍຍອມສາຣະພາບໂດຍໄວເມື່ອຖືກຕັກເຕືອນ, ເຣື່ອງນີ້ເປັນບົດຮຽນດີແກ່ເຮົາທັງຫລາຍ ຄືເມື່ອຖືກຕັກເຕືອນຈົ່ງຍອມສາຣະພາບໂດຍໄວຄືກັບດາວິດແລ້ວພຣະເຈົ້າກໍຈະຜ່ອນເບົາໂທດ.

ດາວິດກ່າວຕອບນາທານດ້ວຍຄວາມໃຈຮ້າຍວ່າ *"ຊາຍກະທຳຢ່າງນັ້ນຈະຕ້ອງຕາຍ"* ການທີ່ເພິ່ນກ່າວເຊັ່ນນັ້ນກໍເພາະເພິ່ນບໍ່ຮູ້ວ່າຊາຍຮັ່ງມີນັ້ນແມ່ນເພິ່ນເອງ, ຫລັງຈາກເພິ່ນຮູ້ວ່າຊາຍນັ້ນແມ່ນເພິ່ນແລ້ວເພິ່ນກໍສາຣະພາບຄວາມຜິດທັນທີ, ເມື່ອເພິ່ນສາຣະພາບແລ້ວເພິ່ນກໍຢ້ານເພິ່ນຕາຍ *"ນາທານຈຶ່ງເວົ້າຂຶ້ນວ່າ ພຣະອົງຈະບໍ່ຕາຍ ເພາະພຣະຜູ້ເປັນເຈົ້າຈະຊົງຍົກໂທດໃຫ້ພຣະອົງ ແຕ່ວ່າລູກຂອງພຣະອົງຈະຕາຍ ເພາະພຣະອົງໄດ້ເຮັດຢ່າງນີ້ເປັນການດູຖູກພຣະເຈົ້າ"* (ຂໍ້ 14-15).

## <u>ຄຳຖາມ:</u>

1. ເປັນຫຍັງດາວິດຈຶ່ງບໍ່ອອກໄປສນາມຣົບໃນຣະດູແລ້ງ?

2. ເມື່ອເພິ່ນບໍ່ໄປສູ້ຮົບແລ້ວເພິ່ນເຮັດຫຍັງຢູ່ພຣະຣາຊວັງ?

3. ເພິ່ນເຫັນຫຍັງໃນຂະນະທີ່ເພິ່ນຍ່າງເທິງຫລັງຄາເຮືອນ?

4. ເມື່ອເພິ່ນເຫັນແລ້ວເພິ່ນເຮັດແນວໃດ?

5. ຍິງນັ້ນມີຊື່ວ່າແນວໃດ? ເປັນລູກໃຜ ?ເປັນເມັຽໃຜ?

6. ເມື່ອດາວິດສົມສູ່ກັບນາງແລ້ວນາງເປັນຫຍັງບໍ່ບອກຜົວ ຫລືບອກຜູ້ອື່ນ?

7. ເມື່ອຍິງນັ້ນມີລູກນາງເຮັດແນວໃດ?

8. ຫລັງຈາກດາວິດໄດ້ຮັບຂ່າວວ່ານາງມີລູກແລ້ວດາວິດເຮັດແນວໃດ?

9. ຄວາມບາບຂອງດາວິດເຖິງຂັ້ນໃດ?

10. ເປັນຫຍັງດາວິດຈຶ່ງບໍ່ຕາຍ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# <u>ບົດຮຽນທີ 13</u>
# <u>ບັນຫາໃຫຍ່ໃນຄອບຄົວ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ຊາມູເອນສອງ 13:20-21, 30-33; 14:25--15:10; 18:5-15, 33
**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ຊາມູເອນສອງ 13--19
**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ສອນໃຫ້ຮູ້ວ່າຄວາມຜິດບາບຂອງພໍ່ແມ່ອາຈຕົກມາເຖິງລູກຫລານດ້ວຍ
**<u>ຄໍາຖາມເພື່ອການສໍາຣວດ:</u>** ເຮົາຈະເຮັດແນວໃດເພື່ອຈະເປັນພໍ່ແມ່ທີ່ນໍາພຣະພອນມາສູ່ລູກຫລານ
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອເຮົາຈະໄດ້ຮຽນຮູ້ຈາກຄວາມຜິດພາດຂອງດາວິດ.

**<u>ໜ້າທີ່ອັນສໍາຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້</u>**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## <u>ບົດນໍາ</u>

1. ພຣະຄັມພີລາວທີ່ຈະໃຊ້ໃນມື້ນີ້ແມ່ນສະບັບໃໝ່ສີຟ້າແລະສີຂຽວ ທັງນີ້ເນື່ອງຈາກວ່າສະບັບເດີມສີດໍານັ້ນບໍ່ມີ.
2. ຫລັງຈາກກະສັດດາວິດໄດ້ເຮັດຜິດບາບແລ້ວເພິ່ນກໍບໍ່ຕາຍ ດ້ວຍວ່າເພິ່ນສາຣະພາບຜິດຕໍ່ອົງພຣະຜູ້ເປັນເຈົ້າ ແຕ່ໂທດກັມທີເພິ່ນສ້າງນັ້ນຍັງຕາມມາເຖິງພວກລູກຫລານ ເຊັ່ນການຫລິ້ນຊູ້, ການຂົ່ມຂືນ, ການຄາດຕະກັມ. ແຜນການຊົ່ວຮ້າຍ ແລະອື່ນໆອີກ ເຣື່ອງທີ່ເກີດຂຶ້ນກໍຍ້ອນບາບທີ່ດາວິດໄດ້ສ້າງໄວ້ນັ້ນເອງ.
3. ເປັນບົດຮຽນສໍາລັບເຮົາຄືເຮົາຈະຕ້ອງເປັນຜູ້ເຊົາເຮັດບາບ ເພື່ອບາບນັ້ນຈະບໍ່ຕົກເຖິງລູກຫລານຂອງເຮົາ.

**<u>ຜົນກັມຕາມມາ</u>** 13:20-21

ກະສັດດາວິດເຮັດຜິດບາບອັນໃຫຍ່ທີ່ຂ້າອູຣີອາຜົວຂອງນາງບັດເຊບາ ແລະເອົານາງບັດເຊບາມາເປັນເມັຽໃນບົດຮຽນອາທິດແລ້ວ. ຄວາມບາບຍັງວົນວຽນຢູ່ໃນຄອບຄົວຂອງເພິ່ນຄືທ່ານອໍາໂນນລູກຊາຍຈາກເມັຽອື່ນໄດ້ຂົ່ມຂືນນາງຕາມາຜູ້ເປັນນ້ອງສາວຕ່າງແມ່ຂອງລາວ ຄວາມຈິງແລ້ວທ່ານອໍາໂນນບໍ່ແມ່ນຢາກຂົ່ມຂືນນາງ ແຕ່ດ້ວຍໃຈມັກນາງເພາະເປັນສາວທີ່ມີຄວາມງາມຫລາຍ ຫລັງຈາກຂົ່ມຂືນນາງຊໍ້າແລ້ວຊໍ້າເລົ່າກໍຄິດເບື່ອໜ່າຍນາງຈຶ່ງຂັບໄລ່ໄສສົ່ງນາງໜີໄຮ້ຄວາມປານີ. ນາງຕາມາຈໍາເປັນຕ້ອງໜີເພາະຖືກບັງຄັບໃຫ້ອອກຈາກເຮືອນ ໃນຂະນະທີ່ນາງໜີອອກຈາກເຮືອນໄປໂດຍການໄວ້ທຸກຢ່າງໜັກ ໂດຍເອົາຂີ້ເຖົ່າໂຮຍໃສ່ຫົວ, ຈີກເສື້ອຄຸມຊັ້ນນອກ ແລະເອົາມືອັດໜ້າເພາະຄວາມອັບອາຍ (ໃນສັງຄົມຂອງຄົນຍິວການກະທໍາເຊັ່ນນີ້ແມ່ນການໄວ້ທຸກຢ່າງແສນສາຫັດ) ໃນເວລານັ້ນອັບຊາໂລມຜູ້ເປັນອ້າຍຂອງນາງໄດ້ຮູ້ວ່າມີຫຍັງເກີດຂຶ້ນຈຶ່ງເລົ້າໂລມໃຈນ້ອງສາວໂດຍຄິດໃນໃຈວ່າຈະຕ້ອງແກ້ແຄ້ນແທນນ້ອງສາວໃຫ້ໄດ້.

*"ເມື່ອອັບຊາໂລມອ້າຍຂອງນາງເຫັນຈຶ່ງຖາມວ່າ ອໍາໂນນໄດ້ຂົ່ມຂືນສໍາເລົາເຈົ້າແມ່ນບໍ່? ນ້ອງເອີຍ! ຢ່າເປັນທຸກໃຈເພາະເຣື່ອງນີ້ເກີນໄປ ລາວເປັນອ້າຍຕ່າງແມ່ຂອງເຈົ້າ ຢ່າບອກຜູ້ໃດຜູ້ໜຶ່ງຮູ້ເຣື່ອງນີ້"* (ຂໍ້ 20ກ). ຫລັງຈາກອັບຊາໂລມ ເລົ້າໂລມໃຈນ້ອງແລ້ວກໍຮັບເອົານ້ອງມາຢູ່ເຮືອນນໍາ. *"ດັ່ງນັ້ນນາງຈຶ່ງຕາມມາອາສັຍຢູ່ໃນ ເຮືອນຂອງອັບຊາ*

*ໂລມທັງໂສກເສົ້າແລະເປົ່າປ່ຽວ* " (ຂໍ້ ໒໐໒). ໃນຂະນະທີ່ນາງຢູ່ນຳອ້າຍອັບຊາໂລມນັ້ນນາງບໍ່ຄ່ອຍອອກນອກເຮືອນໃນເທົ່າໃດ ເພາະຄວາມເສັຽໃຈແລະຄວາມອາຍຈຶ່ງຊຸກຕົວຢູ່ແຕ່ໃນເຮືອນ. ເຣື່ອງນີ້ຍັງລ່ວງມາຮອດພວກຜູ້ຍິງທຸກມື້ນີ້ຄືກັນ. ພວກຍິງທັງຫລາຍໃນເວລານີ້ຫາກມັກຮັກຜູ້ໃດກໍໄປຢູ່ໄປນອນນຳຜູ້ນັ້ນໂລດ ເພາະຄິດວ່າເຂົາມັກຮັກແລະຈະແຕ່ງງານກັບຕົນ ແຕ່ພໍພວກຜູ້ຊາຍເຂົາສົມໃຈແລ້ວເຂົ້າກໍຖິ້ມຈຶ່ງເປັນຄວາມເຈັບແສນສາຫັດແລະຍັງເປັນຄວາມບາບໃນຖານລ່ວງປະເວນີອີກ.

ຂ່າວຮ້າຍເຣື່ອງຂອງອັບໂຊໂລມແລະນາງຕາມາກໍໄປເຖິງຫູຂອງກະສັດດາວິດເພິ່ນຈຶ່ງຮ້າຍຫລາຍ ແຕ່ບໍ່ໄດ້ມີການລົງໂທດອຳໂນນແຕ່ຢ່າງໃດ "*ເມື່ອກະສັດໄດ້ຍິນເຖິງເຣື່ອງນີ້ ເພິ່ນຈຶ່ງໂກດຮ້າຍ*" (ຂໍ້ ໒1). ຄຳຖາມມີຢູ່ວ່າກະສັດດາວິດໂກດຮ້າຍ ແຕ່ເປັນຫຍັງເພິ່ນຈຶ່ງບໍ່ຮ້າຍ ບາງທີເພິ່ນອາດຈະຄິດເຖິງບາບກັມຂອງເພິ່ນທີ່ໄດ້ຂົ່ມຂືນນາງບັດເຊບາກໍເປັນໄດ້ຫລືຫາກເພິ່ນຈະລົງໂທດອຳໂນນ ເພິ່ນກໍອາຄິດເຫັນຄວາມຜິດຂອງເພິ່ນທີ່ພຣະເຈົ້າບໍ່ໄດ້ລົງໂທດເພິ່ນເຖິງຕາຍຕາມ ຄຳເວົ້າຂອງເພິ່ນກັບນາທານວ່າ "*ຂ້ອຍຂໍສາບານຕໍ່ພຣະຜູ້ເປັນເຈົ້າອົງມີພຣະຊົນວ່າ ຊາຍກະທຳຢ່າງນັ້ນຈະຕ້ອງຕາຍ ລາວຕ້ອງໃຊ້ຄືນສີ່ເທົ່າທີ່ລາວໄດ້ເອົາໄປນັ້ນ ເພາະລາວເຮັດສິ່ງທີ່ໂຫດຮ້າຍທີ່ສຸດ*" (12: 5-6). ດາວິດເວົ້າໃນຕອນນີ້ວ່າລາວຈະຕ້ອງໃຊ້ຄືນສີ່ເທົ່າຈະກາຍມາເປັນຄວາມຈິງ ດ້ວຍວ່າທັງຍິງແລະຊາຍທີ່ຂົ່ມຂືນກັນນັ້ນເປັນລູກຍິງຊາຍ ຂອງເພິ່ນເອງ ສ່ວນອັບຊາໂລມຜູ້ເປັນອ້າຍກໍກຽດຊັງນ້ອງຊາຍອຳໂນນຈົນເບິ່ງບໍ່ໄດ້.

<u>ອັບຊາໂລມແກ້ແຄ້ນແທນນ້ອງສາວ</u> 13:30-33

ສອງປີຕໍ່ມາຫລັງຈາກເຫດການສງົບລົງອັບຊາໂລມຈຶ່ງວາງແຜນຂ້າອຳໂນນໂດຍຈັດງານກະລາຕັດຂົນແກະຂຶ້ນແລ້ວເຊື້ອເຊີນເອົາພວກອ້າຍນ້ອງຂອງຕົນເຂົ້າຮ່ວມໃນງານນັ້ນ. ຝ່າຍອັບຊາໂລມໄດ້ສັ່ງຄົນໃຊ້ຂອງຕົນເປັນຜູ້ຂ້າອຳໂນນໃນຂະນະທີ່ລາວເມົາ ດັ່ງນັ້ນພວກຄົນໃຊ້ກໍປະຕິບັດຕາມຄຳສັ່ງຂອງອັບຊາໂລມສັງຫານອຳໂນນ ສ່ວນອ້າຍນ້ອງຜູ້ອື່ນກໍພາກັນປົບໜີໄປເຮືອນດ້ວຍຄວາມຢ້ານ ເວລາເຂົາຍັງບໍ່ທັນຮອດເຮືອນເທື່ອກະສັດດາວິດກໍໄດ້ຮັບຂ່າວວ່າລູກຊາຍຂອງເພິ່ນຖືກຂ້າຕາຍໝົດ "*ໃນຂະນະທີ່ພວກເຂົາພວມກັບເມືອນັ້ນ ກະສັດດາວິດກໍໄດ້ຮັບແຈ້ງວ່າ ອັບຊາໂລມໄດ້ຂ້າພວກລູກຊາຍຂອງທ່ານໂດຍບໍ່ມີຜູ້ໃດເຫລືອເລີຍ*" (ຂໍ່ 30). ອັບຊາໂລມອາດຈະຕັ້ງໃຈລໍ້ຖ້າເຣື່ອງອຳໂນນຂົ່ມຂືນນາງຕາມາໃຫ້ເຢັນລົງກ່ອນເພື່ອກະສັດດາວິດຈະວາງໃຈເພິ່ນ ຫລືບາງທີອາດຈະເປັນເພາະວ່ານາງຕາມາມີຄວາມທຸກໂສກເສົ້າຫລາຍໃນຂະນະທີ່ຢູ່ໃນເຮືອນເພິ່ນສອງປີນັ້ນຈຶ່ງເຮັດໃຫ້ໄຟແຫ່ງຄວາມຄຽດແຄ້ນລຸກໃໝ້ຢ່າງໃຫຍ່ຫລວງ, ໃຫ້ເຮົາສັງເກດເບິ່ງວ່າອຳໂນນຈະຖືກຂ້ານັ້ນແມ່ນຕອນເພິ່ນເມົາເຫລົ້າ ເພາະວ່າຄົນເມົາບໍ່ມີກຳລັງອັນໃດປ້ອງກັນຕົວ. ແຜນຊົ່ວຮ້າຍອ້າຍຂ້ານ້ອງກໍແມ່ນຍ້ອນຄວາມບາບຂອງດາວິດຜູ້ເປັນພໍ່ທີ່ສ້າງໄວ້. ບົດຮຽນສຳລັບເຮົາຄືຢ່າສ້າງບາບກັມໄວ້ເພື່ອຈະບໍ່ຕົກມາເຖິງລູກຂອງເຮົາ ພ້ອມທັງການມຶນເມົາອາດຈະເຮັດໃຫ້ເຮົາເສັຽສະຕິບໍ່ຣະວັງຕົວກໍເປັນໄດ້.

ເມື່ອກະສັດໄດ້ຮັບຂ່າວວ່າລູກຊາຍຕໍ່ລູກຊາຍຂ້າກັນຈົນໝົດເພິ່ນກໍຈີກເຄື່ອງນຸ່ງຂອງເພິ່ນແລ້ວໝູບໜ້າລົງກັບພື້ນ "*ກະສັດຈຶ່ງລຸກຂຶ້ນຈີກເຄື່ອງນຸ່ງຫົ່ມຂອງຕົນດ້ວຍຄວາມໂສກເສົ້າແລະໝູບໜ້າລົງກັບພື້ນດິນ*" (ຂໍ້ 31). ການຈີກເສື້ອຜ້າເປັນການສະແດງອອກເຖິງຄວາມເສັຽໃຈອັນໃຫຍ່ຂອງຊາວອິສຣາເອນ. ດາວິດໄດ້ຮັບຂ່າວເກີນຄວາມຈິງຄືຂ່າວວ່າພວກລູກຊາຍເພິ່ນຖືກຂ້າຕາຍໝົດນັ້ນບໍ່ມີຄວາມຈິງ, ຕໍ່ມາຫລານຊາຍເພິ່ນຈຶ່ງມາບອກຂ່າວວ່າມີແຕ່ອຳໂນນຜູ້ດຽວທີ່ຖືກຂ້າຕາຍ (ຂໍ້ 3໒). ຈາກນັ້ນມາດາວິດໄດ້ໄວ້ທຸກໃຫ້ລູກຊາຍອຳໂນນເປັນເວລາສາມປີ (ຂໍ້ 38). ຫລັງຈາກອັບຊາໂລມຂ້ານ້ອງຊາຍອຳໂນນແລ້ວກໍປົບໜີໄປຢູ່ເມືອງເກຊູເພື່ອຫລົບໜີຈາກດາວິດ (ຂໍ້ ໒8).

<u>ການຄືນດີເພື່ອກະບົດ</u> 14:25--15:10

ຫລັງຈາກເຫດການນັ້ນມາດາວິດກໍມີແຕ່ຣະທົມຂົມຂື່ນພາຍໃນຈິດໃຈຂອງເພິ່ນ ດ້ວຍຄິດຮອດອັບຊາໂລມຜູ້ເປັນລູກ

ຊາຍ (13:39). ຕໍ່ມາຂ້າຣາຊການປະຈຳພຣະຣາຊວັງຜູ້ນຶ່ງມີຊື່ວ່າ ໂຢອາບວາງແຜນໃຫ້ດາວິດຍອມຮັບເອົາອັບໂຊໂລມກັບຄືນມາ ແລະແຜນການຂອງເພິ່ນກໍເປັນໄປຕາມນັ້ນໂດຍການເຫັນພ້ອມຂອງກະສັດດາວິດ ອັບຊາໂລມຈຶ່ງໄດ້ກັບຄືນມາຍັງເຢຣູຊາເລັມ ແຕ່ບໍ່ໄດ້ຢູ່ໃນພຣະຣາຊວັງດ້ວຍວ່າດາວິດກຽດຊັງລາວ. *"ກະສັດໄດ້ອອກຄຳສັ່ງບໍ່ໃຫ້ອັບຊາໂລມ ຢູ່ໃນພຣະຣາຊວັງຕໍ່ໄປ ເພິ່ນກ່າວວ່າ ເຮົາບໍ່ຢາກເຫັນໜ້າລາວ ດັ່ງນັ້ນອັບຊາໂລມຈຶ່ງຢູ່ໃນເຮືອນຂອງຕົນເອງ ແລະບໍ່ໄດ້ມາປາກົດຕົວຕໍ່ໜ້າກະສັດ* (ຂໍ້ 24).

ຫລັງຈາກສອງປີຜ່ານພົ້ນໄປອັບຊາໂລມຈຶ່ງມີໃຈຢາກເຂົ້າພົບກະສັດດາວິດຜູ້ເປັນພໍ່ ເພິ່ນຈຶ່ງສົ່ງຄົນໃຊ້ໄປຫາໂຢອາບຂ້າຣາຊການຊັ້ນຈ່າຂອງດາວິດເພື່ອຂໍຮ້ອງເພິ່ນໃຫ້ເວົ້າກັບດາວິດໃຫ້ອັບໂຊໂລມເຂົ້າເຝົ້າ ແຕ່ໂຢອາບກໍບໍ່ໄດ້ເອົາໃຈໃສ່ໃນຄຳຮ້ອງຂໍຂອງອັບໂຊໂລມ. ຕໍ່ມາອັບຊາໂລມກໍສັ່ງໄປຫາໂຢອາບອີກແຕ່ໂຢອາບບໍ່ຍອມມາຫາອັບຊາໂລມຈຶ່ງສັ່ງຄົນໃຊ້ຂອງເພິ່ນໄປຈູດທົ່ງນາຂອງໂຢອາບ ແລ້ວເພິ່ນຈຶ່ງມາເຈຣະຈາກັບອັບຊາໂລມ ແລະອັບຊາໂລມຈຶ່ງເວົ້າກັບໂຢອາບວ່າ *"ຂ້ອຍຢາກໃຫ້ເຈົ້າຫາທາງໃຫ້ຂ້ອຍໄດ້ເຂົ້າພົບກະສັດ ແລະຖ້າຂ້ອຍເປັນຄົນຜິດກໍໃຫ້ເພິ່ນຂ້າຂ້ອຍສາ"* (ຂໍ້ 32). ຕໍ່ມາກະສັດດາວິດກໍສົ່ງຄົນໄປຮັບອັບຊາໂລມເຂົ້າພຣະຣາຊວັງ *"ລາວໄດ້ເຂົ້າໄປຂາບລົງຕໍ່ໜ້າກະສັດ ກະສັດໄດ້ຕ້ອນຮັບໂດຍການກອດຈູບ"* (ຂໍ້ 33). ເປັນໂອກາດແຫ່ງຄວາມຊົມຊື່ນຍິນດີທີ່ຄອບຄົວໄດ້ມາພົບກັນ ແລະຢູ່ນຳກັນອີກເທື່ອນຶ່ງ, ແຕ່ມັນກໍເປັນພຽງການເມືອງຂອງອັບຊາໂລມເທົ່ານັ້ນ.

ສີ່ປີຕໍ່ມາອັບຊາໂລມກໍເລີ້ມແຜນການກະບົດຂຶ້ນ ຂໍ້ 7. ອັບຊາໂລມຕົວະດາວິດວ່າໄດ້ສາບານໄວ້ວ່າຫາກໄດ້ກັບຄືນມາຍັງເຢຣູຊາເລັມເພິ່ນຈະນະມັສການພຣະເຈົ້າທີ່ເມືອງເຮັບໂລນ ຂໍ້ 8 ແລະແລ້ວກະສັດກໍອະນຸຍາດໃຫ້ອັບຊາໂລມເຮັດຕາມຄຳຂໍນັ້ນ. ແຜນການກະບົດຂອງອັບຊາໂລມແນບນຽນດີຈົນພົນລະເມືອງທັງລາຍເປັນຝ່າຍຂອງລາວ. *"ຄົນນຳຂ່າວໄດ້ມາລາຍງານຕໍ່ກະ ສັດດາວິດວ່າ ຊາວອິສຣາເອນກຳລັງປະຕິຍານຕົນຈົງຮັກພັກດີຕໍ່ອັບຊາໂລມ ດັ່ງນັ້ນກະສັດດາວິດຈຶ່ງສັ່ງພວກຂ້າຣາຊ ການທັງໝົດ ທີ່ຢູ່ໃນກຸງເຢລູຊາເລັມວ່າ ຖ້າພວກເຮົາຢາກປົບໜີຈາກອັບຊາໂລມໃຫ້ປົບໜີດຽວນີ້ໂລດ ໄວໆ"* (ຂໍ້ 14)

## <u>ຊະຕາກັມຂອງອັບຊາໂລມ</u> 18: 5-15, 31-33

ຫລັງຈາກດາວິດປົບໜີໄປຕັ້ງກອງທັບໃຫ້ເຂັ້ມແຂງຂຶ້ນແລ້ວເພິ່ນກໍສັ່ງໂຈມຕີທະຫານຂອງອັບຊາໂລມຜູ້ເປັນລູກຊາຍ, ເພິ່ນໄດ້ອອກຄຳສັ່ງຕໍ່ພວກນາຍທະຫານວ່າ *"ເພື່ອເຫັນແກ່ເຮົາຢ່າໄດ້ທຳຮ້າຍຊາຍໜຸ່ມອັບຊາໂລມເດີ ທະຫານທຸກກົມກອງກໍໄດ້ຍິນຄຳສັ່ງທີ່ກະສັດດາວິດສັ່ງແກ່ພວກນາຍຂອງຕົນ"* (ຂໍ້ 5). ເມື່ອຮັບຄຳສັ່ງແລ້ວພວກທະຫານຂອງດາວິດກໍອອກໄປສຣົບກັບທະຫານຂອງອັບຊາໂລມແບບນອງເລືອດ ພວກທະຫານຂອງດາວິດໄດ້ຂ້າທະຫານຂອງອັບຊາໂລມເຖິງ 20,000ຄົນ (ຂໍ້ 7). ການສູຣົບໄດ້ລຸກລາມໄປທົ່ວປະເທດນັບວ່າເປັນການສູນເສັຽຄັ້ງຍິ່ງໃຫຍ່ຂອງອັບຊາໂລມ.

ຝ່າຍອັບຊາໂລມເຫັນພວກທະຫານຕົນເອງຕາຍເກືອບໝົດ ແລະຍັງເຫັນພວກທະຫານຂອງດາວິດກຳລັງມຸ້ງໜ້າເຂົ້າມາຢ່າງຫລວງຫລາຍເພິ່ນຈຶ່ງພ້າວຂີ່ລໍໜີ *"ອັບໂຊໂລມກຳລັງຂີ່ລໍແລະໃນຂະນະທີ່ລໍພວມແລ່ນຜ່ານເຂົ້າໄປໃນຕົ້ນໂອກຫົວອັບຊາໂລມເລີຍຄາຢູ່ກັບງ່າໄມ້ ລໍຈຶ່ງແລ່ນໜີໄປ ແລະປ່ອຍໃຫ້ອັບຊາໂລມແຂວນຢູ່ກາງອາກາດ"* (ຂໍ້ 9). ມີທະຫານຜູ້ນຶ່ງຂອງດາວິດມີໂອກາດຂ້າເພິ່ນແຕ່ທະຫານຜູ້ນັ້ນບໍ່ຂ້າເພາະລາວໄດ້ຍິນຄຳສັ່ງຂອງດາວິດວ່າ *ເພື່ອເຫັນແກ່ເຮົາຢ່າໄດ້ທຳຮ້າຍຊາຍໜຸ່ມອັບຊາໂລມເດີ,* ແຕ່ທະຫານຜູ້ນັ້ນໄປລາຍງານຕໍ່ໂຢອາບແລ້ວໂຢອາບຈຶ່ງຂ້າອັບຊາໂລມ ດ້ວຍຫອກສາມງ່າມຂອງລາວ. *"ໂຢອາບຈຶ່ງໃຊ້ຫອກສາມງ່າມແທງເຂົ້າທີ່ໜ້າອົກຂອງອັບຊາໂລມຂະນະທີ່ລາວແຂວນຢູ່ທີ່ຕົ້ນໂອກແລະຍັງມີຊີວິດຢູ່ ແລ້ວທະຫານຂອງໂຢອາບອີກສິບຄົນກໍເຂົ້າໄປຂ້າອັບຊາໂລມ"* (ຂໍ້ 14-15).

ຫລັງຈາກດາວິດຊະນະສົງຄາມແລ້ວພວກນາຍທະຫານຈຶ່ງເຂົ້າລາຍງານຕໍ່ດາວິດ ເພິ່ນຖາມວ່າ *ຊາຍໜຸ່ມອັບຊາໂລມພອດພັຍບໍ່* "(ຂໍ້ 32). ເຂົາຕອບເພິ່ນວ່າ "*ຜູ້ຂ້າຢາກໃຫ້ເຫດການທີ່ເກີດຂຶ້ນກັບອັບຊາໂລມນີ້ເກີດຂຶ້ນກັບສັດຕຣູຂອງທ່ານ ທຸກຄົນແລະກັບທຸກຄົນທີ່ກະບົດຕໍ່ທ່ານ ເມື່ອໄດ້ຍິນດັ່ງນັ້ນກະສັດກໍເຕັມດ້ວຍຄວາມທຸກໃຈ ເພິ່ນຍ່າງຂຶ້ນພ້ອມທັງຮ້ອງ ໄຫ້ແລະຈົ່ມວ່າ ໂທ! ອັບຊາໂລມລູກຊາຍຂອງພໍ່ ຖ້າເປັນໄປໄດ້ພໍ່ເອງຢາກຕາຍແທນລູກເສັຽ ອັບຊາໂລມລູກຊາຍຂອງພໍ່ເອີຍ!* "(ຂໍ້ 33).

**<u>ຄໍາຖາມ:</u>**

1. ເປັນຫຍັງຈຶ່ງມີເຫດການພໍ່ກັບລູກຂ້າກັນ, ອ້າຍຂົ່ມຂືນນ້ອງສາວ, ອ້າຍຂ້ານ້ອງ?

2. ອໍາໂນນຜູ້ເປັນອ້າຍຂົ່ມຂືນນາງຕາມາຜູ້ເປັນນ້ອງສາວຢ່າງໃດ?

3. ຫລັງຈາກຂົ່ມຂືນແລ້ວອໍາໂນນຜູ້ເປັນອ້າຍເຮັດແນວໃດກັບນາງຕາມາຜູ້ເປັນນ້ອງສາວຂອງຕົນ?

4. ນາງຕາມາຮ້ອງໄຫ້ໄປຫາໃຜ? ລາວຊ່ອຍນ້ອງຢ່າງໃດ?

5. ເປັນຫຍັງອັບຊາໂລມຈຶ່ງຄຽດໃຫ້ພໍ່ ແລະຊັງນ້ອງຊາຍອໍາໂນນຈົນເບິ່ງບໍ່ໄດ້?

6. ອັບຊາໂລມໄດ້ແກ້ແຄ້ນໃຫ້ນາງຕາມາຜູ້ເປັນນ້ອງສາວແນວໃດ?

7. ຫລັງຈາກອັບຊາໂລມຂ້ານ້ອງຊາຍອໍາໂນນແລ້ວລາວໜີໄປໃສ?

8. ດາວິດມີຄວາມໂສກເສົ້າຫລາຍປານໃດທີ່ເສັຽລູກຊາຍທັງສອງ ຄືຜູ້ນຶ່ງຕາຍ ອີກຜູ້ນຶ່ງໂຕນໜີ?

9. ເຮັດແນວໃດອັບຊາໂລມຈຶ່ງຄືນມາຍັງແຜ່ນດິນອິສຣາເອນ?

10. ຫລັງຈາກມາແລ້ວເພິ່ນມີແຜນການອັນໃດ?

11. ອັບຊາໂລມຕາຍແນວໃດ? ຜູ້ເປັນພໍ່ໂສກເສົ້າແນວໃດ?

12. ບົດຮຽນທັງໝົດນີ້ສອນຫຍັງເຮົາແດ່?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# <u>ບົດຮຽນເລື່ອງການຟື້ນພຣະຊົນ</u>
# <u>ເຊື່ອວ່າພຣະເຢຊູຟື້ນແທ້</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ລູກາ 24:1-12, 36-43
**<u>ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້:</u>** ລູກາ 24
**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ການປາກົດຕົວຫລັງຈາກຟື້ນແລ້ວເປັນກໍາລັງໃຈແກ່ຜູ້ເຊື່ອ
**<u>ຄໍາຖາມເພື່ອການສໍາຣວດ:</u>** ການຟື້ນພຣະຊົນຊວນໃຫ້ເຊື່ອຢ່າງໃດ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຮູ້ວ່າເຮົາເຊື່ອໃນການຟື້ນພຣະຊົນຢ່າງໃດ

**<u>ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## <u>ບົດນໍາ</u>

ວັນອີສເຕີເປັນວັນສໍາຄັນທີ່ສຸດສໍາລັບຊາວຄຣິສຕຽນດ້ວຍວ່າເປັນວັນຟື້ນພຣະຊົນ (ຄືນມາຈາກຕາຍ) ຂອງອົງພຣະເຢຊູຄຣິດ ຜູ້ຊົງເປັນພຣະເຈົ້າຂອງມະນຸດທັງປວງ. ຄຣິສຕຽນພາກັນສເລີມສລອງວັນອີສເຕີເປັນພິເສດ ເພາະພວກເຂົາເຈົ້າມີຄວາມຊົມຊື່ນຍິນດີ ແລະຍັງຫວັງໃຈວ່າພຣະອາຈານເປັນຢ່າງໃດສິດກໍຈະເປັນ ຢ່າງນັ້ນໃນວັນສຸດທ້າຍ. ບົດຮຽນເລື່ອງອີສເຕີໄດ້ບັນທຶກໄວ້ທັງສີ່ພຣະກິດຕິຄຸນ ແຕ່ລະຄົນຂຽນເລື່ອງດຽວກັນ ແຕ່ຄວາມລະອຽດນັ້ນຕ່າງກັນ ດັ່ງນັ້ນຈຶ່ງຂໍແນະນໍາໃຫ້ອ່ານທັງສີ່ແລ້ວທ່ານຈະໄດ້ໃຈຄວາມກວ້າງກວ່າ.

### <u>ເຊົ້າວັນໃຫມ່</u> 24:1-12

ໃຜໆກໍຮູ້ກັນດີແລ້ວວ່າພຣະເຢຊູຖືກຈັບໃນຄືນວັນພຣະຫັດ, ວັນສຸກພຣະອົງຊົງວາຍພຣະຊົນທີ່ໄມ້ກາງແຂນແລ້ວເອົາໄປບັນຈຸ (ຝັງ) ໄວ້ໃນອຸບໂມງ, ວັນເສົາເປັນວັນງຽບສງົບບໍ່ມີຂ່າວອັນໃດຂອງພຣະອົງ ແລະວັນອາທິດເປັນວັນຖ້ວນສາມທີ່ພຣະອົງກ່າວໄວ້ແລ້ວຈະເປັນຄືນມາ. ພວກຜູ້ຍິງກໍພາກັນໄປຍັງອຸບໂມງຝັງສົບຂອງພຣະອົງແຕ່ເຊົ້າມືດ ພວກເຂົາເຈົ້າຕັ້ງໃຈວ່າຈະເອົາເຄື່ອງຫອມໄປທົດສົງສົບຂອງພຣະອົງ. *"ແຕ່ຣຸ່ງເຊົ້າວັນຕົ້ນສັປດາ ຜູ້ຍິງເຫລົ່ານັ້ນໄດ້ເອົາເຄື່ອງຫອມທີ່ຈັດໄວ້ນັ້ນມາເຖິງອຸບໂມງ ແລະເຂົາໄດ້ເຫັນກ້ອນຫີນນັ້ນກິ້ງອອກຈາກປາກອຸບໂມງແລ້ວ ເມື່ອເຂົາເຂົ້າໄປທາງໃນແລ້ວກໍບໍ່ເຫັນສົບພຣະອົງ"* (ຂໍ້ 1-2). ພຣະເຢຊູໄດ້ບອກສາວົກຕັ້ງຫລາຍເທື່ອແລ້ວວ່າວັນຖ້ວນສາມພຣະອົງຈະຊົງຟື້ນພຣະຊົນ (ມັດທາຍ 16:21; 17:22-23; 20:19; ລູກາ 9:22; 18:33) ຍັງມີອີກຫລາຍບ່ອນທີ່ພຣະເຢຊູຊົງກ່າວກັບສາວົກ ແຕ່ເປັນຫຍັງບໍ່ເຫັນສາວົກຈັກຄົນຈື່ຄໍາເວົ້າຂອງພຣະອົງ ມີແຕ່ພວກຜູ້ຍິງເຫລົ່ານີ້ພາກັນໄປອຸບໂມງຫວັງໃຈວ່າຈະທົດສົງພຣະສົບຂອງພຣະອົງດ້ວຍນໍ້າຫອມ.

ພວກຜູ້ຍິງເຫລົ່ານີ້ຮູ້ຢູ່ແລ້ວວ່າອຸບໂມງນັ້ນຖືກອັດໂດຍຫີນແຜ່ນໃຫຍ່ ແລະມີທະຫານຍາມຢູ່ຂ້າງນອກຮັກສາຄວາມສງົບ. ມາຣະໂກບັນທຶກການສົນທະນາຂອງພວກຜູ້ຍິງມີໃຈຄວາມວ່າ *"ໃຜພໍຈະກິ້ງກ້ອນຫີນນັ້ນອອກຈາກປາກອຸບໂມງໃຫ້ເຮົາ"* (ມຣກ 14: 3). ແຕ່ພໍເມື່ອພວກຜູ້ຍິງມາຮອດກໍເຫັນກ້ອນຫີນນັ້ນກິ້ງອອກຈາກປາກຖໍ້າແລ້ວ ດັ່ງນັ້ນພວກຜູ້ຍິງກໍບໍ່ລໍຊ້າຟ້າວເຂົ້າໄປຢ່າງວ່ອງໄວ ແຕ່ກໍບໍ່ເຫັນສົບຂອງພຣະອົງ ແລ້ວ ກໍພາກັນສງົບສົນເທກັນ. ໃນຂະນະທີ່ເຂົາກໍາລັງສງົບສົນເທກັນຢູ່ນັ້ນກໍມີເທວະດາແປງຮ່າງເປັນຊາຍສອງ ຄົນຖາມເຂົາວ່າ *"ພວກນາງຊອກຄົນເປັນໃນໝູ່ຄົນຕາຍເຮັດຫຍັງ ພຣະອົງບໍ່ໄດ້ຢູ່ທີ່ນີ້ ແຕ່ຊົງບັນດານໃຫ້ເປັນ ຄືນມາ ແລ້ວຈົ່ງລະນຶກເຖິງຄໍາທີ່ພຣະອົງຊົງກ່າວກັບທ່ານທັງຫລາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນ ວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຄົນບາບຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລະໃນວັນຖ້ວນສາມກໍຈະຄືນມາ"* (ຂໍ້ 5-7).

ພວກຜູ້ຍິງພາກັນໄປອຸບໂມງດ້ວຍຄວາມເຊື່ອ, ດ້ວຍຄວາມສັດທາ ແລະດ້ວຍຄວາມຮັກອັນຍິ່ງໃຫຍ່ຂອງພວກເຂົາເຈົ້າ. ຍ້ອນຄວາມເຊື່ອ, ຄວາມສັດທາ ແລະຄວາມຮັກນີ້ເອງພາໃຫ້ພວກເຂົາເຈົ້າລຸກແຕ່ເຊົ້າມືດພ້ອມກັບນໍ້າຫອມ ເພື່ອຈະທາສົງພຣະສົບຂອງພຣະເຢຊູ ຍິ່ງໄປກວ່ານັ້ນພວກນາງກໍຮູ້ວ່າມີທະຫານຍາມທີ່ປາກອຸບໂມງຢ່າງໜາແໜ້ນ ບໍ່ຮູ້ວ່າພວກທະຫານນັ້ນຈະໃຫ້ເຂົ້າໄປໃນຖໍ້າຫລືບໍ່? ເຖິງແມ່ນພວກທະຫານຍາມໃຫ້ເຂົ້າໄປແລ້ວແມ່ນໃຜຈະເປັນຜູ້ກິ້ງກ້ອນຫີນທີ່ອັດປາກຖໍ້ານັ້ນອອກໃຫ້? ຍ້ອນຄວາມເຊື່ອ, ຄວາມສັດທາແລະຄວາມຮັກນີ້ພວກນາງຈຶ່ງຮູ້ຂ່າວການຟື້ນພຣະຊົນເປັນຄົນກຸ່ມທໍາອິດ.

ຫລັງຈາກພວກນາງໄດ້ຮັບຂ່າວຈາກເທວະດາທັງສອງແລ້ວກໍຈື່ຄໍາເວົ້າຂອງພຣະເຢຊູເວົ້າວ່າ ວັນຖ້ວນສາມພຣະອົງຈະເປັນຄືນມາຈາກຕາຍ ດັ່ງນັ້ນພວກນາງຈຶ່ງພາກັນຟ້າວແລ່ນກັບໄປບອກພວກສາວົກສິບເອັດຄົນ *"ແມ່ຍິງເຫລົ່ານັ້ນໄດ້ລະນຶກເຖິງຖ້ອຍຄໍາຂອງພຣະອົງ ແລະເມື່ອໄດ້ກັບຈາກອຸບໂມງແລ້ວ ເຂົາໄດ້ບອກເຫດການທັງປວງນັ້ນແກ່ພວກສິບເອັດຄົນນັ້ນ"* (ຂໍ້ 8). ໂຢຮັນບໍ່ໄດ້ບັນທຶກເທວະດາປາກົດຕົວ ແລະພວກຜູ້ຍິງຈຶ່ງສົງສັຍວ່າມີຄົນລັກເອົາພຣະສົບພຣະເຢຊູໄປ (ໂຢຮັນ 20: 2). ສ່ວນມັດທາຍໄດ້ບັນທຶກເລື່ອງອິສເຕີຫລາຍກວ່າຜູ້ອື່ນ.

<u>ຕາມທາງເອມາອູດ</u> 24:13-35

ໃນວັນດຽວກັນມີສອງຄົນທີ່ເຊື່ອພຣະເຢຊູກໍາລັງເດີນທາງໄກຈາກເຢຣູຊາເລັມໄປເມືອງເອມາອູດ, ທັງສອງຄົນນີ້ພຣະຄັມພີບອກວ່າເປັນສາວົກ ແຕ່ບໍ່ແມ່ນສາວົກສິບສອງຄົນ ຊຶ່ງຜູ້ທີ່ນຶ່ງຊື່ ກະໂລປາ (ຂໍ້ 18) ສ່ວນອີກຜູ້ນຶ່ງນັ້ນອີງຕາມນັກ ຄົ້ນຄວ້າແລ້ວຄາດວ່າແມ່ນເມັຽຂອງເພິ່ນເພາະພຣະຄັມພີເວົ້າວ່າ *"ໃຈຂອງເຮົາ"* (ຂໍ້ 32). ພຣະຄັມພີຍັ້ງຢືນອີກວ່າເປັນເມັຽຂອງກະໂລປາວ່າ *"ນາງມາຣີອາເມັຽຂອງກະໂລປາ"* (ໂຢຮັນ 19: 25). ເພາະວ່າທັງສອງຜົວເມັຽນີ້ໄດ້ຢືນເຝົ້າພຣະເຢຊູທີ່ໄມ້ກາງແຂນ. ສອງຜົວເມັຽລົມກັນເລື່ອງການຕາຍ ແລະການຟື້ນພຣະຊົນຢູ່ພຣະເຢຊູກໍຍ່າງໄປກັບເຂົາ ແຕ່ທັງສອງບໍ່ຮູ້ວ່າແມ່ນພຣະເຢຊູ *"ເມື່ອເຂົາກໍາລັງສົນທະນາ ໄຕ່ຖາມກັນຢູ່ພຣະເຢຊູກໍສະເດັດມາໃກ້ເຂົາແລ້ວສະເດັດຮ່ວມທາງກັບເຂົາໄປ ແຕ່ຕາຂອງເຂົາໄດ້ຖືກຊົງບັງໄວ້ເພື່ອບໍ່ໃຫ້ເຂົາຮູ້ຈັກພຣະອົງ"* (ຂໍ້ 16).ມາເຖິງຕອນນີ້ຂ້າພະເຈົ້າ ມັກນັກເທດຄົນນຶ່ງເວົ້າວ່າ "ຫາກພວກເຮົາເວົ້າເລື່ອງພຣະເຢຊູຍາມໃດ ພຣະອົງກໍຊົງຢູ່ກັບເຮົາຍາມນັ້ນ ຕົວຢ່າງທ່ານກະໂລປາ ທີ່ບໍ່ຄ່ອຍມີຊື່ໃນພຣະຄັມພີ ແຕ່ເມື່ອເພິ່ນເວົ້າເລື່ອງພຣະເຢຊູກັບເມັຽຂອງເພິ່ນພຣະເຢຊູກໍຊົງສະເດັດມາໃກ້ ແລະ ເດີນທາງໄປກັບເຂົາ". ດັ່ງນັ້ນພວກເຮົາເຊັ່ນດຽວກັນຫາກເຮົາສົນທະນາ, ຫລືຮຽນ ຫລືເວົ້າເລື່ອງພຣະເຢຊູໃຫ້ຜູ້ໃດຜູ້ນຶ່ງຟັງພຣະອົງກໍຈະຊົງຢູ່ກັບເຮົາແລະໄປກັບເຮົາເຊັ່ນດຽວກັນ.

ພຣະເຢຊູຮ່ວມເດີນທາງກັບສອງຜົວເມັຽໃນຖານະເປັນຄົນແປກໜ້າດ້ວຍວ່າທັງສອງບໍ່ຮູ້ຈັກພຣະອົງ ດັ່ງນັ້ນພຣະອົງຈຶ່ງຖາມເຂົາວ່າ *"ເມື່ອຕາມທາງພວກທ່ານໄຕ່ຖາມກັນເລື່ອງໃດ"* (ຂໍ້ 17). ແລ້ວເຂົາກໍເລົ່າເຫດການທັງໝົດໃຫ້ພຣະອົງຟັງພ້ອມທັງສະແດງເຖິງຄວາມເຊື່ອຂອງເຂົາໃຫ້ພຣະອົງຟັງວ່າ *"ແຕ່ເຮົາທັງຫລາຍຫວັງໃຈ ວ່າ ຈະແມ່ນທ່ານຜູ້ນີ້*

*ແຫລະທີ່ຈະໄຖ່ຊົນຊາດອິສຣາເອນໃຫ້ພົ້ນ* "(ຂໍ້ 21). ຄຳເວົ້ານີ້ເປັນຄຳເວົ້າຂອງຊາວຢິວທົ່ວໄປທີ່ມີຄວາມເຊື່ອແລະຫວັງໃຈລໍຖ້າພຣະເມຊີອາ (Messiah) ລົງມາໄຖ່ອິສຣາເອນໃຫ້ພົ້ນຈາກການກົດຂີ່ຂົ່ມເຫງຂອງຈັກກະພັດໂຣມ, ດ້ວຍເຫດນີ້ພຣະເຢຊູຈຶ່ງກ່າວກັບເຂົາວ່າ "*ໂອ ຄົນໂງ່, ຜູ້ມີໃຈເສີຍຊ້າໃນການເຊື່ອບັນດາຖ້ອຍຄຳຊຶ່ງພວກຜູ້ປະກາດພຣະທັມໄດ້ກ່າວໄວ້ນັ້ນ ຈຳເປັນທີ່ພຣະຄຣິດຈະຕ້ອງທົນທຸກທໍຣະມານຢ່າງນັ້ນ ແລ້ວເຂົ້າໄປໃນຣັສມີຂອງພຣະອົງບໍ່ແມ່ນຫລື ພຣະອົງຈຶ່ງຊົງອະທິບາຍພຣະຄັມພີທັງໝົດທີ່ ກ່ຽວກັບພຣະອົງໃຫ້ເຂົາຟັງ ຕັ້ງແຕ່ໂມເຊແລະບັນດາຜູ້ປະກາດພຣະທັມ* "(ຂໍ້ 25-27). ສອງຄົນນີ້ກໍບໍ່ແຕກ ຕ່າງກັບຄົນສມັຍນີ້ເທົ່າໃດ, ພາກັນເສີຍຊ້າໃນການເຊື່ອຟັງຜູ້ປະກາດພຣະທັມ ພຣະເຢຊູຮ້ອງຄົນພວກນີ້ ວ່າຄົນໂງ່.

ເມື່ອເດີນທາງມາເຖິງໝູ່ບ້ານແຫ່ງນຶ່ງສາວົກທັງສອງກໍເຊີນພຣະເຢຊູພັກເຊົາກັບເຂົາ, ໃນຂະນະທີ່ຮ່ວມຮັບທານອາຫານແລງວັນນັ້ນ ພຣະເຢຊູກໍຊົງເປີດເຜີຽໃຫ້ເຂົາຮູ້ວ່າຄົນແປກໜ້າຜູ້ນີ້ແມ່ນພຣະເຢຊູ ໂດຍການໂມທະນາພຣະຄຸນແລ້ວຊົງຫັກເຂົ້າຈີ່ແລະຫາຍຕົວໄປໃນພິບຕາ "*ເມື່ອນັ່ງໂຕະຮ່ວມເຂົາ ພຣະອົງຊົງຈັບເອົາ ເຂົ້າຈີ່ມາໂມທະນາພຣະຄຸນ ແລະຊົງຫັກຍື່ນໃຫ້ເຂົາ ແລະຕາຂອງເຂົາກໍຖືກຊົງເປີດອອກແລ້ວພຣະອົງກໍຊົງຫາຍໄປຈາກເຂົາ* "(ຂໍ້ 30). ການ ຫັກເຂົ້າຈີ່ເປັນສັນຍາລັກທີ່ພຣະອົງຊົງຫັກເຂົ້າຈີ່ຮ່ວມກັບພວກສາວົກສິບສອງຄົນຂອງພຣະອົງມີຄວາມໝາຍວ່າຮ່າງກາຍຂອງພຣະອົງໄດ້ແຕກຫັກ ເພື່ອຄົນທັງຫລາຍທີ່ ເຊື່ອໃນພຣະອົງ, ທັງສອງຈຶ່ງຊວາດຮູ້ເມື່ອຄຶງແລະເວົ້າກັນວ່າ "*ເມື່ອພຣະອົງຊົງເວົ້າ ກັບເຮົາຕາມທາງ ແລະໄດ້ຊົງອະທິບາຍພຣະຄັມພີໃຫ້ເຮົາຟັງນັ້ນ ໃຈຂອງເຮົາກໍຮ້ອນຮົນເໝືອນໄຟພາຍໃນເຮົາບໍ່ແມ່ນຫລື* "(ຂໍ້ 32). ວ່າແລ້ວເຂົາກໍພາກັນລຸກເດີນທາງໄປຍັງເຢຣູຊາເລັມແລະເວົ້າເຫດການທັງໝົດໃຫ້ພວກສາວົກສິບເອັດຄົນຟັງ.

<u>**ພຣະເຢຊູຄືນມາແທ້ງ**</u> (24:36-43)

ພວກສາວົກກຳລັງຟັງກະໂລປາແລະເມັຽເລົ່າເຣື່ອງອັສຈັນທີ່ເກີດຂຶ້ນກັບເຂົາຢູ່ນັ້ນ ພຣະເຢຊູກໍຊົງປາກົດກັບເຂົາ "*ເມື່ອທັງສອງກຳລັງເລົ່າເຫດການທັງປວງນັ້ນຢູ່ ອົງພຣະເຢຊູໄດ້ຢືນຢູ່ຖ້າມກາງເຂົາ ໂດຍຊົງກ່າວວ່າ ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ* "(ຂໍ້ 36). ເຮົາໄດ້ເວົ້າກັນເບື້ອງຕົ້ນແລ້ວວ່າ ຫາກພວກເຮົາເວົ້າເຣື່ອງພຣະເຢຊູຍາມໃດ ພຣະອົງກໍຊົງຢູ່ກັບເຮົາຍາມນັ້ນ, ເວລານີ້ກະໂລປາແລະເມັຽກຳລັງ ເວົ້າເຣື່ອງຂອງພຣະເຢຊູຄຣິດຢູ່ ພຣະອົງກໍຊົງມາຢືນຢູ່ຖ້າມກາງເຂົາຢ່າງອັສຈັນ. ພວກສາວົກກໍພາກັນຕື່ນຕົກໃຈໂດຍຄຶດວ່າແມ່ນຜີ ດ້ວຍວ່າພວກສາວົກເຫລົ່ານີ້ພາກັບປິດປະຕູຢູ່ຫ້ອງຊັ້ນເທິງແລະກໍບໍ່ມີໃຜເປີດປະຕູເຂົ້າອອກ. ພຣະເຢຊູຊົງ ກ່າວວ່າ *ດ້ວຍເຫດໃດຄວາມຄຶດສງົບສົນເທຈຶ່ງເກີດຂຶ້ນໃນໃຈຂອງພວກທ່ານ ຈົ່ງເບິ່ງມື ແລະຕີນເຮົາວ່າແມ່ນເຮົາເອງ ຈົ່ງຄຳເບິ່ງຕົວເຮົາ ເພາະວ່າຜີບໍ່ມີເນື້ອບໍ່ມີກະດູກເໝືອນກັບວ່າທ່ານເຫັນເຮົາ ມີຢູ່ນີ້* "(ຂໍ້ 38-39). ເຮົາເຫັນວ່າພຣະເຢຊູຊົງຮູ້ຈັກແມ່ນແຕ່ຄວາມຄຶດໃນໃຈຂອງເຂົາສົງສັຍວ່າແມ່ນພຣະອົງແທ້ບໍ່? ພຣະອົງຈຶ່ງບອກເຂົາອີກວ່າເບິ່ງຮອຍບາດແຜທີ່ຕີນມືຂອງພຣະອົງແຕ່ເຖິງປານນັ້ນພວກເຂົາກໍຍັງບໍ່ທັນຕາຍໃຈເຊື່ອວ່າແມ່ນພຣະເຢຊູ. ພຣະອົງຈຶ່ງກ່າວອີກວ່າ "*ທີ່ນີ້ພວກທ່ານມີຫຍັງກິນແດ່ຫລື?*". (ຂໍ້ 41). ການຟື້ນພຣະຊົນຂອງພຣະເຢຊູມີ 4 ຢ່າງທີ່ເຮົາເຫັນຫລັກຖານຢ່າງຊັດເຈນຄື; 1. ອຸບໂມງຝັງສົບທີ່ປິດດ້ວຍຫີນແຜ່ນໃຫຍ່ ພ້ອມທັງມີທະຫານຍາມຢ່າງແໜ້ນໜາ້ນັ້ນຖືກເປີດອອກ ແລະເມື່ອພວກຜູ້ຍິງເຂົ້າໄປກໍບໍ່ມີສົບຢູ່ທີ່ນັ້ນ. 2. ການຢັ້ງຢືນຂອງເທວະດາທັງສອງ 3. ຊົງປາກົດແກ່ສາວົກສອງຄົນເດີນທາງໄປເອມາອູດ ແລະປາກົດຕົວຕໍ່ສາວົກທັງ ສິບເອັດຄົນທີ່ຫ້ອງຊັ້ນເທິງ. 4. ການພິສູດຂອງໂທມາ "*ຈົ່ງເດ່ ນີ້ວມືຂອງທ່ານມາລູບເບິ່ງຝ່າມືຂອງເຮົາ ຈົ່ງເດ່ມືຂອງ ທ່ານມາໃສ່ຂ້າງຂອງເຮົາ* "(ໂຢຮັນ 20: 27). ໃນທີ່ສຸດພຣະອົງກໍຊົງສະເດັດຂຶ້ນສູ່ສວັນໃນກິຈການ 1: 9.

<u>**ຄຳຖາມ:**</u>

1. ຄຣິສຕຽນມີຄວາມຊົມຊື່ນຍິນດີໄປນະມັສການໃນວັນອາທິດເພາະເຂົາມີຄວາມຊົມຊື່ນຍິນດີທີ່ພຣະອົງຊົງຄືນມາໃນວັນອາທິດ, ທ່ານເດມີຄວາມຊົມຊື່ນຍິນດີໄປນະມັສການບໍ່?

2. ເປັນຫຍັງພວກຜູ້ຍິງຈຶ່ງໄປຍັງອຸບໂມງແຕ່ເຊົ້າມືດ  ສ່ວນພວກຜູ້ຊາຍບໍ່ໄປ?

3. ພວກຜູ້ຍິງໄປຮອດແລ້ວເຂົາເຫັນຫຍັງແດ່?

4. ສາວົກສອງຄົນກໍາລັງເດີນທາງໄປເອມາອູດເປັນຫຍັງຈຶ່ງລົມເຣື່ອງພຣະເຢຊູ? ແລະມີຫຍັງເກີດຂຶ້ນ?

5. ພຣະເຢຊູສໍາແດງການຟື້ນມາຈາກຕາຍໃຫ້ສາວົກຮູ້ຢ່າງໃດ?

6. ການພິສູດຂອງໂທມາທ່ານຄິດວ່າ ໂທມາເປັນຄົນແນວໃດ

7. ການຄືນມາຈາກຕາຍຂອງພຣະເຢຊູຊ່ອຍຊີວິດການເປັນຄຣິສຕຽນຂອງທ່ານຢ່າງໃດ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*